ຄູ່ມື ຫ້ອງຮັກ ອ່ານ



ດາຣາ ภัมละยา, สุภพันสา พูผาสุภ, สุละพี วิธะวิง

ສະມາຄົມ ຮ່ວມນ້ຳໃຈກັບເດັກນ້ອຍລາວ
Action with Lao Children

ຢ່ານ
ຫ້ອງ ❤ ອ່ານ

ດາຣາ ภัมละยา, สุภพันสา พูผาสุภ, สุละพี วิธะวิง

ເລື່ອງ: ຄູ່ມືຫ້ອງຮັກອ່ານ

ແຕ່ງໂດຍ: ດາຣາ ກັນລະຍາ
ສຸກພັນສາ ພູຜາສຸກ
ສຸລະພີ ວິຣະວົງ

ບັນນາທິການ: ສຳນັກພິມດອກເກດ

ຮູບປະກອບ: ແສງສຸລິ, ສະມິຕາ, ວິຣະວົງ, ALC

ອອກແບບຈັດໜ້າ: ມະໂນລັກ ຄຳອ່ອນ

ຈັດພິມໂດຍ: ສຳນັກພິມ ດອກເກດ

ຮ່ວມກັບ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ(ALC)

ອຸປະຖຳໂດຍ: JICA ແລະ JAPAN Official Development Assistance

ທະບຽນພິມເລກທີ: 040 ພຈ26012012

ພິມຄັ້ງທີ 1: 2012

ພິມທີ່: ລາວ ຢູນິພຣິ້ນ

ຈຳນວນພິມ: 2,500 ຫົວ

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ດາຣາ ກັນຣະຍາ

ຄູ່ມືຫ້ອງ(ຮັກ)ອ່ານ / ດາຣາ ກັນຣະຍາ, ສຸກພັນສາ ພູຜາສຸກ, ສຸລະພີ ວິຣະວົງ, ພາບປະກອບ: ແສງສຸລິ ກັດຕິຍະສັກ [ແລະຄົນອື່ນໆ].

-- ວຽງຈັນ : ສຳນັກພິມດອກເກດ ແລະ ALC, 2011.

101 ໜ້າ : ພາບປະກອບ ; 21 ຊມ

1. I. ດາຣາ ກັນລະຍາ, ສຸກພັນສາ ພູຜາສຸກ, ສຸລະພີ ວິລະວົງ. II. ຊື່ເລື່ອງ

025.5601--dc21
ISBN 978-9932-07-021-3

ສາລະບານ

ພາກທີ 1 ກ່ອນຈະເປັນຫ້ອງຮັກອ່ານ

ບົດທີ 1 ເປັນຫຍັງຈຶ່ງຕ້ອງອ່ານ 7

ບົດທີ 2 ກ່ອນຈະເປັນຫ້ອງຮັກອ່ານ 13

ບົດທີ 3 ການຂຶ້ນທະບຽນປຶ້ມ 27

ບົດທີ 4 ການບໍລິການ ການອ່ານ 41

ບົດທີ 5 ສ້ອມແປງປຶ້ມ 57

ພາກທີ 2 ກິດຈະກຳສົ່ງເສີມການອ່ານ

ບົດທີ 6 ປຶ້ມອ່ານເຮັດຫຍັງໄດ້ແດ່ 65

ບົດທີ 7 ການນຳສະເໜີປຶ້ມ 73

ບົດທີ 8 ການນຳພາອ່ານ 81

ບົດທີ 9 ເລົ່ານິທານປາກເປົ່າ 89

ບົດທີ 10 ເລົ່ານິທານປະກອບປຶ້ມ 97

ບົດທີ 11 ລະຄອນເຈ້ຍ 107

ບົດທີ 12 ລະຄອນສົ່ງເສີມການອ່ານ 117

ບົດທີ 13 ເກມຫຼິ້ນສົ່ງເສີມການອ່ານ 129

ບົດທີ 14 ເພັ່ງປະກອບທ່າທາງ 139

ຮູບ: ແສງສຸລິ ກັດຕິຍະສັກ








ພາກທີ 1

ກ່ອນຈະເປັນ ຫ້ອງຮັກອ່ານ



ບົດທີ 1

ເປັນຫຍັງຈຶ່ງຕ້ອງອ່ານ

ຊະຍາທີ່ເລິກເຊິ່ງຂຶ້ນ, ມີຢາປົວພະຍາດທີ່ດີຂຶ້ນ, ມີວັນນະຄະດີທີ່ນ່ວນອອນຊອນຂຶ້ນ ແລະເຮັດໃຫ້ໂລກເປັນດັ່ງທຸກມື້ນີ້.

ໂຕອັກສອນແລະການອ່ານ ເຮັດໃຫ້ເຮົາເອົາຊະນະການລະເວລາໄດ້. ວິທີທີ່ມັກໃຊ້ເພື່ອຊອກຫາເມືອງບູຮານ ແມ່ນອີງໃສ່ບົດບັນທຶກຫຼືວັນນະຄະດີທີ່ກ່າວເຖິງສະຖານທີ່ນັ້ນ. ການທີ່ຈະຮູ້ວ່າ ເມືອງ, ທາດ, ວັງ ຫຼື ວັດບູຮານ ມີລັກສະນະແນວໃດ ສ່ວນໃຫຍ່ກໍອາໄສການອ້າງອີງໃສ່ ສິ່ງທີ່ຄົນບູຮານ ບັນທຶກໄວ້ ເປັນຕົວອັກສອນ ດັ່ງທີ່ບັນດານັກປາດອາຈານໃນລາວລ້ວນເວົ້າໄປໃນແລວດຽວກັນວ່າ ຖ້າຢາກຮູ້ວ່າ ເມືອງວຽງຈັນຮຸ່ງເຮືອງພໍພຽງໃດ ແມ່ນໃຫ້ອ່ານ "ສັງສິນໄຊ".

II. ການອ່ານໃນຊີວິດປະຈຳວັນ

ໃນຊີວິດແທ້ໆນັ້ນ ເຮົາຂາດການອ່ານບໍ່ໄດ້ດອກ.

- ຍາມໄປຊື້ເຄື່ອງ ເຮົາອ່ານຊອກຫາຍີ່ຫໍ້ທີ່ຢາກໄດ້ ອ່ານວັນໝົດອາຍຸ ແລະ ຄຳເຕືອນຕ່າງໆ.
- ເວລາເດີນທາງ ເຮົາອ່ານປ້າຍບອກຊື່ສະຖານທີ່, ປ້າຍບອກທາງ, ປ້າຍຈາລະຈອນ, ບາງຄົນຍັງມັກອ່ານເລກປ້າຍລົດ ຫຼື ຍີ່ຫໍ້ລົດຂອງຄົນອື່ນ.
- ຂະໜາດກິດຈະກຳ ທີ່ເບິ່ງຄືຈະກົງກັນຂ້າມກັບການອ່ານທີ່ສຸດ ເຊັ່ນ ເບິ່ງໂທລະພາບ ກໍຍັງມີໂຕອັກສອນແລະສັນຍະລັກຕ່າງໆ ຂຶ້ນມາໃຫ້ອ່ານຕະຫຼອດ ທັງຕາຕະລາງລາຍການ, ຂ່າວ, ແຈ້ງການ, ໂຕເລກສະຖິຕິຕ່າງໆ.
- ເວລາໄປສຳນັກງານຫ້ອງການຕ່າງໆ ເຮົາກໍຕ້ອງອ່ານປ້າຍຢູ່ໜ້າຫ້ອງຈຶ່ງຮູ້ວ່າ ແມ່ນຫ້ອງທີ່ຕ້ອງການເຂົ້າໄປພົວພັນຫຼືບໍ່.
- ແຮ່ງເຕັກໂນໂລຊີສູງເທົ່າໃດ ການອ່ານແຮ່ງຈຳເປັນກັບຊີວິດປະຈຳວັນເທົ່ານັ້ນ ເຄື່ອງໃຊ້ໄຟຟ້າທຸກຊະນິດລ້ວນມີ ຄຳເຕືອນແລະຄຳແນະນຳຕິດໄວ້ ແລະເຮົາກໍຕ້ອງອ່ານ ເພື່ອຈະໃຊ້ເຄື່ອງເຫຼົ່ານັ້ນຢ່າງປອດໄພ ບໍ່ໃຫ້ເຄື່ອງໃຊ້ໄຟຟ້າ ກາຍເປັນເຄື່ອງປະຫານໄຟຟ້າ.

- ຖ້າທ່ານຍັງບໍ່ຮູ້ຈະເຮັດຫຍັງໃນມື້ພັກ ລອງໄປຫ້ອງສະໝຸດ ຫຼື ຮ້ານຂາຍປຶ້ມ ໃຫ້ຄົ້ນໃນນັ້ນແນະນຳປຶ້ມມ່ວນໆຈັກຫົວໃຫ້ ເຊື່ອວ່າການອ່ານກໍແມ່ນທາງເລືອກທີ່ດີ ແລະປະຢັດທີ່ສຸດ ສຳລັບການພັກຜ່ອນ.

III. ການອ່ານກັບການສຶກສາ

ວິຊາຫັດອ່ານເປັນໜຶ່ງໃນວິຊາບັງຄັບ ທີ່ຕ້ອງຮຽນແລະສອບເສັງ ຕະຫຼອດຊັ້ນປະຖົມ.

ຫ້ອງສະໝຸດເປັນສິ່ງທີ່ຕ້ອງມີ ຖ້າໂຮງຮຽນໃດຢາກໄດ້ຊື່ວ່າເປັນໂຮງຮຽນຄຸນນະພາບ.

ໜ້າເສຍດາຍ ທີ່ເມື່ອຮຽນສູງຂຶ້ນໄປ ການອ່ານຖືກລືມ ຍ້ອນຖືກແທນດ້ວຍຄຳວ່າ "ເລົ່າ" ທັງທີ່ໃນຄວາມເປັນຈິງແລ້ວ ການເລົ່າບໍ່ມີໃນແຜນການສຶກສາ ແຕ່ໃນພາກປະຕິບັດ ຜັດເກີດຄວາມເຂົ້າໃຈຜິດວ່າ "ການອ່ານເພື່ອເກັບກຳຂໍ້ມູນ" ແມ່ນການ "ເລົ່າ". ອາດເປັນຍ້ອນເຫດນີ້ ໄທເຮົາເຈົ້າຂ້ອຍສ່ວນຫຼາຍ ຈຶ່ງເຫັນການອ່ານເປັນດັ່ງແມ່ພະຍາດທີ່ທຳລາຍລະບົບປະສາດ ເຮັດໃຫ້ເຈັບຫົວ ປວດໂຕ ຫຼືເຖິງຂັ້ນປວດຮາກ ຫຼືບໍ່ ກໍເປັນຢານອນຫຼັບຊະນິດພິເສດ.

ນີ້ຈຶ່ງເປັນສິ່ງທ້າທາຍຂອງນັກການສຶກສາ ຕັ້ງແຕ່ລະດັບຜູ້ວາງນະໂຍບາຍ, ຜູ້ສ້າງຫຼັກສູດ ຮອດຜູ້ປະຕິບັດ ທີ່ຕ້ອງສ້າງຄວາມເຂົ້າໃຈທີ່ຖືກຕ້ອງລະຫວ່າງການອ່ານກັບຜູຮຽນ.

ການອ່ານແມ່ນໜຶ່ງໃນທັກສະທີ່ຈຳເປັນທີ່ສຸດ ທີ່ການສຶກສາຄວນສ້າງໃຫ້ຜູ່ຮຽນ ການສຶກສາຮ່ຳຮຽນ, ວຽກງານ ແລະ ການດຳລົງຊີວິດຂອງບຸກຄົນຈະປະສົບຜົນສຳເລັດຫຼືບໍ່ນັ້ນ ຂຶ້ນກັບວ່າ ທັກສະການອ່ານຂອງບຸກຄົນນັ້ນ ດີຊ່ຳໃດ.

ການສຶກສາຮ່ຳຮຽນໃນປັດຈຸບັນ ຮຽກຮ້ອງໃຫ້ມີການໃຊ້ເຄື່ອງມືທັນສະໄໝ ດ້ວຍເຫດຜົນຮ້ອຍພັນ ຈົນການອ່ານອາດຖືກລືມເລືອນໄປ ເປັນເລື່ອງທຳມະດາ, ແຕ່ອຸປະກອນເຫຼົ່ານັ້ນລ້ວນຕ້ອງໃຊ້ພະລັງງານ ແລະ ມີຂໍ້ຈຳກັດຫຼວງຫຼາຍ ເອົ້າງ່າຍໆວ່າ ໃນປະເທດລາວ ເຊິ່ງມີລະດູຝົນຍາວຮອດຫ້າເດືອນ


ຄືຈະບໍ່ມີໃຜກ້າເປີດຄອມພິວເຕ້ໃນມື້ຝົນຕົກຟ້າຮ້ອງ ມື້ນັ້ນກໍຕ້ອງໄດ້ມາເພິ່ງປຶ້ມອ່ານຄືເກົ່າ.


ຖ້າທຽບການອ່ານຄືພໍ່ແມ່ ແລະ ການສຶກສາຄືລູກ, ລູກຜູ່ນີ້ຄືຈະແມ່ນວ່າພວມຫາເງິນໄດ້ ຢາກມີຊີວິດສ່ວນໂຕ ເລີຍອອກຫ່າງຈາກພໍ່ແມ່, ແຕ່ເຊື່ອເຖາະ ສຸດທ້າຍ ຈັ່ງໃດກໍບໍ່ມີ້ມມືພໍ່ແມ່ ຄືເກົ່າ.


ບົດທີ 2

ກ່ອນຈະເປັນຫ້ອງຮັກອ່ານ

ຮູບ: ສະມິຕາ ໝື່ນອາດອາສາ







I. ຈິນຕະນາການ

ຫ້ອງ ສະໝຸດ, ຫ້ອງອ່ານ, ຫຼື ຫ້ອງຮັກອ່ານ, ທ່ານຄຶດແນວໃດກັບສາມຄຳນີ້? ແມນແບບນີ້ບໍ?

- "ຫ້ອງອ່ານ ມີກະດີ ຈັ່ງຊີຄິບເງື່ອນໄຂ ເປັນໂຮງຮຽນຄຸນນະພາບ"
- "ຕື່ມວຽກຕື່ມງານ ອັນໃດງານຫັ້ນກະ ຫາແຕ່ແນວເວົ້າໃຫ້ ຕິຫັ້ນຕິໜີ ລອງມາເຮັດເອງເບິ່ງດຸ !"
- "ການຈະເປັນຫ້ອງສະໝຸດທີ່ສົມບູນໄດ້ນັ້ນ ອັນໜຶ່ງກະຕ້ອງເປັນຫ້ອງທີ່ກວ້າງຂວາງ ສະດວກສະບາຍ ສະຖານທີ່ເໝາະສົມ ມີການປະກອບອຸປະກອນຢ່າງເປັນລະບົບຄົບຊຸດ ເປັນຕົ້ນວ່າ ປຶ້ມອ່ານ, ຕູ້ເກັບມ້ຽນທີ່ຖືກຕ້ອງຕາມຫຼັກການ, ໂຕະຕັ່ງ ສຳລັບນັ່ງອ່ານ, ເຄື່ອງມືຮັບໃຊ້ທີ່ທັນສະໄໝ ເປັນຕົ້ນວ່າ ຄອມພິວເຕີ້ ຈັ່ງຊີ້ເໝາະ, ລະອັນສຳຄັນກໍແມ່ນວ່າ ຕ້ອງມີພະນັກງານວິຊາການທີ່ມີລະດັບວິຊາສະເພາະ ດ້ານຫໍສະໝຸດປະຈຳການຢ່າງເປັນປົກກະຕິ ໝາຍຄວາມວ່າ ຮັບຜິດຊອບໂດຍສະເພາະ ຍ້ອນວ່າວຽກງານນີ້ ກະເປັນວຽກທີ່ໜັກໜ່ວງ ແຕ່ກໍເປັນເງື່ອນໄຂອັນໜຶ່ງ ເພື່ອໃຫ້ການສຶກສາຂອງບ້ານເຮົາ ກ້າວຂຶ້ນທັນກັບສາກົນໄດ້."
- "ມີເຄື່ອງຫຍັງມາຫວາ? ເອົາໄປໄວ້ຢູ່ຫ້ອງສະໝຸດພຸ້ນກ່ອນໂລດ ບໍ່ຊ່ ມີໃຜເຂົ້າໄປດອກ ອັນຫ້ອງນັ້ນນະ..."
- "ALC ມີຊື່ສະເພາະ ຂອງຫ້ອງສະໝຸດທີ່ພວກເຮົາຊ່ວຍຈັດຕັ້ງວ່າ ຫ້ອງ

ຮັກອ່ານ ກໍເພື່ອຢາກໃຫ້ຫ້ອງສະໝຸດນັ້ນ ເປັນບ່ອນສ້າງໃຫ້ເດັກຮັກການອ່ານ ເຊິ່ງຈະເປັນພື້ນຖານອັນສຳຄັນ ໃຫ້ເຂົາເຈົ້າເຕີບໃຫຍ່ຂຶ້ນຢ່າງມີ ຄຸນນະພາບ."

- "ຫ້ອງສະໝຸດຫວາ! ກະດີລະເດ່ ມີບ່ອນໃຫ້ເດັກນ້ອຍໄດ້ໄປອ່ານປຶ້ມ ໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ ຫ່າງໄກຢາເສບຕິດ ສ່ວນຜູ່ໃຫຍ່ເຮົານີ ກາຍຍາມເຂົ້າຫ້ອງສະໝຸດແລ້ວ ອາຍເດັກນ້ອຍເຂົາ ອ່ານໄປໜ້ອຍດຽວກະຢາກນອນແລ້ວ ໄປກິນເບຽດີກວ່າ."

- ທ່ານເດ ຄິດຈັ່ງໃດກັບ ຫ້ອງສະໝຸດ ຫ້ອງອ່ານ ຫຼື ຫ້ອງຮັກອ່ານ..?
- ບາດນີ້ ໂຮງຮຽນໃດຢາກໄດ້ຫ້ອງສະໝຸດແດ່ ຊີ້ມືຂຶ້ນ..!

II. ຢາກໄດ້ຫ້ອງອ່ານໃສ່ໂຮງຮຽນ ເຮັດແນວໃດ?

2.1 ຂໍ


ປັດຈຸບັນ (2012) ໃນປະເທດລາວ ມີຫຼາຍກວ່າ 50 ອົງການຈັດຕັ້ງ (ເກືອບທັງໝົດແມ່ນສາກົນ) ທີ່ໃຫ້ຄວາມຊ່ວຍເຫຼືອທາງການສຶກສາ ແລະ ທ່ານສາມາດຂໍທຶນສຳລັບຫ້ອງອ່ານໃນໂຮງຮຽນໄດ້. ສ່ວນລາຍລະອຽດວ່າ ມີອົງການໃດແດ່ ທີ່ເຮັດວຽກ ຫຼື ໃຫ້ຄວາມຊ່ວຍເຫຼືອໃນເຂດແຂວງທີ່ທ່ານຢູ່ ສາມາດສອບຖາມໄດ້ນຳ ຫ້ອງການສຶກສາທິການແລະ ກິລາ ເມືອງ ແລະ ພະແນກສຶກສາທິການ ແລະ ກິລາ ແຂວງ ຂອງທ່ານ.

ແຕ່ລະອົງການ ຈະມີເງື່ອນໄຂໃນການໃຫ້ຄວາມຊ່ວຍເຫຼືອ ແຕກຕ່າງກັນ ແຕ່ກໍພໍສັງຮວມໄດ້ດັ່ງນີ້:

- ປຸກຫ້ອງໃຫ້: ເຖິງຈະເວົ້າວ່າປຸກຫ້ອງໃຫ້ ແຕ່ທຸກໆອົງການ ລ້ວນມີເງື່ອນໄຂວ່າ ຕ້ອງມີການປະກອບສ່ວນຂອງປະຊາຊົນ ໜ້ອຍຫຼາຍວ່າກັນອີກເທື່ອໜຶ່ງ. ອົງການທີ່ຊ່ວຍເຫຼືອແບບນີ້ ມີບໍ່ຫຼາຍ ແລະມີພື້ນທີ່ເຮັດວຽກສະເພາະ ຂອງໃຜມັນ ໂຮງຮຽນໃດຢູ່ໃນພື້ນທີ່ນັ້ນ ກໍໂຊກດີໄປ.
- ໂຮງຮຽນຕ້ອງມີຫ້ອງຫວ່າງ: ເງື່ອນໄຂແບບນີ້ ກໍແມ່ນຮູບແບບໜຶ່ງ

ໃນການມີສ່ວນຮ່ວມຂອງທ້ອງຖິ່ນ, ອົງການຈະຕອບສະໜອງທຶນຈຳນວນໜຶ່ງ ເພື່ອໃຊ້ສ້ອມແປງຫ້ອງ, ແຕ່ຄວາມຊ່ວຍເຫຼືອລັກສະນະນີ້ ມັກຈະໄດ້ປຶ້ມຫຼາຍ ທັງອຸປະກອນ ແລະການຝຶກອົບແບບເຂັ້ມຂຸ້ນ.

- ເອົາປຶ້ມ ແລະ ເຝິກອົບຮົມໃຫ້: ມີຊື່ທີ່ທ່ານຄິຈະຄຸ້ນຫູ ເຊັ່ນ: ຕູ້ປຶ້ມ, ຖົງປຶ້ມ, ແກັດປຶ້ມ, ມຸມອ່ານ... ເປັນຕົ້ນ. ຕາມທີ່ໄດ້ລົມກັບຄະນະໂຄງການສົ່ງເສີມການອ່ານແຫ່ງຊາດ ຫວ່າງກ່ອນຈະຂຽນປຶ້ມນີ້ບໍ່ດົນ ເຂົ້າໃຈວ່າເກືອບທຸກໆໂຮງຮຽນປະຖົມ ໃນ ສ.ປ.ປ ລາວ ໄດ້ຮັບການຊ່ວຍເຫຼືອລັກສະນະນີ້ມາແລ້ວ. ການຊ່ວຍເຫຼືອແບບນີ້ ຮຽກຮ້ອງໃຫ້ທາງທ້ອງຖິ່ນຕ້ອງຊອກເງື່ອນໄຂເພື່ອພັດທະນາຕໍ່ຍອດ ໃຫ້ເກີດເປັນຫ້ອງສະໝຸດ ຫຼື ຫ້ອງອ່ານ ຕາມຄວາມອາດສາມາດຂອງໃຜລາວ.
- ແນວໃດກໍຕາມ ກ່ອນຈະກາຍມາເປັນ ຫ້ອງ(ຮັກ)ອ່ານ ນັ້ນ ໂຮງຮຽນຂອງທ່ານ ອາດໄດ້ຮັບການຊ່ວຍເຫຼືອ ຈາກຫຼາຍອົງການ ແລະອາດໄດ້2ໃນ3ຮູບແບບການຊ່ວຍເຫຼືອຂ້າງເທິງ. ເປັນສິ່ງຈຳເປັນທີ່ທ່ານຕ້ອງສຶກສາເງື່ອນໄຂຂອງແຕ່ລະອົງການ ໂດຍໂອ້ລົມກັບຜູ້ປະສານງານອົງການ (ບາງເທື່ອແມ່ນຄູສຶກສານິເທດ) ໃຫ້ຈະແຈ້ງ ເພື່ອຫຼີກລ່ຽງການເຮັດຜິດເງື່ອນໄຂຂອງອົງການຊ່ວຍເຫຼືອ ເຊິ່ງຈະບໍ່ເປັນຜົນດີຕໍ່ໂຮງຮຽນໃນໄລຍະຍາວ.



2.2 ເຮັດເອງ

ຢ່າຟ້າວເວົ້າ ຫຼື ຄິດວ່າ ເປັນໄປບໍ່ໄດ້. ໃນພາກປະຕິບັດໂຕຈິງ ຖ້າທ່ານໄດ້ຮັບການຊ່ວຍເຫຼືອ ແບບເອົາປຶ້ມແລະເຝິກອົບຮົມໃຫ້ ການນັ້ນ ໄປເຮັດຕໍ່ເອງ ກໍເທົ່າກັບວ່າ ທ່ານໄດ້ສ້າງ ຫ້ອງ(ຮັກ)ອ່ານເອງຢູ່ແລ້ວ. ທ່ານ ສາມາດລະດົມທຶນໃນຫ້ອງຖິ່ນ ເພື່ອຊື້ອຸປະກອນ, ຕູ້, ສ້າງແລະສ້ອມແປງ ຫ້ອງ... ສ່ວນປຶ້ມອ່ານ ສາມາດຂໍນຳອົງການຕ່າງໆໄດ້ ທັງຊື້ປຶ້ມທີ່ອົງການບໍ່ ສາມາດຕອບສະໜອງໃຫ້ເຂົ້າຕື່ມ. ແບບນີ້ ເປັນອິດສະຫຼະ ບໍ່ຢ້ານຜິດໃຈໃຜ ແລະ ໜ້າພາກພູມໃຈກວ່າຫຼາຍ.



2.3 ລະບົບສູນສົ່ງເສີມການອ່ານ


ບໍ່ວ່າຫ້ອງຮັກອ່ານຂອງທ່ານ ຈະມາຈາກແບບ 2.1 ຫຼື 2.2 ຫຼື ຈະເລີ່ມ ຕົ້ນເຮັດເອງແບບ 2.3 ລະບົບສູນສົ່ງເສີມການອ່ານ ກໍສາມາດຕອບສະໜອງ ເງື່ອນໄຂການສ້າງ ແລະ ດຳເນີນງານຫ້ອງ(ຮັກ)ອ່ານຢ່າງຍືນຍົງໄດ້.

ສູນສົ່ງເສີມການອ່ານເປັນກົນໄກການຮ່ວມມື ລະຫວ່າງສະມາຄົມ

ຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC) ກັບພະແນກສຶກສາທິການ ແລະ ກິລາ ແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາ ເມືອງ ທີ່ມີຄວາມສົນໃຈ ເພື່ອ ສ້າງເງື່ອນໄຂການດຳເນີນວຽກງານ ຫ້ອງ(ຮັກ)ອ່ານ ຢ່າງເຂັ້ມແຂງແລະຍືນຍົງ ໃນທ້ອງຖິ່ນ. ປັດຈຸບັນ ມີສູນສົ່ງເສີມການອ່ານແລ້ວ 4 ແຫ່ງ ຄື: ຫ້ອງການສະ ມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC) ນະຄອນຫຼວງວຽງຈັນ, ພະແນກ ສຶກສາທິການ ແລະ ກິລາ ແຂວງວຽງຈັນ, ສູນສຶກສານິເທດ ເມືອງຜາອຸດົມ ແຂວງບໍ່ແກ້ວ ແລະ ສູນສຶກສານິເທດ ເມືອງໂພນທອງ ແຂວງຈຳປາສັກ. ຄາດວ່າຈະຈັດຕັ້ງ ຕື່ມອີກ ສາມແຫ່ງ ພາຍໃນປີ 2013.

ສຳລັບບ່ອນທີ່ໄດ້ຮັບການຊ່ວຍເຫຼືອແລ້ວ ສູນສົ່ງເສີມການອ່ານ ຈະ ເປັນແຫຼ່ງຕອບສະໜອງ ຊັບພະຍາກອນ ເຊັ່ນປຶ້ມອ່ານ, ອຸປະກອນສ້ອມແປງ ປຶ້ມ ແລະ ເຄື່ອງມືຮັບໃຊ້ຕ່າງໆ ຕາມອັດຕາທີ່ທາງສູນວາງອອກ.

ສຳລັບໂຮງຮຽນທີ່ບໍ່ທັນໄດ້ຮັບການຊ່ວຍເຫຼືອດ້ານນີ້ ສູນສົ່ງເສີມ ການອ່ານ ສາມາດເປັນຜູ້ປະສານງານ ສົ່ງຂໍ້ມູນ ແລະ ຂໍການຊ່ວຍເຫຼືອຈາກ ອົງການຜູ້ໃຫ້ທຶນ ແລະສາມາດຕອບສະໜອງປຶ້ມອ່ານພ້ອມອຸປະກອນຮັບໃຊ້ ຫ້ອງສະໝຸດ ໄດ້ຈຳນວນໜຶ່ງ ທັງສອນວິທີນຳໃຊ້ປຶ້ມ ແລະ ລະບົບຫ້ອງສະໝຸດ ພື້ນຖານໃຫ້ນຳ. ເມື່ອມີປຶ້ມແລ້ວ ພຽງແຕ່ໂຮງຮຽນປະຕິບັດລະບົບການອ່ານ ແບບທົ່ວໄປຄື ໃຫ້ນັກຮຽນໄດ້ຢືມປຶ້ມຫຼາຍໆ ກໍຈະໄດ້ບັດຢືມທີ່ໃຊ້ຈົນເຕັມ ມາປ່ຽນເອົາປຶ້ມ ແລະອຸປະກອນອື່ນໆ ກັບທາງສູນ. ເທົ່ານີ້ ໂຮງຮຽນຂອງທ່ານ ກໍສາມາດສ້າງຫ້ອງ(ຮັກ)ອ່ານ ທີ່ຍືນຍົງ ດ້ວຍໂຕເອງແລ້ວ.



III. ກໍລະນີ(ຕ້ອງ)ສຶກສາ

3.1 ຫ້ອງຮັກອ່ານ 185 ມັດທະຍົມສົມບູນເມືອງນານ ແຂວງ ຫຼວງພະບາງ.

ວຸງກາຫ້ອງອ່ານ ເລື່ອງງ່າຍໆ

ຈາກອາສາສະໝັກ ຊ່ອຍວຸງກຫ້ອງສະໝຸດ ໃນໂຮງຮຽນສ້າງຄູຫຼວງ ພະບາງ ເມື່ອຈົບອອກມາ ຄູເຂັມພອນ ສຸດທິພອນ ໄດ້ມາປະຈຳການຢູ່ ມ.ສ ເມືອງນານ ໂຮງຮຽນເກົ່າທີ່ບ້ານເກີດຂອງເພິ່ນເອງ. ເພິ່ນເລົ່າໃຫ້ຟັງວ່າ "ການໄດ້ເຫັນ ໄດ້ໃກ້ຊິດກັບຫ້ອງສະໝຸດຂອງໂຮງຮຽນສ້າງຄູນັ້ນ ເຮັດໃຫ້ມີ ແນວຄິດປຽບທຽບ ການພັດທະນາການສຶກສາ ລະຫວ່າງຕົວເມືອງກັບຊົນ ນະບົດ ເຊິ່ງມັນຫຼຸດໂຕນກັນຫຼາຍ ແລ້ວຄິດຢາກໄດ້ຫ້ອງອ່ານ ໄປໃຫ້ໂຮງຮຽນ ທີ່ຕົນເຄີຍຮຽນ"

ຄູເຂັມພອນເລົ່າໃຫ້ຟັງຕື່ມວ່າ "ໄດ້ຫາຂໍ້ມູນເລື່ອງອົງການທີ່ຊ່ອຍ ເລື່ອງຫ້ອງສະໝຸດ ແລະ ຂັ້ນຕອນຂໍການຊ່ອຍເຫຼືອ ຕັ້ງແຕ່ຕອນຍັງຮຽນຢູ່ສ້າງ ຄູພຸ້ນ ເມື່ອມາປະຈຳການ ກໍເລີ່ມດຳເນີນການທັນທີ ຂໍໄປຫຼາຍບ່ອນຫຼາຍອົງ



ການ, ມິດໄປເຫີງ ໃຈກ້ຍ້ານບໍ່ໄດ້ ຈົນສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ເພິ່ນໂທມາຫາ ເພື່ອຂໍຂໍ້ມູນກ່ຽວກັບໂຮງຮຽນຕື່ມ ເລີຍຖາມເພິ່ນໄປຊື່ໆວ່າ ຈະໄດ້ຢູ່ບໍ ເພິ່ນກໍຕອບວ່າຈະຊ່ວຍໃຫ້ໄດ້ແທ້ ຕອນນັ້ນດີໃຈຫຼາຍ ບາດເຫັນແຈ້ງການຂອງພະແນກວ່າ ເພິ່ນຈະມາມອບຫ້ອງຮັກອ່ານ 185 ໃຫ້ໃນວັນທີ 10 ມີນາ 2009, ໝົດໂຮງຮຽນກໍແຮ່ງຕື່ນເຕັ້ນກັນໃຫຍ່"

ເງື່ອນໄຂການອຸປະຖຳຫ້ອງອ່ານຂອງ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ແມ່ນ ໂຮງຮຽນຕ້ອງມີຫ້ອງສຳລັບເຮັດຫ້ອງອ່ານໄວ້ແລ້ວ, ມ.ສ ເມືອງນານ (ເຊິ່ງໃນຕົວຈິງ ມີຕັ້ງແຕ່ ອະນຸບານຮອດມັດທະຍົມ) ໄດ້ສະຫຼະຫ້ອງຮຽນ ຊັ້ນອະນຸບານ ຂະໜາດ 3x3 ແມັດ ເພື່ອເປັນຫ້ອງອ່ານ ແລ້ວລະດົມປະຊາຊົນ ເພື່ອປຸກຫ້ອງຮຽນອະນຸບານຫຼັງໃໝ່. ຫ້ອງຂະໜາດ 3x3 ຖືວ່ານ້ອຍຫຼາຍ ສຳລັບຫ້ອງສະໝຸດຂອງໂຮງຮຽນ ທີ່ມີນັກຮຽນເກືອບ 2,000 ຄົນ ແຕ່ຫ້ອງຮັກອ່ານ 185 ຜັດເປັນຫ້ອງຮັກອ່ານແບບຢ່າງ ຂອງ ALC ດ້ວຍຈຳນວນສະມາຊິກທີ່ມາຊົມໃຊ້ ແລະ ບັດຢືມທີ່ເຕັມແລ້ວຈຳນວນຫຼາຍ ເຊິ່ງຖືກສົ່ງມາປ່ຽນເອົາປຶ້ມໃໝ່ ໃນແຕ່ລະສົກຮຽນ.

ໃນຖານະຜູ້ຮັບຜິດຊອບຫ້ອງອ່ານ ຄູເຂັມພອນບອກວ່າ "ວຸ້ງກຫ້ອງອ່ານງ່າຍຫຼາຍ ນັກຮຽນເຂົ້າຊ່ວຍເຮົາໄດ້ທຸກຢ່າງ ເຂົ້າສະຫຼາດຄືຫຍັງ ຫ້ອງອ່ານມັນແຄບ ເຂົ້າກໍຈົດຢືມປຶ້ມອອກມາອ່ານຢູ່ນອກ, ຮູ້ວ່າເຮົາບໍ່ມີເວລາ ເຂົ້າກໍມາຊ່ວຍວຸ້ງກເຮົາ, ອັນການລະດົມໃຫ້ເຂົ້າອ່ານຫັ້ນ ແຮ່ງງ່າຍ ວ່າແຕ່ເປີດຫ້ອງ ເຂົ້າກໍມາໂລດ ເຂົ້າເຫັນຄູອ່ານຫຍັງ ເຂົ້າກໍຖາມວ່າຢູ່ຫ້ອງອ່ານມີບໍ່ ເຂົ້າກໍໄປຊອກມາອ່ານ. ຄູທຸກຄົນກໍມັກອ່ານ ໄດ້ປຶ້ມມາໃໝ່ ຊ່ວຍກັນຂຶ້ນທະບຽນ ເພື່ອຊິໄດ້ອ່ານໄວໆ"


3.2 ປະຖົມພູເຂົ້າຄວາຍໃໝ່, ເມືອງທຸລະຄົມ, ແຂວງ ວຽງຈັນ ເຮັດຕາມເງື່ອນໄຂທີ່ມີ ບໍ່ຍຶດຕິດກັບຮູບແບບ


ໂຮງຮຽນແບບຢ່າງ ໃນໂຄງການ ຕູ້ປຶ້ມ-ຖົງປຶ້ມ ຂອງແຂວງວຽງຈັນ ສົກປີ 2006-2007 ເຊິ່ງອຸປະຖຳໂດຍ ອົງການ JICA. ທ່ານທີ່ອ່ານບົດນີ້

ມາຕັ້ງແຕ່ຕົ້ນ ຄືຈະຮູ້ແລ້ວວ່າ ການຊ່ວຍເຫຼືອແບບ ຕູ້ປຶ້ມ-ຖົງປຶ້ມ ແມ່ນໃຫ້ແຕ່ປຶ້ມກັບເຝິກອົບຮົມຄູໃຫ້, ອັນອື່ນກຸ້ມໂຕເອງ.

ຄູສີຈັນ ວົງໄຊ ຜູ່ຮັບຜິດຊອບຫ້ອງອ່ານ ເລົ່າວ່າ "ຫຼັງຈາກໄດ້ຮັບປຶ້ມ ແລະການເຝິກອົບຮົມແລ້ວ ເມື່ອຄືນມາໂຮງຮຽນ ໄດ້ເອົາປຶ້ມບໍລິການນັກຮຽນ ເຫັນວ່ານັກຮຽນສົນໃຈຫຼາຍ ຈຶ່ງໄດ້ຖອດຖອນບົດຮຽນກັບອຳນວຍການ, ຄູ ອາຈານ ແລະອຳນາດການປົກຄອງບ້ານ ແລະຕົກລົງກັນຍົກຫ້ອງຮຽນໜຶ່ງ ຫ້ອງໃຫ້ເປັນຫ້ອງອ່ານ ໂດຍທາງບ້ານປຸກຫ້ອງຮຽນຊົ່ວຄາວໃຫ້ໃຊ້ກ່ອນ ຈຶ່ງ ປຸກຫ້ອງຖາວອນໃນສົກຕໍ່ມາ."

ເຖິງຈະມີຫ້ອງແລ້ວ ແຕ່ກໍເປັນພຽງຫ້ອງຊື່ໆ ບໍ່ມີຕູ້ໃສ່ປຶ້ມຫຼືໂຕະຕັ່ງ ນັ່ງອ່ານ ເບື້ອງຕົ້ນ ກໍນັ່ງອ່ານກັບພື້ນ ພື້ນກໍຂັດເຫຼື້ອມຮຽບຮ້ອຍແລ້ວ ພຽງແຕ່ຮັກສາອະນາໄມເອົາ, ຕໍ່ມາທາງໂຮງຮຽນຈົກເງິນຂອງໂຮງຮຽນເອງຊື້ສາດ ມາປູ. ອັນນີ້ເພີ່ມໃຫ້ເຫດຜົນວ່າ "ນັ່ງສາດອ່ານໄດ້ຫຼາຍກວ່ານັ່ງຕັ່ງ" ນີ້ກໍຫາກ ຖືກຂອງເພີ່ນອີກ. ເພີ່ນຍັງເອົາໂຕະຕັ່ງຈຳນວນໜຶ່ງ ມາເຮັດເປັນບ່ອນວາງປຶ້ມ ເຊິ່ງຖ້າເຮົາບໍ່ຍຶດຖືວ່າ ນັ້ນແມ່ນໂຕະ ມັນກໍຫາກແມ່ນຕູ້ປຶ້ມງາມໆຄືກັນ.





ດ້ານການບໍລິການ ແມ່ນໄດ້ແບ່ງວັນເຂົ້າອ່ານກັບທີ່ ໃຫ້ແຕ່ລະຫ້ອງ ຄື ວັນຈັນໃຫ້ ປ.5, ວັນອັງຄານໃຫ້ ປ.4 ແລະຕໍ່ໆໄປ. ອ່ານກັບທີ່ໃນທີ່ນີ້ ໝາຍຄວາມວ່າ ໃນໂມງເລີກຫຼິ້ນແລະຕອນທ່ຽງ ຈະໃຫ້ເດັກເຂົ້າມາອ່ານໃນຫ້ອງອ່ານ ແຕ່ຍັງບໍ່ທັນໄດ້ຢືມເມືອເຮືອນ. ຫຼັງຈາກເລີກຫຼິ້ນຊົ່ວໂມງສຸດທ້າຍ ຫ້ອງອ່ານຈະເປີດໃຫ້ທຸກໆຄົນ (ບໍ່ແບ່ງຫ້ອງ) ເຂົ້າມາຢືມໄດ້. "ບາງມື້ກໍຢູ່ ຮອດທ້າໂມງຈຶ່ງໄດ້ເມືອ ແຕ່ຕອນນີ້ນັກຮຽນເກັ່ງແລ້ວ ເຂົາຈົດຢືມເອງ ແລ້ວ ເອົາບັດມາໄວ້ນຳເຮົາ ກໍແລ້ວໄວ" ຄູສີຈັນບອກ.

ຄູສີຈັນຝາກຂໍ້ຄິດດີໆມານຳວ່າ "ກໍເດັກນ້ອຍເນາະ ທຳອິດເຂົາອາດ ຈະບໍ່ຮູ້ຫຍັງ ພຽງເປີດປຶ້ມຊື່ໆ ມ້ຽນກໍບໍ່ຮູ້ມ້ຽນ ແນວໃດກໍໃຫ້ອົດທົນ ຄ່ອຍ ບອກຄ່ອຍສອນ ຢ່າຟ້າວຄຶດແຕ່ວ່າເຂົາຊິເຮັດປຶ້ມຂາດ ຫຼື ຊິລັກ, ເຮົາຕ້ອງ ໃຫ້ໂອກາດເຂົາໄດ້ອ່ານ ໄດ້ຮຽນ ໄດ້ຂຽນ ແລ້ວເຮົາຈະພູມໃຈ ບາດເຫັນ ເຂົາອ່ານໄດ້ຂຽນເປັນ."

ປະຖົມພູເຂົາຄວາຍໃໝ່ ໄດ້ຮັບການອຸປະຖຳເປັນຫ້ອງອ່ານຢ່າງເປັນທາງການ ໃນສົກຮຽນ 2008-2009.

3.3 ປະຖົມບ້ານລຸຍ-ໜອງແຄນ, ເມືອງຊະນະສົມບູນ, ແຂວງ ຈຳປາສັກ ບໍ່ມີຫ້ອງອ່ານ ຫຼື ທຸກຕາແມັດແມ່ນຫ້ອງອ່ານ..?

ໜຶ່ງໃນຫົກໂຮງຮຽນແບບຢ່າງ ຂອງໂຄງການ ສ້າງຄວາມອາດສາມາດ ໃນການດຳເນີນວຽກງານສົ່ງເສີມການອ່ານ ດ້ວຍຕົນເອງ (JICA 2010-2012).

ໂຮງຮຽນນີ້ ກໍໄດ້ຮັບການຊ່ວຍເຫຼືອໃນລັກສະນະຂອງ ຕູ້ປຶ້ມ-ຖົງປຶ້ມ. ດ້ວຍສະພາບຂອງອາຄານຮຽນ ເຮັດໃຫ້ບໍ່ສາມາດເອົາປຶ້ມໄວ້ຢູ່ໂຮງຮຽນໄດ້ ຈຶ່ງເອົາປຶ້ມໄປໄວ້ກັບປະຖົມຄຳແປງ ເຊິ່ງເປັນໂຮງຮຽນໝວດ. ເຖິງຈະເປັນ ດັ່ງນັ້ນ ໂຮງຮຽນທີ່ມີຈຳນວນນັກຮຽນບໍ່ຮອດຮ້ອຍ ຜັດມີບັດຢືມທີ່ໃຊ້ຈົນເຕັ້ມ ນັບຮ້ອຍບັດ ໃນສົກຮຽນດຽວ.

ຄູແສງເພັດ ຫົວໜ້າໂຮງຮຽນປະຖົມບ້ານລຸຍ-ໜອງແຄນ ເລົ່າວ່າ "ຄູອາຈານພວກເຮົາ (ມີ 3 ຄົນ) ໄດ້ໂອ້ລົມກັນ ແລະ ຕົກລົງໃຊ້ວິທີບໍລິການແບບ ຝາກປຶ້ມໄວ້ກັບນັກຮຽນ ຄື ເອົາປຶ້ມມາຈາກຄຳແປງ ພໍດີກັບຈຳນວນນັກຮຽນ



ແລ້ວໃຫ້ທຸກໆຄົນຢືມເມືອເຮືອນ ຜູ່ລະຫົວ ຮອດມື້ສິ່ງ ກໍເອົາມາສິ່ງພ້ອມໆກັນ ແລ້ວກໍຢືມອີກ ແມ່ນປຶ້ມກອງເດີມ ຫາກແຕ່ລະຄົນຈະໄດ້ປຶ້ມຫົວໃໝ່ ເຮັດດັ່ງນີ້ ຈົນວ່ານັກຮຽນຂໍປ່ຽນປຶ້ມຊຸດໃໝ່ ຫຼື ທຸກຄົນໄດ້ອ່ານທຸກຫົວແລ້ວ. ເຮັດແບບນີ້ ບໍ່ຕ້ອງຫ່ວງເລື່ອງປຶ້ມເສຍ ນັກຮຽນກໍໄດ້ອ່ານຢ່າງທົ່ວເຖິງ ຄູກໍສະບາຍ ມີ ແຕ່ຮັກສາບັດຢືມໄວ້ ບໍ່ຕ້ອງຫອບປຶ້ມໄປໆມາໆຄືແຕ່ເກົ່າ. ການບໍລິການກໍ ແມ່ນຄູປະຈຳຫ້ອງແຕ່ລະຫ້ອງໃຫ້ບໍລິການນັກຮຽນຂອງໂຕເອງເລີຍ.

ຄູໃນໂຮງຮຽນປະຖົມບ້ານລຸຍ-ໜອງແຄນ ຍັງໄດ້ສ້າງໃຫ້ນັກຮຽນມີ ຄວາມຮູ້ສຶກດີໆກັບປຶ້ມອ່ານ ດ້ວຍກິດຈະກຳສິ່ງເສີມການອ່ານ (ແບບທີ່ທ່ານ ຄືຈະໄດ້ຮຽນມາແລ້ວຫຼືຖ້າຍັງກໍອ່ານໄດ້ໃນພາກທີສອງຂອງປຶ້ມຫົວນີ້) ໃນຊົ່ວ ໂມງກິດຈະກຳ. ຖ້າທ່ານໄດ້ໄປຢາມໂຮງຮຽນນີ້ ທ່ານຈະເຫັນຄວາມສາມາດ, ຄວາມກ້າຫານ ແລະຄວາມສ້າງສັນ ຂອງທັງໂຕຄູແລະນັກຮຽນ ຈົນບໍ່ມີທາງ ທີ່ທ່ານຈະເບິ່ງອອກວ່າ ບ້ານນີ້ແມ່ນບ້ານຊົນເຜົ່າ ທີ່ບໍ່ໄດ້ເວົ້າພາສາລາວຢາມ ຢູ່ເຮືອນ.

3.4 ປະຖົມໂຮມສຸກ, ເມືອງຊາອຸດົມ, ແຂວງ ບໍ່ແກ້ວ


ຄັນເຮັດ ບໍ່ມີຫຍັງຍາກ

ອີກໜຶ່ງໂຮງຮຽນແບບຢ່າງໃນໂຄງການ JICA 2010-2012, ການ ບໍລິການຄ້າຍຄືກັບວິທີຢູ່ປະຖົມບ້ານລຸຍ-ໜອງແຄນ ຜົນຮັບກໍໃກ້ຄຽງກັນ. ສິ່ງທີ່ໜ້າສົນໃຈກ່ຽວກັບໂຮງຮຽນນີ້ແມ່ນ"ຄວາມຕັດສິນໃຈ" ເຊິ່ງມີຈຸດເລີ່ມຕົ້ນ ທີ່ໜ້າປະທັບໃຈ.

ຄູ ເລີມ ຫົວໜ້າໂຮງຮຽນໂຮມສຸກ ບອກວ່າ "ມື້ໜຶ່ງ ລູກຊາຍນ້ອຍ ທີ່ຮຽນຢູ່ຫ້ອງ ປ.ກຽມ ຂອງປະຖົມໂຮມສຸກທັ້ນລະ ຖືປຶ້ມນິທານມາເຮືອນນຳ ກິນເຂົ້າແລ້ວ ກໍເປີດປຶ້ມເບິ່ງ ຄືຈັ່ງວ່າ ອ່ານໜັງສືໄດ້ແທ້ໆ ຖາມເບິ່ງ ຈຶ່ງຮູ້ວ່າ ຄູຫ້ອງ ປ.ກຽມ ໄດ້ເອົາປຶ້ມທີ່ໂຄງການມອບໃຫ້ ມາເຮັດກິດຈະກຳ ແລະໃຫ້ ເດັກນ້ອຍຢືມມາເຮືອນ. ໄດ້ເຫັນວ່າເດັກເຂົາມັກປຶ້ມສ່ຳໃດ ເຫັນປະໂຫຍດ ຂອງປຶ້ມຈັ່ງຊັ້ນ ກະມີໃຈ ຈຶ່ງປະຊຸມ ລະດົມຄູທຸກຄົນໃຫ້ເຮັດວຽກນີ້ຮ່ວມກັນ."

"ບາດໄດ້ທົດລອງເຮັດ ກໍຈຶ່ງໄດ້ບົດຮຽນຕົວຈິງ ແລະຄ່ອຍໆແກ້ໄຂ ບັນຫາໄປ. ເຮົາຕ້ອງເຮັດກ່ອນ ບໍ່ແມ່ນ ຄຶດຍາກກ່ອນ ແລ້ວບໍ່ເຮັດເລີຍ ບັນຫາມັນຫາກແກ້ໄຂໄດ້." ຄູເລີມ ກ່າວກັບເພື່ອນຄູຄົນອື່ນ ໃນກອງປະຊຸມ ຖອດຖອນບົດຮຽນ ຕອນທ້າຍໂຄງການ.

ຫ້ອງອ່ານຂອງທ່ານເດ (ຢາກໃຫ້)ເປັນແບບໃດ?



ບົດທີ 3

ການຂຶ້ນທະບຽນປີ້ນ


ປຶ້ມຂຶ້ນຫະຍຸງນ
ຫ້ອງຮ້ານອ່ານ
ALC
ກ່ຳພ້ຳເຫງ້ມລ່ຳ

ເພື່ອເຮັດໃຫ້ເຮົາຮູ້ວ່າ ໃນຫ້ອງຮັກອ່ານຂອງເຮົາ ມີປຶ້ມຫຍັງແດ່, ມີປຶ້ມຈັກເລື່ອງ, ມີປຶ້ມຈັກຫົວ, ໄດ້ມາຈາກບ່ອນໃດ. . .

ທະບຽນ ເປັນດັ່ງບັນຊີປຶ້ມຂອງຫ້ອງຮັກອ່ານ ເພື່ອຄວາມສະດວກໃນການບໍລິການ, ກວດກາ ແລະ ລາຍງານ.

I. ກະກຽມອຸປະກອນ

ການຈ້ຳຂອງໂຮງຮຽນ ຫຼື ການຈ້ຳຂອງບ້ານ (ຫຼືຫ້ອງການ), ການຈ້ຳຂອງຫ້ອງຮັກອ່ານ, ປຶ້ມບັນທຶກ ປົກແຂງ ຂະໜາດ 21 X 33 ເຊັນຕິແມັດ, ປົກຂຽນ, ມີດຕັດ, ເຈ້ຍຂາວ, ບັນທັດ,

ອຸປະກອນດັ່ງກ່າວມາຈາກໃສ

ໂດຍທົ່ວໄປ ບັນດາໂຮງຮຽນທີ່ໄດ້ຮັບການຊ່ວຍເຫຼືອດ້ານວຽກງານການອ່ານ ຈະໄດ້ຮັບອຸປະກອນສຳລັບລົງທະບຽນຢ່າງຄົບຊຸດ ຕັ້ງແຕ່ຕົ້ນ. ອາດຈະມີກໍລະນີທີ່ໂຮງຮຽນຂໍການຊ່ວຍເຫຼືອ ແລ້ວໄດ້ຮັບແຕ່ປຶ້ມ ຫຼື ໂຮງຮຽນຈັດຊື້ປຶ້ມເຂົ້າມາ ເພື່ອຈັດຕັ້ງຫ້ອງອ່ານເອງ ອຸປະກອນລົງທະບຽນກໍບໍ່ໄດ້ແພງເກີນກຳລັງທີ່ຈະຊື້ຫາໄດ້. ໂດຍທົ່ວໄປ ຖ້າມີປຶ້ມ ປະມານ 500 ຫົວ ຈະໃຊ້ງົບປະມານສຳລັບອຸປະກອນລົງທະບຽນ ມູນຄ່າປະມານ 600,000 ກີບ.

ອຸປະກອນເຊັ່ນ: ສັນ, ຊອງ, ບັດຢືມ, ກາວ, ເຈ້ຍຂາວ... ເຊິ່ງໃຊ້ແລ້ວໝົດໄປທ່ານສາມາດຕິດຕໍ່ກັບອົງການຜູ່ໃຫ້ທຶນເພື່ອຂໍຊື້ອຸປະກອນຕ່າງໆເຫຼົ່ານີ້ໃນລາຄາທີ່ສົມເຫດສົມຜົນໄດ້ ຫຼື ຖ້າຫ້ອງຮັກອ່ານຂອງທ່ານບໍລິການໄດ້ດີ ກໍຈະມີບັດຢືມທີ່ໃຊ້ຈົນເຕັມແລ້ວ ເຊິ່ງສາມາດນຳມາແລກປ່ຽນ ກັບສູນສົ່ງເສີມການອ່ານ ເຊິ່ງໄດ້ສະເໜີໄປແລ້ວໃນບົດທີ 2.

ຂໍ້ມູນກ່ຽວກັບ ລາຄາ ແລະ ການແລກປ່ຽນປຶ້ມ ແລະ ອຸປະກອນກັບບັດຢືມທີ່ເຕັມແລ້ວ ມີໃນຕາຕະລາງທີ 1 ຢູ່ພາກທ້າຍຂອງປຶ້ມຫົວນີ້.


ຈ້ຳກາໃສ່ບ່ອນໃດ?

ກາຈ້ຳຂອງໂຮງຮຽນ ຫຼື ບ້ານ ຈ້ຳໃສ່ໜ້າທາງໃນຂອງປຶ້ມ ບ່ອນທີ່ມີຊື່ເລື່ອງແລະຊື່ຜູ່ຂຽນ (ໃຫ້ສັງເກດເບິ່ງວ່າ ໜ້ານີ້ ຈະມີກາຈ້ຳຂອງອົງການທີ່ມອບປຶ້ມໃຫ້)


ກາຈ້ຳຂອງຮັກອ່ານ ໃຫ້ຈ້ຳໃສ່ 3 ໜ້າຄື :

- ຈ້ຳໃສ່ໜ້າດຽວກັນກັບໜ້າທີ່ມີກາຈ້ຳຂອງໂຮງຮຽນ
- ຈ້ຳໃສ່ໜ້າເຄັດລັບ ເຊິ່ງໂຮງຮຽນຈະເປັນຄົນເລືອກເອົາເອງ ລະຫວ່າງໜ້າ 5,7,9 ໃຫ້ສັງເກດເບິ່ງວ່າ ປຶ້ມທີ່ບໍ່ມີໝາຍເລກໜ້າ ໃຫ້ນັບເອົາໜ້າທີ່ຈ້ຳກາໃສ່ທຳອິດເປັນໜ້າທີ 1 ປຶ້ມທີ່ມີ ໝາຍເລກໜ້າເປັນ ກ, ຂ, ຄ... ຫຼື I, II, III, IV (ເລກໂຣແມັງ) ແລ້ວຈຶ່ງມີໝາຍ 1, 2, 3 (ເລກສາກົນ) ແມ່ນໃຫ້ເລືອກເອົາໜ້າທີ່ມີໝາຍ ເລກສາກົນ ເປັນບ່ອນຈ້ຳກາໃສ່
- ຈ້ຳໃສ່ໜ້າສຸດທ້າຍຂອງປຶ້ມ (ບ່ອນຈົບຂອງເລື່ອງ)

ໜ້າທີ່ຕ້ອງຈ້ຳກາ ແລະ ຂຽນເລກທະບຽນໃສ່



ໜ້າທຳອິດ



ໜ້າເຄັດລັບ



ໜ້າສຸດທ້າຍ

ລະວັງ : ຄວນເລືອກຈ້ຳກາໃສ່ ບ່ອນບ່ມີຮູບ ຫຼືຕິວໜັງສື

II. ປຶ້ມທະບຽນ

ເອົາປຶ້ມປົກແຂງມາຕັດ ແລ້ວແບ່ງໜ້າປຶ້ມທັງສອງຂ້າງອອກ ແລ້ວຂີດເປັນຫ້ອງຈຳນວນ 10 ຫ້ອງດັ່ງຕົວຢ່າງລຸ່ມນີ້:

ວັນເດືອນປີ	ເລກລຳດັບ	ເລກທະບຽນ	ຊື່ຜູ້ແຕ່ງ	ຊື່ເລື່ອງ	ຜູ້ຈັດພິມ	ປີພິມ	ຈຳນວນໄດຮັບ	ລາຄາຕໍ່ຫົວ	ໝາຍເຫດ
01/02/2012	1	0001	ດາລິວັນ ສິດພະໄຊ	ກ່ຳໜ້າກັບເຫງົ້ານລຳ	ALC	2011	3	13.000	ALC
		0002	——||——	——||——	——||——				ALC
		0003	——||——	——||——	——||——				ALC
	2	0004	ຮຸ່ງອະລຸນ ແດນວິໄລ	ໄກ່ນ້ອຍຕົກຂຸມ	——||——	2011	2	12.000	ALC
		0005	——||——	——||——	——||——				ALC
	3	0006	ດາລາ ກັນລະຍາ	ຄອບຄົວແສນແພງ	ດອກເກດ	2011	1	18.000	ຂີ້
06/02/2012	4	0007	ລານຄຳ	ລານຄຳ ສະບັບທີ 14,ເດືອນ.	ດອກເກດ	2011	1	20.000	ຂີ້
06/02/2012	5	0008	ສິລາ ວິລະວົງສ໌	ກາບກອນສອນຄຳ	ALC	2008	4	15.000	ALC
		0009	——||——	——||——	——||——				ALC
		0010	——||——	——||——	——||——				ALC
		0011	——||——	——||——	——||——				ALC

ອະທິບາຍເພີ່ມ :

ວັນ/ເດືອນ/ປີ: ແມ່ນວັນທີທີ່ຂຶ້ນທະບຽນປຶ້ມ

ເລກລຳດັບເລື່ອງ: ໃຫ້ນັບເອົາ 1 ເລກ ຕໍ່ປຶ້ມ 1 ເລື່ອງ

ເລກທະບຽນ: ແມ່ນເລກປະຈຳຕົວຂອງປຶ້ມແຕ່ລະຫົວເຖິງຈະແມ່ນປຶ້ມຊະນິດດຽວກັນ (ໄດ້ຮັບຫຼາຍຫົວ) ແຕ່ລະຫົວຕ້ອງມີເລກແຕກຕ່າງກັນ ແລະ ເຮົາໃຊ້ເລກ4ຕົວເປັນຫຼັກຄື: 0001, 0002, 0003 . . . 0099, 0100 . . . 0999, 1000 . . .

ຊື່ຜູ່ແຕ່ງ : ແມ່ນ ຊື່ຜູ່ຂຽນປຶ້ມ ເຊິ່ງໃນປຶ້ມແຕ່ລະຫົວ ຈະໃຊ້ຄຳແຕກຕ່າງກັນ ເຊ່ນ : ຂຽນໂດຍ , ແຕ່ງໂດຍ, ເລື່ອງໂດຍ, ໂດຍ, ເລື່ອງ, ຮົບໂຮມ, ຮຽບຮຽງ, ຮົບໂຮມໂດຍ, ຮຽບຮຽງໂດຍ, ກອນໂດຍ, ການກອນໂດຍ, ຊຳຮະໂດຍ, ລິຈະນາໂດຍ, ເນື້ອໃນໂດຍ, ຂຽນເປັນຄຳເວົ້າທຳມະດາໂດຍ ... (ຖ້າມີຫຼາຍຊື່ ໃຫ້ເລືອກເອົາຊື່ທຳອິດ), ຖ້າແມ່ນວາລະສານ ໃຫ້ເອົາຊື່ຂອງວາລະສານເປັນຊື່ຜູ່ແຕ່ງ.

ຊື່ເລື່ອງ: ໃຫ້ສັງເກດເບິ່ງຊື່ເລື່ອງ ຈະເປັນຕົວໜັງສືໃຫຍ່ກວ່າໝູ່, ຖ້າເປັນວາລະສານ ແມ່ນໃຫ້ໃຊ້ຊື່ວາລະສານ ຕາມດ້ວຍເລກທີສະບັບຂອງວາລະສານ (ຕົວຢ່າງ: ວາລະສານລານຄຳ, ສະບັບທີ 18 ເດືອນ 1-3 2012)


ຜູ່ຈັດພິມ ໃຫ້ເອົາບ່ອນ : ຈັດພິມໂດຍ (ຖ້າມີຫຼາຍຊື່ ໃຫ້ເລືອກເອົາຊື່ທຳອິດ) ຫຼືຖ້າບໍ່ມີບອກໄວ້ ໃຫ້ຂຽນຊື່ໂຮງພິມໃສ່ແທນ

ປີພິມ : ຈະມີບອກໄວ້ຢູ່ໃກ້ກັບຊື່ຜູ່ຈັດພິມ ຖ້າບໍ່ເຫັນ ໃຫ້ສັງເກດເບິ່ງ ທະບຽນພິມເລກທີ . . . ຕົວຢ່າງ : 293 ພຈ 22112007 ແມ່ນ ປຶ້ມທີ່ໄດ້ຈັດພິມໃນປີ 2007

ຈຳນວນ : ແມ່ນຈຳນວນປຶ້ມທີ່ໄດ້ຮັບ

ລາຄາ : ໃຫ້ອີງໃສ່ລາຄາໃນໃບມອບຮັບ ຫຼື ທີ່ຕິດຢູ່ປົກປຶ້ມ


ໝາຍເຫດ : ແມ່ນແຫ່ງທີ່ມາຂອງປຶ້ມ ຄື ໄດ້ຮັບຈາກອົງການໃດ, ບຸກຄົນໃດ, ຊື້ເອົາເອງ ຫຼື ອື່ນໆ




ຕຳແໜ່ງຂອງຂໍ້ມູນຕ່າງໆ ໃນປຶ້ມ
ທີ່ຈຳເປັນຕໍ່ການລົງທະບຽນ
ມັກຈະຢູ່ໃນລັກສະນະນີ້

ຊື່ເລື່ອງ

ຊື່ຜູ່ແຕ່ງ





ໜ້າລິຂະສິດ


ຜູ່ຈັດພິມ

ປີພິມ

ຂໍ້ມູນເພື່ອຂຶ້ນທະບຽນປຶ້ມນັ້ນ ເບິ່ງຄືຈະຊອກຍາກ ແຕ່ສຳລັບຜູ່ທີ່ເປັນນັກອ່ານ ຫຼື ມີປະສົບການກັບການອ່ານຫຼາຍໆ ຈະສາມາດຮູ້ຂໍ້ມູນເຫຼົ່ານີ້ໄດ້ຢ່າງງ່າຍດາຍພຽງແຕ່ເປີດປຶ້ມບ່ທ່ໃດວິນາທີກໍຮູ້ແລ້ວ ໃນຄວາມເປັນຈິງປຶ້ມແຕ່ລະຫົວກໍໄດ້ນຳສະເໜີຂໍ້ມູນເຫຼົ່ານີ້ໄວ້ຢ່າງຈະແຈ້ງແລ້ວ ສິ່ງທີ່ຈຳເປັນທີ່ສຸດຈຶ່ງແມ່ນ ຜູ່ທີ່ຈະເຮັດວຽກຫ້ອງສະໝຸດ ຫຼື ວຽກສົ່ງເສີມການອ່ານ ຫຼື ຄູ ທຸກໆຄົນຕ້ອງສ້າງນິໄສຮັກການອ່ານ ໃນໂຕເອງໃຫ້ໄດ້ເສຍກ່ອນ.

III. ຕິດສັນ-ຕິດຊອງ-ຂຽນບັດຢືມ

ສັນ, ຊອງ ແລະ ບັດຢືມ ສຳລັບປຶ້ມແຕ່ລະຫົວ ແມ່ນບັດປະຈຳຕົວຂອງປຶ້ມ, ເຊິ່ງຈຳເປັນທີ່ປຶ້ມໃນຫ້ອງຮັກອ່ານຕ້ອງມີ. ມັນແມ່ນເຄື່ອງມືສຳລັບການໃຫ້ບໍລິການໆອ່ານ ທີ່ດີທີ່ສຸດ ເຊິ່ງຈະເຫັນຄວາມສຳຄັນໄດ້ໃນບົດຕໍ່ໄປ.




ຊອງ, ບັດຢືມ ແລະ ການິດສິ່ງ, ເຄື່ອງມືທີ່ດີເລີດທີ່ສຸດ ຂອງຫ້ອງຮັກອ່ານ

3.1 ຂະໜາດຂອງສັນ


ໃຊ້ເຈ້ຍຂາວ ຕັດຂະໜາດ ກວ້າງ 2.5 ເຊັນຕິແມັດ, ຍາວ 4.5 ເຊັນຕິແມັດຫຼືຈະໃຊ້ສະຕິກເກີ້(ປ້າຍຕິດລາຄາ)ຂະໜາດA10 ເຊິ່ງມີຂະໜາດ ກວ້າງ 2.5 ເຊັນຕິແມັດ, ຍາວ 5 ເຊັນຕິແມັດ ກໍໄດ້ .

ກ່ອນຈະຕິດສັນ ໃຫ້ແທກປຶ້ມ ຈາກດ້ານລຸ່ມຂຶ້ນມາ 2.5 ເຊັນຕິແມັດ ແລ້ວຈຶ່ງເອົາເຈ້ຍສັນຕິດໃສ່

ປຶ້ມທຸກຫົວແມ່ນໃຊ້ວິທີການດຽວກັນນີ້ທັງໝົດ ບໍ່ວ່າຈະເປັນປຶ້ມ ຫົວໜາ, ຫົວບາງ , ຫົວນ້ອຍ, ຫົວໃຫຍ່ ແລະຈະມີຮູບຢູ່ບໍລິເວນດັ່ງກ່າວກໍຕາມ









ຂັ້ນຕອນການຕິດສັນ


3.2 ຕິດຊອງ-ຂຽນບັດຢືມ






ວິທີຂຽນບັດຢືມ ແລະ ຊອງ

ບັດຢືມ ຫຼືບາງເທື່ອເອີ້ນວ່າ ບັດເຫຼືອງ ແຕ່ກໍມີຫຼາຍສີທັງສີຂາວ, ສີຟ້າ, ສີບົວ ... ແຕ່ຮູບແບບແລະວິທີຂຽນ ທັງບັດຢືມແລະຊອງທີ່ໃສ່ບັດຢືມກໍຕ້ອງໄດ້ຂຽນເລກທະບຽນ, ຊື່ຜູ່ຂຽນ ແລະ ຊື່ເລື່ອງໃສ່ນຳ ດັ່ງຮູບ:



- ການຕິດຊອງ ແມ່ນຕິດໃສ່ດ້ານໃນຂອງຫຼັງປົກສະເໝີ.
- ໃນກໍລະນີ ດ້ານໃນຫຼັງປົກບໍ່ມີຕົວໜັງສື ຕິດຊອງໃສ່ໄດ້ເລີຍ.
- ໃນກໍລະນີ ປົກປຶ້ມດ້ານຫຼັງມີຕົວໜັງສື ໃຫ້ໃຊ້ເຈ້ຍຂາວຕິດຮອງ ແລ້ວ ຕິດຊອງໃສ່ເຈ້ຍຂາວອີກເທື່ອໜຶ່ງ ເພື່ອໃຫ້ສາມາດເປີດອ່ານໄດ້






ຕິດເຈ້ຍຮອງໃສ່ກ່ອນ (ຊ້າຍ) ເພື່ອໃຫ້ສາມາດເປີດອ່ານໄດ້ (ຂວາ)

3.3 ການຈັດປະເພດປຶ້ມ

ຫ້ອງຮັກອ່ານ ຂອງ ALC ໄດ້ເລືອກໃຊ້ ສີ (ເປັນສະຕິກເກີ ຫຼື ເຈ້ຍ ສີກໍໄດ້) ເພື່ອຊ່ວຍໃນການຈັດປະເພດປຶ້ມ ເຮັດໃຫ້ເຂົ້າໃຈງ່າຍ ເວລາຈະຊອກ ປຶ້ມປະເພດໃດ ກໍຊອກຫາໄດ້ງ່າຍ ທັງຜູ້ດູແລເອງກໍສະດວກ ໃນການເກັບ ມ້ຽນນຳ. ຫ້ອງຮັກອ່ານ ຂອງ ALC ແບ່ງປຶ້ມອອກ ເປັນ 6 ປະເພດຄື :

- ສີ ບົວ ປະເພດ ນິທານປະກອບຮູບ
- ສີ ແດງ ປະເພດ ຄູ່ມື, ກິດໝາຍ, ປຶ້ມເພັງ
- ສີ ເຫຼືອງ ປະເພດ ວັດຈະນານຸກົມ, ປະຫວັດສາດ, ໜັງສືອ້າງອີງ, ປະຫວັດບຸກຄົນ, ສາດສະໜາ

- ສີ ຂຽວ ປະເພດ ແບບຮຽນ, ແບບແກ້ບົດເຝິກຫັດ ປຶ້ມປະກອບການຮຽນ
- ສີ ຟ້າ ປະເພດ ເລື່ອງສັ້ນ ການກອນ ວັນນະຄະດີ
- ວາລະສານ, ນິຕະຍາສານ ແລະ ຈຸລະສານ ແມ່ນບໍ່ໄດ້ຕິດສີໃສ່ ດັ່ງຕົວຢ່າງຮູບດ້ານລຸ່ມ





ການເລືອກໃຊ້ສີ ບໍ່ຈຳເປັນຕ້ອງເປັນສີດຽວກັບຕົວຢ່າງຂ້າງເທິງກໍໄດ້. ໃນກໍລະນີມີປຶ້ມຫລາຍແບບ ແລະ ຫລາຍພາສາ ສາມາດເພີ່ມ ສີ ຂຶ້ນໄດ້

ບົດທີ 4

ການບໍລິການ ການອ່ານ

ຮູບ: ແສງສຸລິ ກັດຕິຍະສັກ



I. ຄວາມໝາຍຂອງການບໍລິການໆອ່ານ

ການໃຫ້ບໍລິການການອ່ານແລະຢືມປຶ້ມ ແມ່ນໝາກຫົວໃຈຂອງວຽກງານສົ່ງເສີມການອ່ານ. ມີປຶ້ມງາມວາງເອ້ໄວ້ ຖ້າບໍ່ມີຄົນເອົາໄປອ່ານ ຈະມີປຶ້ມໄວ້ເຮັດຫຍັງ? ສິ່ງທີ່ທາງໂຮງຮຽນ ຫຼື ຄູຜູ້ຮັບຜິດຊອບຫ້ອງຮັກອ່ານຈະຕ້ອງຄຳນຶງຢູ່ສະເໝີ ແມ່ນເຮັດແນວໃດຈະໃຫ້ນ້ອງນັກຮຽນ ເຂົ້າມາອ່ານ ແລະ ຢືມປຶ້ມເມືອເຮືອນ.

ບໍລິການ ໝາຍຄວາມວ່າ ໃຫ້ຄວາມສະດວກ ສະນັ້ນ ວຽກງານ ສຳຄັນຕໍ່ມາ ແມ່ນການເກັບກຳສະຖິຕິ. ທັງສອງວຽກງ່ວຂ້ອງກັນ ແລະ ຊຸກຍູ້ເຊິ່ງກັນແລະກັນ, ບໍລິການດີ ກໍຈະມີສະຖິຕິທີ່ດີ, ຕົວເລກທີ່ຈົດໄວ້ຈະເປັນຫຼັກຖານຂອງວຽກທີ່ຄູຕັ້ງໃຈເຮັດ ທັງເປັນກຳລັງໃຈໃຫ້ແກ່ໝົດໂຮງຮຽນ ເພາະນັ້ນແມ່ນໜ້າຕາຂອງໂຮງຮຽນ ທີ່ຈະໄດ້ຊື່ວ່າ ມີນັກຮຽນອ່ານປຶ້ມຫຼາຍ ເປັນໂຮງຮຽນຄຸນນະພາບ.

II. ອ່ານກັບທີ່:

ແມ່ນການເປີດຫ້ອງຮັກອ່ານ ໃຫ້ນັກຮຽນເຂົ້າມາອ່ານແລະຢືມ ຕາມຕາຕະລາງທີ່ໄດ້ວາງອອກ, ຄູຄວນຈັດບ່ອນສຳລັບນັ່ງອ່ານ ເຊັ່ນ : ປູສາດ ຫຼື ຖ້າຫ້ອງກວ້າງ ກໍຫາໂຕະຕັ່ງມາໄວ້ນັ່ງອ່ານ.

ຜູ່ຮັບຜິດຊອບຕ້ອງໄດ້ບັນທຶກວ່າ ມີຄົນເຂົ້າມາຫ້ອງຮັກອ່ານເທົ່າໃດ ດ້ວຍການ ນັບເອົາກ້ອນຫີນ, ເຈ້ຍ ຫຼື ແຜ່ນຢາງ ທີ່ມີຢູ່ໃນກ່ອງເກັບກຳສະຖິຕິ ເຊິ່ງຄູອາດຈະແຍກເປັນ ຈຳນວນ ຍິງ-ຊາຍ ແລ້ວຈົດເຂົ້າປຶ້ມບັນທຶກປະຈຳວັນ ເພື່ອເປັນຂໍ້ມູນໃນການລາຍງານ ປະຈຳເດືອນ, ປະຈຳພາກຮຽນ ແລະ ປະຈຳປີ.

ການນັບສະຖິຕິຄົນເຂົ້າມາໃຊ້ ແມ່ນນັບເອົາທຸກໆຄົນ ທີ່ເຂົ້າມາ ຫ້ອງຮັກອ່ານ ບໍ່ວ່າຈະເປັນຜູ່ມາອ່ານກັບທີ່ ຫຼື ຜູ່ມາຢືມປຶ້ມ ກໍໃຫ້ນັບເຂົ້າ ຮວມກັນ

ຕົວຢ່າງ : ສະຖິຕິ ເດືອນ ມີນາ 2012

ວັນທີ	ຍິງ	ຊາຍ	ຢືມ (ຄົນ/ຫົວ)	ປຶ້ມຂາດ	ສ້ອມແປງປຶ້ມ	ໝາຍເຫດ
01	25	12	31/93			
02	13	17	24/72			
03-04						ພັກ ເສົາ-ອາທິດ
05	10	13	16/48			
06	18	10	20/60			
07	15	11	21/63	5	5	
08						ພັກ ວັນ ແມ່ຍິງ
09	19	15	30/90			
10-11						ພັກ ເສົາ-ອາທິດ
12	22	6	20/60			
13	27	19	35/105			
14	18	20	18/54			
15	16	12	15/45			
16	28	10	29/87			
17-18						ພັກ ເສົາ-ອາທິດ
19	10	22	30/90	6	6	
20	15	17	22/66			
21	11	8	14/42			
22	23	5	20/60			
23	14	14	19/57			

24-25						ພັກ ເສົາ-ອາທິດ
26	20	11	21/63			
27	17	15	14/42			
28	12	10	18/54			
29	20	16	26/78			
30	13	22	25/75			
ຮວມ : 21	**366**	**285**	**468/1404**	**11**	**11**	



ຮູບດ້ານເທິງ ແມ່ນຕົວຢ່າງການເກັບສະຖິຕິຄົນເຂົ້າຫ້ອງອ່ານ ມີພຽງ ກະຕ່າ ແລະ ແຜ່ນຢາງ ແລ້ວ ໃຊ້ຮູບແຕ້ມ, ໂຕໜັງສື ແລະ ສີ ເປັນສັນຍາລັກ ເມື່ອນັກຮຽນເຂົ້າຫ້ອງອ່ານ ກໍໃຫ້ເຂົາເຈົ້າຈັບເອົາສີຂອງໂຕເອງ ປ່ອນໃສ່ກະຕ່າຕາມຊັ້ນຂອງເຂົາເຈົ້າ ເຊັ່ນ ນັກຮຽນຍິງຊັ້ນປະຖົມ ກໍຈັບກ້ອນສີແດງ ປ່ອນໃສ່ກະຕ່າປະຖົມ.

ແນ່ນອນວ່າ ເມື່ອເຮັດຕອນທຳອິດ ຈະເກີດຄວາມສັບສົນແດ່ ແຕ່ດ້ວຍຄວາມສາມາດຂອງຄູພວກເຮົາ ທີ່ເຮັດໃຫ້ເດັກນ້ອຍທີ່ວ່າດື້ ລວມແຖວເປັນລະບຽບກໍຍັງໄດ້, ເລື່ອງຊ່ຳນີ້ ຄືຈະບໍ່ແມ່ນເລື່ອງຍາກເລີຍ.

III. ຢືມປຶ້ມອອກໄປອ່ານ :

ແມ່ນຂັ້ນຕອນຕໍ່ເນື່ອງ ຂອງການອ່ານກັບທີ່ ຄູສາມາດຈັດໃສ່ເວລາດຽວກັນໄດ້ ໃນຕາຕະລາງທີ່ວາງອອກ ກ່ອນຈະຢືມປຶ້ມອອກໄປອ່ານ ຕ້ອງມີບັດສະມາຊິກທີ່ທາງຫ້ອງຮັກອ່ານ (ໂຮງຮຽນ) ເປັນຜູ້ອອກໃຫ້

- ໝາຍເຫດ: ບັດສະມາຊິກຂອງຫ້ອງຮັກອ່ານ ສ່ວນໃຫຍ່ ແມ່ນອົງການທີ່ໃຫ້ທຶນ ເປັນຜູ້ຈັດພິມແລະແຈກຢາຍໃຫ້ ໃນເບື້ອງຕົ້ນ, ໃນກໍລະນີທີ່ໃຊ້ໝົດ ແມ່ນສາມາດນຳບັດຢືມທີ່ເຕັມແລ້ວແລກປ່ຽນກັບບັດສະມາຊິກໄດ້ ຫຼື ຈະພິມເອົາເອງກໍໄດ້. ລາຍລະອຽດເພີ່ມເຕີມກະລຸນາເບິ່ງຕາຕະລາງ ທີ 1 ທ້າຍປຶ້ມຫົວນີ້.

3.1 ວິທີການເປັນສະມາຊິກຂອງຮັກອ່ານ

ຜູ້ຮັບຜິດຊອບ ຕ້ອງບັນທຶກຂໍ້ມູນຂອງຜູ້ທີ່ເປັນສະມາຊິກໃສ່ ປຶ້ມບັນທຶກສະມາຊິກ ດັ່ງຕົວຢ່າງລຸ່ມນີ້ :

ວັນ, ເດືອນ, ປີ ອອກບັດ	ເລກທີ ບັດ	ຊື່ ແລະ ນາມ ສະກຸນ	ຊັ້ນຮຽນ	ໂຮງຮຽນ	ບ້ານຢູ່	ເມືອງ	ໂທລະ ສັບ


ຫຼັງຈາກນັ້ນຈຶ່ງອອກບັດສະມາຊິກໃຫ້. ບັດສະມາຊິກມີກຳນົດການນຳໃຊ້ ໃນໄລຍະ 1 ປີ, ໃນກໍລະນີ ບັດເຕັມ ຜູ້ຮັບຜິດຊອບຫ້ອງຮັກອ່ານ

ຈະປ່ຽນໃບໃໝ່ໃຫ້ກໍໄດ້ ຫຼືຈະໃຊ້ເຈ້ຍຂາວ ອັດສຳເນົາບັດສະມາຊິກ ແລ້ວຄັດຕິດໃສ່ບັດເກົ່າກໍໄດ້

ຂໍ້ແນະນຳ :


- ຄະນະອຳນວຍການໂຮງຮຽນ ຄວນປຶກສາຫາລືກັບ ສະມາຄົມພໍ່ແມ່ນັກຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ (ຖ້າມີ) ເພື່ອພິຈາລະນາກ່ຽວກັບການເກັບຄ່າທຳນຽມ (ພັນທະປະຈຳປີ) ໂດຍຮວມເອົາຄ່າທຳນຽມອອກບັດສະມາຊິກຫ້ອງຮັກອ່ານເຂົ້ານຳ ເພື່ອໃຫ້ນັກຮຽນ ແລະຄູທຸກໆຄົນ ພາຍໃນໂຮງຮຽນໄດ້ມີສິດໃນການອ່ານ ແລະ ຢືມປຶ້ມໄປອ່ານຢູ່ເຮືອນ, ບໍ່ຕ້ອງລໍຖ້າໃຫ້ນັກຮຽນຕື່ນຕົວ ມາສະໝັກເອງ ເຊິ່ງມັກມີບັນຫາຄວາມບໍ່ຕື່ນຕົວ ຫຼື ນັກຮຽນຢ້ານ ຈົນບໍ່ກ້າມາເຮັດບັດສະມາຊິກ ແລ້ວເສຍໂອກາດສຳຄັນໃນຊີວິດໄປ

ຕົວຢ່າງບັດສະມາຊິກ :



ບັດສະມາຊິກຈະມີ 4 ໜ້າ ດັ່ງສະແດງໄວ້ໃນຮູບດ້ານຂວາ

ບັດສະມາຊິກທີ່ສົມບູນ ຈະມີການຈ້ຳຂອງໂຮງຮຽນ ຫຼື ການຂອງຫ້ອງການທີ່ ດຳເນີນງານຫ້ອງສະໝຸດ (ຊ້າຍ) ບັດສະມາຊິກທີ່ມີການນຳໃຊ້ (ຂວາ)



3.2 ການບໍລິການໃຫ້ຢືມເມື່ອອ່ານເຮືອນ

ເມື່ອນັກຮຽນເລືອກໄດ້ປຶ້ມທີ່ຈະຢືມແລ້ວ ສິ່ງທີ່ຄູຜູ່ໃຫ້ບໍລິການຫ້ອງອ່ານຕ້ອງເຮັດ ມີດັ່ງນີ້ :

- ຂຽນວັນທີກຳນົດສົ່ງໃສ່ເຈ້ຍກຳນົດສົ່ງ: ປົກກະຕິຈະແມ່ນ 3 ວັນ ຮວມທັງວັນທີ່ຢືມ ເຊັ່ນ: ຖ້າຢືມວັນທີ 1 ກຳນົດສົ່ງແມ່ນວັນທີ 3. ເຮົາຕ້ອງຂຽນວັນທີ ໃສ່ເຈ້ຍກຳນົດສົ່ງ ເພື່ອເຕືອນຄວາມຈຳຜູ່ທີ່ຢືມໄປ ວ່າຄວນຈະເອົາມາສົ່ງມື້ໃດ ອີກທັງເມື່ອເຂົາເຈົ້າເອົາມາສົ່ງ ຜູ່ຮັບຜິດຊອບຫ້ອງອ່ານ ຈະສາມາດຊອກຫາບັດສະມາຊິກ ໄດ້ງ່າຍ ຈາກວັນທີ ທີ່ຂຽນໄວ້ຢູ່ເຈ້ຍກຳນົດສົ່ງ ເຊິ່ງຈະຕິດຢູ່ນຳປຶ້ມຕະຫຼອດ.
- ຈົດບັນທຶກໃນບັດເຫຼືອງ: ຖອດບັດເຫຼືອງອອກຈາກຊອງ, ຂຽນວັນທີຢືມ ໃສ່ຫ້ອງ "ວັນອອກ" ແລະ ຊື່ຜູ່ຢືມ ໃສ່ໃນຫ້ອງ "ຊື່ຜູ່ຢືມໜ້າສີ", ຈ່ຶງຫ້ອງ "ວັນເຂົ້າ" ໄວ້ຂຽນມື້ປຶ້ມຖືກສົ່ງ ແລ້ວເກັບມ້ຽນໄວ້ກັບບັດ ສະມາຊິກຂອງຜູ່ທີ່ຢືມ.


- ຈົດບັນທຶກໃນບັດສະມາຊິກ: ຂຽນວັນກຳນົດສົ່ງ ໃສ່ຫ້ອງກຳນົດສົ່ງ ແລະ ຈຳນວນປຶ້ມທີ່ຢືມ ໃສ່ຫ້ອງ "ຈຳນວນປຶ້ມທີ່ຢືມ" ເຊັ່ນ ຖ້າເດັກຢືມ 2 ຫົວ ກໍພຽງຂຽນເລກ 2 ໃສ່.

ຮູບຕົວຢ່າງການຂຽນບັດເຫຼືອງ ແລະ ບັດສະມາຊິກ




- ຫຼັງຈາກຈົດຂໍ້ມູນຕ່າງໆ ໃສ່ບັດຢືມ ແລະ ບັດສະມາຊິກແລ້ວ ກໍຂັດໃສ່ກັນໄວ້ ແລ້ວເກັບມ້ຽນເປັນໝວດໝູ່ ເພື່ອຄວາມສະດວກໃນການຮັບປຶ້ມຄືນ. ການເກັບມ້ຽນທີ່ນິຍົມກັນ ມີ 2 ແບບ ຄື ເກັບມ້ຽນຕາມວັນທີກຳນົດສົ່ງ ຄືບັດທີ່ມີວັນທີກຳນົດສົ່ງ ເຊັ່ນ 1, 2, ຫຼື 3 ກໍເອົາໄວ້ໃນ ກັບ ຫຼື ຫ້ອງຕາມວັນທີນັ້ນ ແລະ ຕາມຕົວອັກສອນຂຶ້ນຕົ້ນຊື່ ເຊັ່ນ ທ້າວ ສຸກສັນ ຫຼື ນາງ ໄກ່ແກ້ວ ກໍເອົາໄວ້ໃນກັບ ຫຼື ຫ້ອງ ອັກສອນ ສ ຫຼື ກ ຕາມລຳດັບ. ຢ່າລືມ ນັບຈຳນວນຄົນທີ່ຢືມປຶ້ມໃນວັນດັ່ງກ່າວ ໂດຍນັບເອົາບັດສະ

ມາຊິກ 1 ບັດແມ່ນ 1 ຄົນຢືມ ແລະ ຈຳນວນບັດເຫຼືອໆ ແມ່ນຈຳນວນປຶ້ມທີ່ຖືກຢືມ ເພື່ອຈົດບັນທຶກສະຖິຕິ.



ຕົວຢ່າງການມ້ຽນບັດ ຕາມອັນກຳນົດສີ່ງ (ເທິງ) ແລະ ຕາມອັກສອນ (ລຸ່ມ)



- ການຮັບ-ສົ່ງ: ເມື່ອເດັກເອົາປຶ້ມມາສົ່ງ ຖ້າເຮົາເກັບມ້ຽນບັດຕາມວັນ ທີ ການົດສົ່ງ ໃຫ້ເປີດເບິ່ງວັນທີ ໃນເຈ້ຍການົດສົ່ງ ແລ້ວໄປ ຊອກເອົາບັດຕາມນັ້ນ ຕົວຢ່າງ: ຖ້າວັນທີ ສຸດທ້າຍໃນນັ້ນ ຂຽນວ່າ 3/3/2012 ກໍໃຫ້ໄປຊອກຢູ່ ກັບ ຫຼື ຫ້ອງ ວັນທີ 3 ເປັນຕົ້ນ. ຖ້າເຮົາເກັບມ້ຽນບັດຕາມຕົວອັກສອນ ກໍໃຫ້ຖາມຊື່ເດັກ ແລ້ວຊອກ ເອົາບັດຢູ່ກັບ ຫຼື ຫ້ອງ ຕາມຕົວອັກສອນນັ້ນ. ໄດ້ບັດມາແລ້ວ ໃຫ້ກວດກາເບິ່ງວ່າ ປຶ້ມທີ່ເອົາມາສົ່ງກັບບັດນັ້ນຖືກກັນແລ້ວບໍ່ ມີຈຸດ ທີ່ຈະໄດ້ເອົາໃຈໃສ່ຄື ເລກທະບຽນ, ຊື່ເລື່ອງ ແລະ ຊື່ຜູ່ແຕ່ງ ຢູ່ບັດຢືມ ແລະ ຊອງໃສ່ບັດຢືມຖືກກັນແລ້ວບໍ່ ຖ້າຖືກກັນແລ້ວ ກໍຂຽນວັນທີ ທີ່ເດັກເອົາປຶ້ມມາສົ່ງ ໃສ່ຫ້ອງ “ວັນເຂົ້າ” ຂອງບັດຢືມ, ເອົາບັດຢືມໃສ່ໃນຊອງ ແລ້ວເອົາປຶ້ມໄວ້ ແລະ ເຊັນຊື່ຂອງຜູ່ຮັບຜິດ ຊອບໃສ່ຫ້ອງ “ຜູ່ຮັບ” ຂອງບັດສະມາຊິກ, ສົ່ງບັດສະມາຊິກນັ້ນໃຫ້ ເຈົ້າຂອງ ເພື່ອໃຊ້ຢືມປຶ້ມຄັ້ງຕໍ່ໄປ ເທົ່ານີ້ກໍສຳເລັດຢ່ຽບຮ້ອຍ (ດັ່ງທີ່ ໄດ້ຂຽນໄວ້ ໃນບົດທີ 3 ວ່າ ຈະບອກປະໂຫຍດຂອງ ຊອງແລະບັດ ຢືມ ບັດນີ້ ທ່ານຜູ່ອ່ານ ຄືຈະເຫັນແລ້ວ ເນາະ).




ຄຳແນະນຳ:

ແນ່ນອນວ່າໃນລະຫວ່າງການບໍລິການ ໂດຍສະເພາະການຢືມ ແລະ ສົ່ງ ຈະສ້າງຄວາມລຳບາກ ແລະ ເປັນພາລະ ແກ່ຜູ້ຮັບຜິດຊອບຫ້ອງອ່ານ ບໍ່ຫຼາຍກໍໜ້ອຍ ແຕ່ຖ້າທ່ານອ່ານປຶ້ມເຫຼັ້ມນີ້ມາແຕ່ຕົ້ນ ໂດຍສະເພາະໃນບົດທີ 2 ທ່ານຈະເຫັນວ່າ ມີເຕັກນິກຫຼາຍແບບ ທີ່ຊ່ອຍແບ່ງເບົາພາລະການເຮັດວຽກຂອງຜູ້ຮັບຜິດຊອບຫ້ອງອ່ານ ວິທີໜຶ່ງທີ່ເປັນມາດຕະຖານທີ່ສຸດ ແມ່ນ ການມີນັກຮຽນຊ່ອຍວຽກ ແລະ ໃນໂຕຈິງ ນັກຮຽນທັງຮຸ່ນນ້ອຍຮຸ່ນໃຫຍ່ ສາມາດຊ່ອຍວຽກທ່ານໄດ້ຢ່າງມີປະສິດທິພາບ ທັງການຈັດຢືມ, ຮັບສົ່ງປຶ້ມ ການຈັດປຶ້ມເຂົ້າມ້ຽນ ແລະ ອື່ນໆ ແຕ່ແນ່ນອນວ່າຕ້ອງຢູ່ພາຍໃຕ້ການກວດກາ ແລະ ຊີ້ນຳຈາກຜູ້ໃຫຍ່ ເຊິ່ງກໍຄື ຄູຜູ້ຮັບຜິດຊອບຫ້ອງອ່ານເຮົານັ້ນເອງ.

ບັນຫາໃຫຍ່ທີ່ພົບມາຕະຫຼອດ ໃນວຽກງານສົ່ງເສີມການອ່ານ ແມ່ນ ເມື່ອປຶ້ມເສຍ ຫຼື ຂາດຫຼາຍ ຄູຈະອັດຫ້ອງອ່ານໄປເລີຍ, ໃຫ້ທ່ານຄິດຄືນຄັກໆວ່າ ຫ້ອງອ່ານມີໄວ້ເພື່ອຫຍັງ ປຶ້ມເສຍ ປຶ້ມຂາດ ເຮົາພິມໃໝ່ໄດ້ ທ່ານຂໍໃໝ່ໄດ້ ຊື້ໃໝ່ໄດ້ ແຕ່ເດັກທີ່ເສຍໂອກາດການໄດ້ສຳຜັດກັບປຶ້ມ ກັບການອ່ານ ເຂົາເຈົ້າເສຍໂອກາດ ທີ່ຈະໄດ້ພັດທະນາໂຕເອງ ເສຍໂອກາດການຮຽນຮູ້ ເຊິ່ງບໍ່ມີໃຜສ້າງໃໝ່ໄດ້, ຂໍ ຫຼື ຊື້ນຳໃຜກໍບໍ່ໄດ້.

ພຽງທ່ານປະຕິບັດຕາມລະບຽບທີ່ແນະນຳໄປ ເຊື່ອວ່າການບໍລິການຫ້ອງອ່ານຈະຟົດຟື້ນ ແລະ ມີປະສິດທິພາບຂຶ້ນ ແນ່ນອນ. ສຳຄັນທີ່ສຸດແມ່ນ *ທ່ານ, ໃຫ້ນັກຮຽນຢືມປຶ້ມຖ່ອນ ຖ້າທ່ານເປັນຄູ ທີ່ຮັກລູດສິດ.*



IV. ການຂຽນບົດລາຍງານ :

ເພື່ອເປັນການຢັ້ງຢືນຜົນງານ ແລະ ການເຄື່ອນໄຫວ ຂອງຜູ້ຮັບຜິດຊອບຫ້ອງຮັກອ່ານ ຕໍ່ຜູ້ໃຫ້ການອຸປະຖຳ ແລະ ການຈັດຕັ້ງ

ຮ່າງ

ບົດລາຍງານຂອງ ຫ້ອງຮັກອ່ານ ເລກທີ. . . . . .

ປະຈຳເດືອນ. . . . . .ພາກຮຽນ ທີ. . . . . ສົກຮຽນ. . . . . .

ຂໍ້ມູນໂຮງຮຽນ		
ໂຮງຮຽນ.		
ບ້ານ.	ເມືອງ.	ແຂວງ. . . . .
ມີນັກຮຽນ. . . . . .ຄົນ ຍິງ. . . . . .ຄົນ		ມີຄູສອນ. . . . . .ຄົນ ຍິງ. . . . . .ຄົນ
ມີຫ້ອງຮຽນ. . . . . .ຫ້ອງ		
ປໍ ກຽມ . . . . . .ຫ້ອງ ປໍ 1. . . . . .ຫ້ອງ ປໍ 2. . . . . .ຫ້ອງ ປໍ 3. . . . . .ຫ້ອງ ປໍ 4. . . . . .ຫ້ອງ ປໍ 5. . . . . .ຫ້ອງ		ມໍ 1. . . . . .ຫ້ອງ ມໍ 2. . . . . .ຫ້ອງ ມໍ 3. . . . . .ຫ້ອງ ມໍ 4. . . . . .ຫ້ອງ ມໍ 5. . . . . .ຫ້ອງ ມໍ 6 . . . . . .ຫ້ອງ ມໍ 7. . . . . .ຫ້ອງ
ຂໍ້ມູນຫ້ອງອ່ານ		
ປະຈຸບັນມີປຶ້ມທັງໝົດ. . . . . .ຫົວ ຈຳນວນເລື່ອງ. . . . . .ເລື່ອງ		
ການບໍລິການ		
ເວລາໃນການເປີດຫ້ອງອ່ານ	☐ ມີຕາຕະລາງ ☐ ເປີດເວລາເລີກຫຼິ້ນ ☐ ເປີດທຸກວັນ ເລີ່ມ. . . . . ຫາ. . . . . .ໂມງ ☐ ເປີດບາງວັນ ☐ ຈັນ ☐ ອັງຄານ ☐ ພຸດ ☐ ພະຫັດ ☐ ສຸກ	

ຜູ້ຊ່ວຍອຸ່ງກຫ້ອງອ່ານ	☐ ນັກຮຽນ. . . . . .ຄົນ, ຊ່ວຍ . . . . ☐ ຄູ. . . . . .ຄົນ, ຊ່ວຍ . . . .
ປະຈຸບັນມີສະມາຊິກຫ້ອງອ່ານ. . . . . .ຄົນ	
ພາກສ່ວນອື່ນທີ່ມາເປັນສະມາຊິກ. . . . . .ຄົນ	
ບັດຢືມທີ່ຖືກນຳໃຊ້ຈົນເຕັມມີ. . . . . .ບັດ	

ການເກັບກຳສະຖິຕິການອ່ານ

ເດືອນ	ອ່ານກັບທີ່	ຢືມໄປອ່ານ	ປຶ້ມເສຍ	ປຶ້ມຂາດ	ສ້ອມແປງປຶ້ມ
ກັນຍາ					
ຕຸລາ					
ພະຈິກ					
ທັນວາ					
ມັງກອນ					
ກຸມພາ					
ມີນາ					
ເມສາ					
ພຶດສະພາ					
ມິຖຸນາ					

ກິດຈະກຳສົ່ງເສີມການອ່ານ

☐ ຫຼິ້ນລະຄອນ. . . . . .ຄັ້ງ/ອາທິດ

☐ ເລົ່ານິທານ . . . . . .ຄັ້ງ/ອາທິດ

☐ ຮ້ອງເພງປະກອບທ່າທາງ. . . . . ຄັ້ງ/ອາທິດ

☐ ຫຼິ້ນເກມ. . . . . .ຄັ້ງ/ອາທິດ

☐ ບໍ່ໄດ້ເຮັດ

☐ ຜົນດີໃນການນຳໃຊ້ຫ້ອງຮັກອ່ານ

. . . . . .

. . . . . .

. . . . . .

. . . . . .

☐ ຂໍ້ສະເໜີ

. . . . . .

. . . . . .

. . . . . .

. . . . . .

ທີ່. . . . . ., ວັນທີ. . . . . .

ລາຍງານໂດຍ
ຜູ່ຮັບຜິດຊອບຫ້ອງຮັກອ່ານ


ຢັ້ງຢືນໂດຍ
ຜູ່ອຳນວຍການໂຮງຮຽນ

ບົດທີ 5

ສ້ອມແປງປັ໊ມ

ຮູບ: ສະມິຕາ ພື້ນອາດອາສາ





I. ອຸປະກອນ:

ເຈ້ັ້ຍຂາວ ແລະ ເຈ້ັ້ຍສີ ຂະໜາດ A4 (ແຂ້ງ), ກາວ, ສະກ່ອດຜ້ າ, ສະກ່ອດເຈ້ັ້ຍ, ສະກ່ອດໃສ, ເຂັ້ມ, ດ້ ານ (ດ້ ານສ ານແຫ ລ ້ ງ 12), ໝ ອນ, ເຫ ລ ັ ກຊ ີ, ມ ີ ດຕ ັ ດ ແລ ະ ຄ ັ ດເ ຕ ີ.




II. ການສ້ອມແປງປຶ້ມແບບງ່າຍດາຍ

ປຶ້ມທຸກຫົວທີ່ຈະທຳການສ້ອມແປງ ຕ້ອງກວດຈຳນວນໜ້າເສຍກ່ອນ ວ່າຄົບແລ້ວບໍ່. ປຶ້ມທີ່ຂາດຈະຕ້ອງສ້ອມແປງມີ 2 ແບບໃຫຍ່ໆ ທີ່ມັກພົບເຫັນຄື:

2.1 ສຳລັບປຶ້ມບາງ:

- ກວດກາຈຳນວນໜ້າຂອງປຶ້ມໃຫ້ຄົບ ແລ້ວນຳໃຊ້ເຫລັກຊິ່ມາເຈາະຮູ ຢູ່ເພິ່ກາງ ເປັນ 3 ຮູ (ຖ້ານຳລະນີປຶ້ມຍາວໃຫ້ເຈາະເປັນ 4 ຮູ).
- ໃຊ້ດ້າຍຫຍິບຕາມຮູທີ່ເຈາະ ໂດຍສອດແຕ່ເທິງລົງລຸ່ມຂອງຮູທີສອງ ແລ້ວຂຶ້ນມາຮູທີໜຶ່ງ ຫລັງຈາກນັ້ນ ສອດລົງຮູທີສາມ ແລ້ວຂຶ້ນມາ ຮູທີສອງ ມັດຢູ່ຮູທີສອງໃຫ້ແໜ້ນໆ ແລ້ວນຳໃຊ້ສະກ໋ອດຜ້າມາຕິດສັນ ໄປຕາມລວງຍາວຂອງປຶ້ມ.
- ສຳລັບສະກ໋ອດເຈ້ັ ໃຫ້ໃຊ້ຕິດຍຶດໜ້າປຶ້ມ ກັບປົກປຶ້ມດ້ານໃນ ທັງໜ້າ ແລະຫຼັງ ເພື່ອຍຶດປຶ້ມໃຫ້ແໜ້ນຕື່ມ.



2.2 ສຳລັບປຶ້ມໜາ:

- ກວດກາຈຳນວນໜ້າຂອງປຶ້ມໃຫ້ຄົບ ແລ້ວນຳໃຊ້ເຫລັກຊີ່ມາເຈາະຮູຢູ່ສັນປຶ້ມ ເປັນ 3 ຮູ (ຖ້ານຳລະນີປຶ້ມຍາວໃຫ້ເຈາະເປັນ 4 ຮູ).
- ໃຊ້ດ້າຍຫຍິບຕາມຮູທີ່ເຈາະ ໂດຍສອດແຕ່ເທິງລົງລຸ່ມຂອງຮູທີສອງ ແລ້ວຂຶ້ນມາຮູທີໜຶ່ງ ຫລັງຈາກນັ້ນ ສອດລົງຮູທີສາມ ແລ້ວຂຶ້ນມາຮູທີສອງ ມັດຢູ່ຮູທີສອງໃຫ້ແໜ້ນໆ ແລ້ວນຳໃຊ້ສະກ໋ອດຜ້າມາຕິດສັນໄປຕາມລວງຍາວຂອງປຶ້ມ.
- ໃນກໍລະນີໜ້າປົກ ແລະ ຫລັງປົກຂາດອອກຈາກກັນ ຫລັງຈາກຫຍິບແລ້ວໃຫ້ເອົາເຈ້ຍຂາວອ່ອນຂະໜາດຊ່ຳປຶ້ມທີ່ສ້ອມຢູ່ ໃຊ້ກາວຕິດໃສ່ແຄມສັນປຶ້ມທາງດ້ານໜ້າ ແລະ ດ້ານຫລັງ ຈາກນັ້ນເອົາເຈ້ຍໜ້າປົກ



ແລະ ຫລັງປົກປຶ້ມທີ່ຂາດອອກນັ້ນ ມາທາກາວ ແລ້ວຕິດທັບໃສ່ເຈ້ຍ ຂາວອ່ອນ ປະໄວ້ໃຫ້ກາວແຫ້ງ ແລ້ວໃຊ້ສະກ່ອດຜ້າຕິດສັນ ໄປຕາມ ລວງຍາວຂອງປຶ້ມ.

- ສຳລັບສະກ້ອດເຈ້ຍ ໃຫ້ໃຊ້ຕິດຍຶດໜ້າປຶ້ມ ກັບປົກປຶ້ມດ້ານໃນ ທັງໜ້າ ແລະຫຼັງ ເພື່ອຍຶດປຶ້ມໃຫ້ແໜ້ນຕື່ມ.

2.3 ສິ່ງຄວນເອົາໃຈໃສ່:

- ທັງປຶ້ມບາງ ແລະ ໜາ ຖ້າໜ້າປົກ ຫລັງປົກເສຍ ຫລື ຈີກຂາດ ຈົນ ບໍ່ສາມາດນຳໃຊ້ຄືນໄດ້ອີກ ໃຫ້ເອົາເຈ້ຍແຂງມາເປັນໜ້າປົກ ແລະ ຫລັງປົກແທນ ແລ້ວຂຽນຊື່ເລື່ອງໃສ່ໜ້າປົກ.
- ຫລັງຈາກສ້ອມແປງແລ້ວໆ ຕ້ອງນຳມາລົງທະບຽນຄືນ (ຕິດສັນ, ຊອງ, ກຳນົດສົ່ງໃຫ້ຄົບ) ໂດຍອີງໃສ່ເລກທະບຽນທີ່ບັນທຶກມາກ່ອນນັ້ນ.



ພາກທີ 2

ກິດຈະກຳ
ສິ່ງເສີມການອ່ານ




ບົດທີ 6

ປຶ້ມອ່ານເຮັດຫຍັງໄດ້ແດ່

ຮູບ: ແສງສຸລິ ກັດຕິຍະສັກ







I. ທ່ານຄິດແນວໃດ

ເວລາມີໃຜບອກທ່ານວ່າ "ປຶ້ມອ່ານຫົວໜຶ່ງ ໃຊ້ໄດ້ຮ້ອຍແບບອ່ານໄດ້ພັນຄົນ" ທ່ານຄິດແນວໃດ?

"ເວົ້າໂຜດ","ພິລຶກຫຼາຍ","ເວົ້າຫຍັງກະໃຫ້ມັນເຮັດໄດ້ແທ້ແດ່" "ປຶ້ມມັນກະມຸ່ນກ່ອນຕີ" ...

ບໍ່ແປກດອກ ຖ້າທ່ານຈະຄິດແນວນັ້ນ...


ແຕ່ແທ້ໆແລ້ວ ຜູ່ທີ່ເວົ້າປະໂຫຍກນີ້ ອາດມີຈຸດປະສົງພຽງເພື່ອໂຄສະນາ ວ່າປຶ້ມນັ້ນມີປະໂຫຍດຫຼາຍແທ້ໆ ແລະຢາກໃຫ້ປຶ້ມແຕ່ລະຫົວເປັນປະໂຫຍດຕໍ່ຄົນນັບພັນຄົນ (ຄືຊິແມ່ນຜູ່ເພິ່ນເຮັດວຽກກ່ຽວກັບຫ້ອງສະໝຸດທີ່ເວົ້າແບບນີ້). ຫຼານຊຽງໜ້ຽງບາງຄົນກໍວ່າ "ບໍ່ຍາກຖ້າຊິໃຫ້ປຶ້ມຫົວໜຶ່ງໄດ້ອ່ານພັນຄົນ ທໍ່ແຕ່ເອົາປຶ້ມຫັ້ນໄປເລົ່ານິທານປະກອບປຶ້ມ ໃຫ້ເດັກນ້ອຍ ຈັກສິບໂຮງຮຽນຟັງ ກໍໄດ້ກາຍພັນແລ້ວ" ວ່າຊັ້ນກໍມີ. ແຕ່ອັນທີ່ບໍ່ຢາກໃຫ້ມີ ແມ່ນ ມີປຶ້ມພັນຫົວຢູ່ໃນຫ້ອງອ່ານຂອງໂຮງຮຽນ ແຕ່ມີຄົນດ້ານສິບທີ່ຮູ້ວ່າໂຮງຮຽນໂຕກໍມີຫ້ອງອ່ານແລະໄດ້ອ່ານປຶ້ມເຫຼົ່ານັ້ນ. ທ່ານຜູ່ອ່ານລອງໃຫ້ໂອກາດກັບ "ປຶ້ມອ່ານ" ຈັກໜ່ອຍ ໃຫ້ມັນໄດ້ພິສູດວ່າມັນເຮັດຫຍັງເພື່ອທ່ານໄດ້ແດ່ ໂດຍການຄ່ອຍອ່ານມັນຢ່າງພິຈາລະນາ ແລະຄົ້ນຄິດໄປພ້ອມວ່າ "ປຶ້ມອ່ານ" ຫົວນັ້ນ ໜ້າຈະມີປະໂຫຍດຫຍັງກັບທ່ານ ຫຼືທ່ານຈະເອົາມັນໄປເປັນເຄື່ອງມືເຮັດຫຍັງໄດ້ແດ່?

II. "ປຶ້ມອ່ານ" ຂອງຂ້າພະເຈົ້າ

ດ້ວຍປະສົບການແລະສະຕິປັນຍາອັນຈຳກັດຂອງຂ້າພະເຈົ້າ ເທົ່າທີ່ຕົນເຄີຍທົດລອງປະຕິບັດມາ ເຫັນວ່າ ນອກຈາກການເປັນປຶກ ເຈ້ຮ ທີ່ມີໂຕໜັງສືພິມຢູ່ແລ້ວ ສິ່ງທີ່ "ປຶ້ມອ່ານ" ຍັງພໍເປັນໄດ້ຕື່ມກໍມີເຊັ່ນ:

1. ເປັນໝອນໜູນຫົວ ຍາມຢາກນອນ
2. ເປັນຮົ່ມກັ້ງກັນແດດ
3. ເປັນເຊື້ອອ່ອຍໄຟຍາມສຸກເສີນ
4. ເປັນກະເປົ໋າເງິນຍາມຢາກເຊື່ອງສາຍຕາໃຜບາງຄົນ
5. ເປັນວິ
6. ເປັນໄມ້ຄ້ອນແບບອ່ອນນອມ (ເຫັນຜູ່ສາວມັກໃຊ້ຕີຜູ່ບ່າວ)
7. ເປັນອາພອນປະດັບເອ້,ອັນນີ້ແມ່ນປະສົບການສ່ວນໂຕແທ້ໆຮູ້ສຶກ ວ່າ ເວລາຍ່າງໄປໃສ ຫຼືນັ່ງຖ້າໃຜຢູ່ ຖ້າຖືປຶ້ມອ່ານຈັກຫົວພ້ອມ ແລ້ວຄືຈັ່ງວ່າໂຕເອງເດັ່ງຂຶ້ນ ໜ້ານັບຖືຂຶ້ນຫຼາຍ.





III. ປະໂຫຍດຂອງ "ປຶ້ມອ່ານ" ຈາກທັດສະນະຂອງໃຜຫຼາຍໆຄົນ

ອັນທີ່ເວົ້າໄປກ່ອນນີ້ ຊິວ່າຢອກກໍຢອກ ຊິວ່າແທ້ກໍແທ້ ຄັນນັບຮວມປະໂຫຍດເຫຼົ່ານີ້ນຳ ກໍຮອດຮ້ອຍແນ່ນອນ.


ບາດນີ້ມາວ່າກັນຈິງໆຈັງໆ ເລື່ອງວ່າປຶ້ມອ່ານເຮັດຫຍັງໄດ້ແດ່ນັ້ນ ມີນັກປາດອາຈານ ໃຫ້ທັດສະນະ ໃຫ້ຄວາມຄຶດໄວ້ຫຼາຍ ເຊັ່ນວ່າ: ດາຣາ ກັນລະຍາ ສິລະປິນແຫ່ງຊາດ ສາຂາອັນນະຄະດີ ເລົ່າວ່າ ເມື່ອຕອນເພິ່ນສູນເສຍຄູ່ຊີວິດໄປນັ້ນ ການອ່ານປຶ້ມ ຊ່ວຍໃຫ້ຈິດໃຈເພິ່ນສະຫງົບ ແລະ ເຂົ້າໃຈຊີວິດຫຼາຍຂຶ້ນ ເຖິງວ່າເພິ່ນຈະໄດ້ອ່ານປຶ້ມມາຫຼາຍຕະຫຼອດໄລຍະຊີວິດຂອງເພິ່ນ ແຕ່ໃນສະຖານະການນັ້ນ ກໍຄົງປ່ວງໄປບໍ່ໜ້ອຍ ຖ້າບໍ່ມີ "ປຶ້ມອ່ານ ເປັນໝູ່".

ມະຫາສິລາ ວີຣະວົງ ສິລະປິນແຫ່ງຊາດອີກທ່ານໜຶ່ງ ກໍຂຽນໄວ້ໃນປຶ້ມ ປະໂຫຍດຂອງອັນນະຄະດີ (1996, ໜ້າ 25) ວ່າ: "...ຄົນເຮົາຖ້າຮູ້ແຕ່ວິຊາອາຊີບຢ່າງດຽວ ເຖິງວ່າຈະຮູ້ເລິກແລບກວ້າງຂວາງປານ

ໃດກໍຕາມ ຖ້າເປັນຄົນບໍ່ມັກອ່ານອັນນະຄະດີແລ້ວ ກໍຈະເປັນຄົນໃຈແຄບ ເຫັນແກ່ຕົວ ເມົາມົວຢູ່ກັບແຕ່ວຽກງານອັນກ່ຽວຂ້ອງກັບຊີວິດໃນທາງດຽວ ບໍ່ຫຼຽວເຫັນຊີວິດອັນແທ້ຈິງຂອງຕົນ ກໍເລີຍເກີດເປັນຄົນທີ່ມີນິໄສໜັກໄປໃນຄວາມໂລບ ມີຄວາມຢາກໄດ້ແຕ່ຝ່າຍດຽວ..."

ສິວກາບທ໌ ປທຸມສູຕ (ສິວະກາບ ປະທຸມມະສູດ) ນັກການສຶກສາ ທີ່ມີຜົນງານການຂຽນຂຽນປຶ້ມ ກ່ຽວກັບການສຶກສາ ຫຼາຍຫົວໃນ ປະເທດໄທ ກ່າວໄວ້ໃນປຶ້ມ ເດັກອ່ານບໍ່ອອກ ຂຽນບໍ່ໄດ້ ແກ້ງ່າຍໜ້ອຍດຽວ ໜ້າ 18 ວ່າ: " . . . ເມື່ອບໍ່ອ່ານໜັງສືແນວສ້າງສັນ ກໍຄິດສ້າງສັນລຳບາກ ຈຶ່ງເຮັດວຽກກັນຕາມແບບລະບົບ ຕາມຄຳສັ່ງຕາມທີ່ເຄີຍໆເຮັດກັນມາ . . . "

ໃນເວລາລະດົມຄວາມຄິດກັບຄູອາຈານຈາກຫຼາຍໆໂຮງຮຽນ ຫຼາຍໆ ວິທີນຳໃຊ້ "ປຶ້ມອ່ານ" ກໍອອກມາເຊັ່ນ:



- ເອົາໄວ້ອ່ານ (ອັນນີ້ແນ່ນອນຢູ່ແລ້ວ)
- ໃຊ້ເລົ່ານິທານປະກອບປຶ້ມ (ພື້ນຖານສຸດໆ)
- ເອົາເລື່ອງຈາກປຶ້ມໄປເລົ່ານິທານປາກເປົ່າ (ບາດໃຫ້ເລົ່າແທ້ລະ ຈັກວ່າເອົາເລື່ອງທາງໃດມາ)
- ເອົາປຶ້ມເພງໄວ້ແອບຮ້ອງເພງ (ມັກສຸດໆ)
- ປຶ້ມກາບເອົາໄວ້ພາເຊີ້ງ (ອັນນີ້ກໍມັກ)
- ປຶ້ມກອນໄວ້ແອບລຳ (ສ່ວນຫຼາຍເຫັນແຕ່ເວົ້າ)
- ອ່ານແລ້ວເອົາໄປຫຼິ້ນລະຄອນ (ຢາກໃຫ້ເຮັດແທ້ໆເດ໋)


ທ່ານຜູ່ອ່ານທີ່ຮັກແພງ ດັ່ງທີ່ໄດ້ບອກແຕ່ຕົ້ນແລ້ວວ່າ ລອງໃຫ້ໂອກາດກັບ "ປຶ້ມອ່ານ" ຈັກໜ່ອຍ ໃຫ້ມັນໄດ້ພິສູດວ່າມັນເຮັດຫຍັງເພື່ອທ່ານໄດ້ແດ່.


ໝາຍເຫດ: ປະໂຫຍດໜຶ່ງຂອງປຶ້ມອ່ານ ທີ່ໃຊ້ກັນຫຼາຍທີ່ສຸດ ແຕ່ບໍ່ມີໃຜກ້າເວົ້າອອກມາ ນັ້ນຄື: **ເອົາໄວ້ກ່າຍຍາມເສັ້ງ** ...

ບົດທີ 7

ການນຳສະເໜີ

ຮູບ: ສະມິຕາ ພື້ນອາດອາສາ





I. ບົດນຳ

"ການນຳສະເໜີ" ຫຼືເອີ້ນອີກຄຳໜຶ່ງວ່າ "ການໂຄສະນາ" ໂດຍຄວາມໝາຍກໍຄື ການເຮັດໃຫ້ສິ່ງໃດສິ່ງໜຶ່ງເປັນທີ່ຮູ້ຈັກ ໄດ້ຮັບຄວາມສົນໃຈກ້າວໄປຫາ ການເປັນທີ່ນິຍົມຂອງຄົນຈຳນວນຫຼາຍ. ເປົ້າໝາຍຂອງການນຳສະເໜີປຶ້ມ ຫຼື ການໂຄສະນາປຶ້ມ ກໍແມ່ນເຮັດໃຫ້ຫຼາຍຄົນໄດ້ຮູ້ຈັກສົນໃຈຢາກອ່ານປຶ້ມຫົວນັ້ນ.

ເປັນຫຍັງຈຶ່ງຄວນ(ຕ້ອງ)ມີກິດຈະກຳການນຳສະເໜີປຶ້ມ ຢູ່ໃນຫ້ອງຮັກອ່ານ ຫຼື ຫ້ອງສະໝຸດ?

ຖ້າທ່ານສັງເກດພຶດຕິກຳຂອງສະມາຊິກຫ້ອງຮັກອ່ານທີ່ທ່ານຮັບຜິດຊອບ ທ່ານຄືຈະເຫັນວ່າເດັກນ້ອຍທຸກຄົນມັກອ່ານ ແຕ່ເກືອບທັງໝົດມັກອ່ານແຕ່ປຶ້ມຫົວບໍ່ໜາປານໃດ ປະມານສີ່ສິບໜ້າລົງມາ. ເປັນເລື່ອງທຳມະດາທີ່ເດັກຈະເລີ່ມຕົ້ນການອ່ານ ດ້ວຍປຶ້ມປະກອບຮູບງາມໆ ຂະໜາດ 16-40 ໜ້າ ແລະກໍເປັນທຳມະດາຄືກັນ ທີ່ເດັກທຸກຄົນຈະມີຄວາມຜູກພັນກັບປຶ້ມຫົວໃດໜຶ່ງທີ່ໂຕມັກເປັນພິເສດ ເຊັ່ນ ສະມາຊິກຫ້ອງຮັກອ່ານບາງຄົນ ເຄີຍຢືມປຶ້ມກ່ຳພ້າກັບຜີນ້ອຍໄປອ່ານແລ້ວ ຜ່ານໄປສອງອາທິດຫຼືເດືອນໜຶ່ງ ກໍມາຢືມປຶ້ມກ່ຳພ້າກັບຜີນ້ອຍອີກ. ສິ່ງເຫຼົ່ານີ້ບໍ່ແມ່ນບັນຫາເດີ້.

ແຕ່... ໃນຖານະຜູ່ຮັບຜິດຊອບຫ້ອງຮັກອ່ານ ຫຼື ໃນຖານະຄູຄົນໜຶ່ງກໍດີ ການພັດທະນາການອ່ານຂອງເດັກ ກໍແມ່ນໜ້າທີ່ສຳຄັນຂອງເຮົາ. ພັດທະນາການອ່ານ ໃຫ້ເດັກກ້າທີ່ຈະຈັບປຶ້ມຫົວໃດໆກໍຕາມຂຶ້ນອ່ານ ບໍ່ວ່າຂະ

ໜາດປຶ້ມ ນ້ອຍໃຫຍ່ ໜາບາງຊ່ຳໃດ ວ່າແຕ່ແມ່ນເລື່ອງທີ່ເຂົາສົນໃຈ.

ກິດຈະກຳການນຳສະເໜີປຶ້ມ ຈະທຳລາຍຂອບເຂດທີ່ຖືກຈຳກັດ ແລະ ເປີດໂລກການອ່ານໃຫ້ກວ້າງຂຶ້ນຕື່ມ **ເຮັດຖ້ອນ ຖ້າທ່ານຮັກລູກສິດ**.

II. ການນຳສະເໜີປຶ້ມ

2.1 ວິທີການ

ການນຳສະເໜີປຶ້ມ ແທ້ໆນັ້ນ ບໍ່ໄດ້ມີວິທີທີ່ຕາຍໂຕ ແຕ່ພໍສັງຮວມໄດ້ 3 ຮູບແບບ ເຊິ່ງມັກຈະຖືກໃຊ້ ດັ່ງນີ້:

- **ເລົ່າເລື່ອງບໍ່ສຸດ**: ເປັນວິທີເຊິ່ງຖືກໃຊ້ຫຼາຍທີ່ສຸດ ມີວິທີການຄື ຈັບປຶ້ມຂຶ້ນມາໃຫ້ເປົ້າໝາຍ (ເດັກ) ໄດ້ເຫັນໜ້າປົກປຶ້ມ ຈາກນັ້ນກໍເລີ່ມເລົ່າເລື່ອງໂດຍຫຍໍ້ ອາດເປີດຮູບໃຫ້ເດັກເບິ່ງນຳແດ່, ພໍຮອດຕອນສຳຄັນເລື່ອງກຳລັງຕື່ນເຕັ້ນ ໃຫ້ເຊົາເລົ່າ ແລ້ວບອກເປົ້າໝາຍວ່າ ຖ້າຢາກຮູ້ວ່າເລື່ອງຕໍ່ໄປຈະເປັນແນວໃດ ໃຫ້ເອົາປຶ້ມຫ້ອນີ້ໄປອ່ານຕໍ່ເດີ້.
- **ເອົາຈຸດທີ່ໜ້າສົນໃຈມາສະເໜີ**: ຄືການຈັບເອົາຈຸດໃດຈຸດໜຶ່ງໃນເລື່ອງທີ່ເຫັນວ່າໜ້າສົນໃຈ ແລະຈະຕຳໃຈເປົ້າໝາຍມາເວົ້າ ເຊັ່ນ: "ພວກນ້ອງຮູ້ບໍ່ວ່າໂຕໜູເກີດລູກປີໜຶ່ງຈັກເທື່ອ" (ປະໃຫ້ເປົ້າໝາຍຄິດ ແລະ ຕອບ) "ໃນປຶ້ມເລື່ອງມ່ວນໆຂອງສັດຫ້ອນີ້ (ຈັບປຶ້ມຂຶ້ນໃຫ້ເປົ້າໝາຍເຫັນໜ້າປົກ) ເພິ່ນບອກວ່າ ໜູເກີດລູກປີລະສິບສອງເທື່ອພຸ້ນໄດ໋" (ພັກປຶດໜຶ່ງ ເບິ່ງປະຕິກິລິຍາຂອງເປົ້າໝາຍ) "ແລ້ວຢາກຮູ້ບໍ່ວ່າ ປາສະຫຼາມໃຫຍ່ທີ່ສຸດຊ່ຳໃດ, ປາວານເດ, ເລື່ອງຂອງມົດ ຊ້າງ ເສືອ ກັບສັດອີກຫຼາຍໆຊະນິດ, ລອງເອົາປຶ້ມຫ້ອນີ້ໄປອ່ານເບິ່ງເດີ້." ຕ້ອງຈຳແນກໃຫ້ຄັກລະຫວ່າງ ການຈັບເອົາຈຸດສຳຄັນມາເວົ້າ ກັບ ການເລົ່າເລື່ອງ.
- **ໃຊ້ປັດໄຈ(ນອກເລື່ອງໃນປຶ້ມ)ມາດຶງຄວາມສົນໃຈ ຫຼື ໃສ່ໄຟ**: ອາດຈະເປັນຄຳເວົ້າຂອງບຸກຄົນສຳຄັນ, ຮາງວັນທີ່ປຶ້ມເລື່ອງນັ້ນໄດ້ຮັບ, ໂຕຜູ່ຂຽນປຶ້ມ ແລະອື່ນໆ. ຕົວຢ່າງ: "ນ້ອງຮູ້ຈັກຫຍັງແດ່ ທີ່ເປັນມໍລະດົກຂອງຊາດລາວເຮົາ?" (ປະເດັກຕອບ) "ເຈົ້າ ນ້ອງໆຢາກເຫັນ

ຫຼວງພະບາງບໍ່ (ຢ່າຖາມເດັກນ້ອຍຢູ່ຫຼວງພະບາງ)" ... "ຢາກເຫັນວັດພູ ບໍ? ທາດຫຼວງເດ" ... "ແຕ່ຄູບໍ່ມີລົດພາໄປນະ ບາດໃຫຍ່ມາມີເງິນລະຈັ່ງ ໄປເອງເນາະ ແລ້ວມາຮັບເອົາຄູແດ່ເດີ້..." (ຢຸດຫັນໃຈຍາວບາດໜຶ່ງ) "ແຕ່ມື້ນີ້ ຄູມີມໍລະດົກຂອງຊາດລາວອັນໜຶ່ງ ທີ່ທຸກຄົນສາມາດ ເບິ່ງໄດ້ ຈັບໄດ້ ຊື່ນຊົມໄດ້, ສິ່ງນັ້ນຄື..." (ຍົກປຶ້ມສັງສິນໄຊ ຂຶ້ນໃຫ້ເປົ້າໝາຍ ເຫັນໜ້າປົກແລະອ່ານຊື່)"ເຈົ້າແມ່ນແລ້ວດຽວນີ້ລັດຖະບານເຮົາໄດ້ຈົດ ທະບຽນເອົາ ຄຳກອນເລື່ອງ ສັງສິນໄຊ ເປັນມໍລະດົກດ້ານວັດທະນະທຳ



ຂອງຊາດລາວແລ້ວ ແປວ່າເປັນສິ່ງທີ່ງົດງາມທີ່ຄົນລາວທຸກຄົນຕ້ອງ ຊ່ວຍກັນຮັກສາ.ແລ້ວເຮົາຊິເຮັດແນວໃດຈັ່ງຊິຮັກສາມໍລະດົກອັນນີ້ ໄວ້ໄດ້?" (ຢຸດຄາວໜຶ່ງໃຫ້ເດັກໄດ້ຄຶດ) "ບໍ່ຄືທາດຫຼວງໄດ໋, ຮັກສາ ທາດຫຼວງ ແມ່ນເຮົາຕ້ອງຮັກສາຄວາມສະອາດ ແລະບໍ່ໃຫ້ໃຜໄປທຸບ

ໄປມ້າງ ແຕ່ຮັກສາສັງສິນໄຊບໍ່ແມ່ນຈັ່ງຊັ້ນ ບໍ່ແມ່ນເອົາປຶ້ມເຂົ້າຕູ້ ໃສ່ກະແຈໄວ້ລະວ່າໂຕຮັກສາມໍລະດົກແຫ່ງຊາດໄດ້. ປຶ້ມຂາດເພີ່ນພິມ ໃໝ່ໄດ້ ແຕ່ການຮັກສາວັນນະຄະດີເລື່ອງສັງສິນໄຊ ແມ່ນພວກເຮົາ ທຸກຄົນຕ້ອງອ່ານໃຫ້ຮູ້ ອ່ານໃຫ້ເຂົ້າໃຈ ອ່ານຈົນຈື່ໄດ້. ຕ່າງປະເທດມາ ຖາມວ່າ ສັງສິນໄຊ ແມ່ນຂອງລາວບໍ່ ໃຫ້ຕອບເຂົາໄດ້ ເລົ່າກອນໃຫ້ເຂົາ ຟັງພ້ອມ ຈັ່ງແມ່ນ. ຄັນຮັກສາແຕ່ປຶ້ມໄວ້ ແຕ່ເຮົາບໍ່ຮູ້ວ່າ ກອນສັງສິນໄຊ ເປັນແນວໃດ ກອນຈັກແຖວໜຶ່ງກະບໍ່ຮູ້ຈັກ ແບບນັ້ນ ຕ່າງປະເທດເຂົາ ກະຊິເອົາໄປອ່ານ ເອົາໄປເລົ່າຈົນໄດ້ ແລ້ວກະອ້າງໄດ້ວ່າ ສັງສິນໄຊ ແມ່ນຂອງເຂົາໂລດແລ້ວ.”(ຫາຍໃຈຍາວບາດໜຶ່ງ)“ຊິຍອມໃຫ້ເຂົາບໍ?” (ຟັງຄຳຕອບຂອງເປົ້າໝາຍ) “ຊັ້ນກະຕ້ອງເອົາໄປອ່ານເດີ້...” ໃນຊ່ວ ໂມງນັ້ນຖ້າພາກັນອ່ານແລະເລົ່າກອນໃຫ້ໄດ້ຈັກບາດໜຶ່ງ ແຮ່ງດຶງໃຈ ເປົ້າໝາຍໄດ້ຕື່ມ.

2.2 ເຮັດແນວໃດຈຶ່ງຈະສະເໜີປຶ້ມໄດ້ດີ?



ຖາມ: ເຮັດແນວໃດຈຶ່ງຈະເລົ່າເລື່ອງໄດ້ດີ ແລະຮູ້ວ່າຈະຢຸດບ່ອນໃດ ເປົ້າໝາຍ ຈຶ່ງສົນໃຈຢາກອ່ານປຶ້ມຫົວນັ້ນ?
ຕອບ: ທ່ານກໍຕ້ອງ ອ່ານ ປຶ້ມຫົວນັ້ນຫຼາຍໆເທື່ອ ຈົນກຳເລື່ອງໄດ້ໝົດ.
ຖາມ: ເຮັດແນວໃດຈຶ່ງຈະຮູ້ວ່າປຶ້ມຫົວນັ້ນມີຈຸດໃດທີ່ສຳຄັນໜ້າສົນໃຈ ແລະ ຈະຕຳໃຈເປົ້າໝາຍ?
ຕອບ: ອ່ານ ຫຼາຍໆ ແລ້ວທ່ານຈະຮູ້ເອງ.
ຖາມ: ເຮັດແນວໃດ ຈຶ່ງຈະຮູ້ວ່າ ປຶ້ມນັ້ນ ເລື່ອງນັ້ນ ມີຄວາມສຳຄັນຂະໜາດ ໃດ?
ຕອບ: ອ່ານ ຫຼາຍໆ

ບໍ່ມີວິທີໃດອີກແລ້ວ ມີພຽງວິທີນີ້ເທົ່ານັ້ນ ຖ້າທ່ານຢາກນຳພາກິດຈະ ກຳໃດໆ ທີ່ກ່ຽວກັບການອ່ານ ທ່ານກໍຕ້ອງ “ອ່ານ” ກ່ອນ.

III. ຄຳແນະນຳ


ການນຳສະເໜີປຶ້ມແບບທີ່ມັກສຳນຶກພາບເຫັນກັນແມ່ນ ຄູນຳສະເໜີ ປຶ້ມໃຫ້ເດັກນັກຮຽນຫຼາຍຄົນຟັງ. ແຕ່ໃນຄວາມເປັນຈິງແລ້ວ ຍັງມີແບບອື່ນ ອີກເຊັ່ນ: ແບບສອງຕໍ່ສອງກັບນັກຮຽນ, ເມື່ອນັກຮຽນມາຢືມປຶ້ມ ຄູສາມາດ ຈັບປຶ້ມຫົວໜຶ່ງ (ທີ່ຄູພິຈາລະນາແລ້ວວ່ານັກຮຽນຄົນນັ້ນຄວນອ່ານ) ມາໂຄ ສະນາໃຫ້ນັກຮຽນຄົນນັ້ນຢືມເມື່ອ ໝາຍຄວາມວ່າ ນຳສະເໜີປຶ້ມແບບສະ ເພາະເຈາະຈົງແຕ່ລະຄົນໄປເລີຍ ເປັນການຊ່ວຍເດັກເລືອກປຶ້ມ ແລະ ຍົກ ລະດັບການອ່ານຂອງເດັກ. ຫຼື ສຳລັບກຸ່ມເດັກທີ່ຜ່ານການອ່ານມາຫຼາຍແລ້ວ ຄູສາມາດຈັດກິດຈະກຳໃຫ້ເດັກນັ່ງເປັນວົງ ແລະໃຫ້ແຕ່ລະຄົນເລົ່າເຖິງປຶ້ມທີ່ ໂຕເອງມັກ.


ລອງເບິ່ງ! ເຮັດຖ້ອນ ຖ້າທ່ານຮັກລູກສິດ !

ບົດທີ 8

ພາອ່ານ (ມ່ວນໆ)

ຮູບ: ສະມິຕາ ໝື່ນອາດອາສາ







I. ບົດນຳ

ຂໍອະນຸຍາດເວົ້າຄືນ ເລື່ອງທີ່ເວົ້າໄປແລ້ວໃນບົດກ່ອນໜ້ານີ້ ອັນທີ່ວ່າ "ຄົນລາວບໍ່ມັກອ່ານ" ຜູ່ຂຽນໄດ້ຕັ້ງບັນຫາວ່າ ແມ່ນ "ຄົນລາວ" ຫຼື "ຜູ່ໃຫຍ່ລາວ" ທີ່ບໍ່ມັກອ່ານ. ໃນບົດນີ້ ຢາກຕັ້ງອີກບັນຫາໜຶ່ງຕື່ມດັ່ງນີ້:

ກ່ອນຈະເປັນຜູ່ໃຫຍ່ ທຸກຄົນລ້ວນເຄີຍເປັນເດັກມາກ່ອນ ແລະໝາກຜົນຂອງປະສົບການໃນໄວເດັກ ເຮັດໃຫ້ເຮົາເປັນຜູ່ໃຫຍ່ ດັ່ງທີ່ເຮົາເປັນທຸກມື້ນີ້. ຊັ້ນເດັກນ້ອຍເມື່ອ 20 ປີ ຄືນຫຼັງ ເຂົາມີປະສົບການແນວໃດກັບການອ່ານ ຈຶ່ງເຮັດໃຫ້ເຂົາເຕີບໃຫຍ່ຂຶ້ນມາເປັນ "ຜູ່ໃຫຍ່ບໍ່ມັກອ່ານ" ? ປະສົບການແບບໃດທີ່ເຮົາຄວນມອບໃຫ້ເດັກທຸກມື້ນີ້ ຖ້າເຮົາຢາກໃຫ້ ອີກ 20 ປີ ຕ່ຳໜ້າ ມີ "ຜູ່ໃຫຍ່ມັກອ່ານ" ຫຼາຍໆ.

ອ່ານປຶ້ມຫວາ? ບໍ່ເຫັນຊິ່ມ່ວນ ເຈັບຫົວ...

ການອ່ານ... ບໍ່ມ່ວນ...

ຫຼື... ເຮົາບໍ່ໄດ້ອ່ານໃຫ້ມ່ວນ...?

ຄຶດຮອດນີ້ ສຽງຂອງໃຜບາງຄົນທີ່ພວມອ່ານໜັງສືແບບ "ໄກ່(ຢຸດ) ນ້ອຍ(ຢຸດ) ໂຕ(ຢຸດ) ໜຶ່ງ(ຢຸດ) ມີ(ຢຸດ) ຊື່(ຢຸດ) ວ່າ(ຢຸດ) ລາຍ(ຢຸດ) ອ່ອມ(ຢຸດ) ອ້ອຍ(ຢຸດ)...(ຢຸດ)" ດັງແວ່ວຢູ່ໃນຫົວ, ຕໍ່ດ້ວຍສຽງອ່ານແບບໄວໆ ຄືຈັ່ງບໍ່ທັນໃຈ, ແລະສຸດທ້າຍ ກໍແມ່ນສຽງລະຄອນຂອງວິທະຍຸກະຈາຍສຽງແຫ່ງຊາດ. ເຊື່ອວ່າທ່ານທີ່ພວມອ່ານຢູ່ ມີຄຳຕອບແລ້ວວ່າ ສຽງໃດມ່ວນ. ທັງສາມສຽງລ້ວນແມ່ນ "ການອ່ານ"

ແຕ່ຄວາມແຕກຕ່າງຂອງການອ່ານທັງສາມແບບແມ່ນ ມ່ວນ ຫຼື ບໍ່ມ່ວນ.

ຖ້າຢາກໃຫ້ເດັກມີປະສົບການທີ່ດີກັບການອ່ານ ເຮົາຈະອ່ານແບບໃດໃຫ້ເຂົາຟັງ? ຈະພາເຂົາອ່ານແບບໃດ? ຄັນຊັ້ນ ເຮົາມາທົດລອງພາເດັກອ່ານມ່ວນໆເບິ່ງດຸ ບາງເທື່ອອີກ 20 ປີ ຕໍ່ໜ້າ ຊິມີ "ຜູ່ໃຫຍ່ມັກອ່ານ" ຫຼາຍໆ.

II. ຂັ້ນຕອນ ພາອ່ານມ່ວນໆ

2.1 ຄູກຽມຕົວ

ເປັນຂັ້ນຕອນທີ່ສຳຄັນທີ່ສຸດ! ຈະພານັກຮຽນອ່ານມ່ວນໆ ຄູຕ້ອງອ່ານໃຫ້ມ່ວນໆ ສາກ່ອນ. ແອບອ່ານຫຼາຍໆເທື່ອ ຈົນຮູ້ວ່າບ່ອນໃດຄວນເນັ້ນສຽງໃຫ້ໜັກແໜ້ນ, ແຮງຂຶ້ນ ຫຼື ຄ່ອຍລົງ. ບໍ່ມີວິທີອື່ນໃດ ທີ່ຈະແອບອ່ານໃຫ້ມ່ວນໄດ້ດີໄປກວ່າ "ອ່ານຫຼາຍໆ". ອ່ານຫຼາຍເລື່ອງ, ອ່ານເລື່ອງດຽວຫຼາຍຮອບ, ອ່ານອອກສຽງ ຟັງເອງວິຈານໂຕເອງ, ອ່ານໃຫ້ຄົນອື່ນຟັງ ແລະຂໍຄຳເຫັນ. ຖ້າຈະເວົ້າບ່ອນສຸດແທ້ໆ ກໍແມ່ນວ່າ ຈະໃຫ້ນັກຮຽນມີປະສົບການທີ່ດີກັບການອ່ານ ຄູຂອງເຂົາກໍຕ້ອງແມ່ນ "ຄົນຮັກອ່ານ".

2.2 ພາອ່ານ

- ຖ້າເຮັດກິດຈະກຳໃນຫ້ອງຮຽນ ໃຫ້ນັ່ງຢູ່ໂຕະໃຜມັນແບບທຳມະດາ ຖ້າຈະເຮັດເປັນກິດຈະກຳໃນຫ້ອງອ່ານ ໃຫ້ນັ່ງເປັນວົງມົນ.
- ຢາຍປຶ້ມເລື່ອງດຽວກັນໃຫ້ຄົນລະຫົວ ຫຼື ຢ່າງໜ້ອຍໂຕະລະຫົວ.
- ບອກໜ້າທີ່ຈະອ່ານໃຫ້ເດັກເປີດໄປຫາ ຫຼື ບອກຊື່ເລື່ອງ (ໃນກໍລະນີປຶ້ມມີຢູ່ຫລາຍເລື່ອງນຳກັນ) ແລ້ວໃຫ້ເດັກຊອກວ່າຢູ່ໜ້າໃດ ກໍໄດ້ບັນຍາກາດດີ.
- ຄູເລີ່ມອ່ານ (ຕ້ອງອ່ານໃຫ້ມ່ວນໆໆ) ອາດຈະອ່ານຍາວແດ່ ຈົນໝົດຫຍໍ້ໜ້າໜຶ່ງເລີຍກໍໄດ້.
- ຊີ້ໃຫ້ນັກຮຽນອ່ານຕໍ່, ໃນການອ່ານຕໍ່ກັນແບບນີ້ຈະໃຊ້ວິທີເລືອກນັກຮຽນ


ແບບສຸ່ມ ຄືບ່ລຽນຕາມແຖວ ຄູຢາກຊີ້ໃສ່ໃຜກໍໄດ້ ຂ້າມໄປຂ້າມມາ ບ່ໃຫ້ນັກຮຽນຮູ້ໂຕວ່າຈະໄດ້ອ່ານຕອນໃດ ເຮັດແບບນີ້ເພື່ອໃຫ້ເດັກ ຕັ້ງໃຈຕິດຕາມ.

- ປະມານສິບນາທີຕ່ໍມາ ໃຫ້ບອກວ່າ "ຢຸດພັກກັນບຶດໜຶ່ງເນາະ" ຕ່ໍດ້ວຍ "ອ່ານໄດ້ມ່ວນດີເນາະ ຫາກຮອບຕ່ໍໄປອ່ານໃຫ້ມ່ວນຂຶ້ນອີກໄດ້ບ່ໍ" ພາ ນັກຮຽນຫັນໃຈຍາວໆສາມບາດ ແລ້ວຄູເລີ່ມອ່ານຕ່ໍຈາກທີ່ອ່ານຄ້າງໄວ້ (ຢ່າລືມວ່າຕ້ອງອ່ານໃຫ້ມ່ວນໆ)
- ອ່ານຕ່ໍກັນໄປເລື້ອຍໆ ໃຊ້ວິທີແບບສຸ່ມຄືເກ່ົາ. ດໍາເນີນການອ່ານຕ່ໍ ໄປອີກປະມານ 20 ນາທີ ຫຼືຈົນສຸດເລື່ອງ ແຕ່ກໍບ່ຄວນອ່ານດົນກວ່າ 30 ນາທີ ເພາະເດັກຈະເລີ່ມເບື່ອ ຖ້າບ່ໍສຸດເລື່ອງ ກໍໂຈະໄວ້ອ່ານຕ່ໍຄັ້ງໜ້າ.
- ສໍາລັບເດັກປະຖົມ ໃຫ້ຍ້ອງວ່າ "ອ່ານມ່ວນເນາະ ມື້ໜ້າອ່ານກັນອີກ ເອົາ ໃຫ້ຄັກໆ ມ່ວນໆກວ່າເກ່ົາເນາະ"
- ເດັກມັດທະຍົມ ໃຫ້ພາຖອດຖອນບົດຮຽນ ດ້ວຍຄໍາຖາມວ່າ: ເປັນແນວ ໃດອ່ານມື້ນີ້? ຄູອ່ານເປັນແນວໃດ? ມື້ນີ້ມ່ວນແລ້ວລະ ຫາກຄັນຊິອ່ານ ໃຫ້ມ່ວນກວ່ານີ້ ຕ້ອງເຮັດແນວໃດ? ມື້ໜ້າມາອ່ານນໍາກັນອີກເນາະ.



2.3 ສ້າງປະສົບການທີ່ດີກັບການອ່ານ

ໂດຍນຳການອ່ານມ່ວນໆ ຂຶ້ນມາໃນປາງບຸນຕ່າງໆຂອງໂຮງຮຽນ. ແມ່ນຢູ່ວ່າ ມີການອ່ານສານອວຍພອນໃນບາງງານ ເຊັ່ນວັນຄູ ແຕ່ການອານນັ້ນ ຍັງບໍ່ໄດ້ໃຫ້ຄວາມສຳຄັນກັບການອ່ານໃຫ້ມ່ວນໆເທື່ອ. ລອງຄຶດເຖິງກຸ່ມນັກຮຽນຂຶ້ນເທິງເວທີ ອ່ານປົດປະພັນມ່ວນໆຕໍ່ກັນ ຫຼື ອ່ານກອນເປັນກຸ່ມ ສຽງກ້ອງວານ ມີອາລົມຈິດ ມີດົນຕີເບົາໆລອດພື້ນ ກິດຈະກຳສ້າງສັນແບບນີ້ ຈະສັນສ້າງສີສັນໃຫ້ປາງບຸນຂອງໂຮງຮຽນທ່ານ ຊ່ຳໃດ.



III. ຄຳແນະນຳ

- ການໃຫ້ຢຸດອ່ານ ເພື່ອໃຫ້ຄົນອື່ນອ່ານຕໍ່ນັ້ນ ມີຂໍ້ຄວນລະວັງ ຄື ຕ້ອງຢຸດຕອນສຸດປະໂຫຍກ ການສັ່ງໃຫ້ຢຸດປະໂຫຍກຈະສ້າງຄວາມສັບສົນໃຫ້ຜູ່ອ່ານ ເສຍບັນຍາກາດໃນການອ່ານ ເຮັດໃຫ້ການອ່ານນັ້ນບໍ່ມ່ວນ.
- ກິດຈະກຳນີ້ບໍ່ແມ່ນຈະເຮັດດ້ວມເທື່ອສອງເທື່ອ ຕ້ອງໝັ່ນເຮັດ ແມ່ນແທ້ແລ້ວ ຄູສາມາດອ່ານມ່ວນໆໃຫ້ນັກຮຽນຟັງໄດ້ທຸກໂອກາດ ແລະ ທຸກວິຊາ ແລະ ເປັນເລື່ອງທີ່ຄູຈຳຕ້ອງເຝິກທັກສະການອ່ານ ໃຫ້ມ່ວນແລ້ວ ການສອນຂອງທ່ານ ຈະງ່າຍຂຶ້ນຫຼາຍ.
- ຖ້າຍັງສົງໄສວ່າ ອ່ານມ່ວນໆເປັນແບບໃດ ຂໍໃຫ້ຮື່ນຕອງເອົາຄຳເວົ້າດັ່ງນີ້:ອ່ານບົດວັນນະຄະດີ ຄືກັບລະຄອນວິທະຍຸ, ອ່ານບົດຄວາມວິທະຍາສາດ ຄືເປັນນັກພາກສາລະຄະດີ.
- ເຕັກນິກເພີ່ມເຕີມກ່ຽວກັບການອ່ານ ຮ້ອຍແກ້ວ, ກາບ ແລະ ກອນ ມ່ວນໆ ອ່ານຕື່ມໄດ້ໃນປຶ້ມ "ຄູ່ມື ສອນພາສາລາວ ແບບມ່ວນໆ" ຈັດພິມໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ຮ່ວມກັບກົມສ້າງຄູ ປີ 2011 ເຊິ່ງ ຖ້າໂຮງຮຽນທ່ານ ໄດ້ຮັບປຶ້ມທີ່ທ່ານພວມອ່ານຢູ່ນີ້ ປຶ້ມ ຄູ່ມື ສອນພາສາລາວ ແບບມ່ວນໆ ກໍຕ້ອງມີຢູ່ໃນຫ້ອງອ່ານຂອງທ່ານເຊັ່ນກັນ.


ເຮົາຮັກ(ອ່ານ)ບໍ່ໄດ້ ຫຼື ບໍ່ໄດ້ພະຍາຍາມຈະຮັກ(ອ່ານ)?



ບົດທີ 9

ເລົ່ານິທານປາກເປົ່າ

ຮູບ: ແສງສຸລິ ກັດຕິຍະສັກ



ການເລົ່ານິທານ ແມ່ນສິລະປະອັນເກົ່າແກ່ຂອງໂລກ. ຊົນຊາດລາວ ບັນດາເຜົ່າກໍມີປະເພນີເລົ່ານິທານ ສູ່ກັນຟັງມາແຕ່ບູຮານ. ບາງຊົນເຜົ່າ ເຊັ່ນ ເຜົ່າມົ້ງ ເຜົ່າກຶມມຸ ມີນິທານເລົ່າປາກເປົ່າຫລາຍຮ້ອຍເລື່ອງ. ຍ້ອນການເລົ່ານິທານເປັນສິລະປະທີ່ບໍ່ຮຽກຮ້ອງອຸປະກອນ ຫຼື ເຄື່ອງປະກອບ ແຕ່ຢ່າງໃດ ຈຶ່ງຖືວ່າ ໃຜກໍສາມາດເລົ່ານິທານໄດ້. ເມື່ອເລົ່າເກັ່ງແລ້ວ ກໍຈະເກີດຄວາມຊໍານານຈົນ ປະດິດແຕ່ງເລື່ອງໃໝ່ຂຶ້ນ.

ໃນທາງການສຶກສາ ເພິ່ນຖືວ່າ ການໃຫ້ເດັກຟັງນິທານຫຼາຍໆ ແຕ່ຍັງນ້ອຍ ຈະຊ່ອຍໃຫ້ເດັກ ມີສະມາທິ ຮູ້ຟັງ ທັງໄດ້ຮັບຄວາມມ່ວນຊື່ນ ແລະ ຜ່ອນຄາຍອາລົມ. ນອກຈາກນີ້ ເມື່ອຟັງໄປຫຼາຍໆ ຈະຮູ້ຈັບໃຈຄວາມຂອງເລື່ອງ ເກີດຈິນຕະນາການ ແລະ ຢາກຖ່າຍທອດ ຢາກເລົ່າເຖິງສິ່ງທີ່ຕົນຮູ້ເຂົ້າໃຈ ແລະ ຈື່ຈໍາ. ນັ້ນແມ່ນພັດທະນາການທາງດ້ານພາສາ ຄືເດັກໄດ້ຄໍາສັບຫຼາກຫຼາຍ ແລະ ຮູ້ຈັກເລົ່າຫຼືສະຫລຸບເຫດການ. ໝາຍຄວາມວ່ານິທານຊ່ອຍປັບປຸງ ຄຸນນະພາບການສຶກສາໄດ້. ນັກການສຶກສາໃຫ້ຮູ້ວ່າ ເດັກນ້ອຍຖ້າໄດ້ຟັງນິທານກ່ອນນອນ ຄືນລະ 2 - 4 ເລື່ອງ ແຕ່ອາຍຸ 2 - 5 ຂວບ ເຂົາຈະກາຍເປັນເດັກໃຝ່ການຮຽນ ແລະ ມີສັນຊາຕະຍານແຫ່ງການ ກຸ້ມຕົນເອງໃນການຮຽນຮູ້ ໄປຕະຫຼອດຊີວິດ. ສະນັ້ນ ໃນໄວຮຽນປະຖົມສຶກສາ ຄູຄວນສົ່ງເສີມການອ່ານ ດ້ວຍການເລົ່ານິທານ ໃຫ້ນັກຮຽນຟັງ ແລະ ເຝິກແອບໃຫ້ນັກຮຽນເລົ່ານິທານ ເປັນນໍາອີກ.

ການເລົ່ານິທານ ແບບທີ່ເກົ່າແກ່ທີ່ສຸດ ແມ່ນເລົ່າປາກເປົ່າ. ແຕ່ສະໄໝນີ້ໄດ້ມີການພັດທະນາຫຼາຍ ມີການສະແດງທ່າທາງປະກອບ ເພື່ອໃຫ້ເດັກສົນໃຈ ແລະ ຕິດຕາມ.

I. ຈຸດປະສົງ

ຈຸດປະສົງຂອງການເລົ່ານິທານ ແມ່ນ:

1. ຢາກໃຫ້ເດັກ ໄດ້ຮັບຄວາມມ່ວນຊື່ນ, ເຝິກແອບການຟັງ, ມີສະມາທິ, ມີລະບຽບວິໄນ.
2. ໃຫ້ເດັກຮູ້ລຳດັບເລື່ອງທີ່ໄດ້ຟັງ, ຈັບໃຈຄວາມສຳຄັນໄດ້ ຈົນສາມາດ ເລົ່າຄືນໄດ້.
3. ເດັກເຂົ້າໃຈບົດບາດຂອງຕົວລະຄອນ ຮູ້ວ່າ ຕອນໃດຕື່ນເຕັ້ນ, ມ່ວນ, ໂສກ, ເລິກລັບ, ເປັນຕາຢ້ານ, ເປັນຕາຫົວ ເຊິ່ງເປັນທຳມະຊາດຂອງ ມະນຸດ.ອາລົມເລົ່ານີ້ຈະຊ່ອຍພັດທະນາເດັກໄປໃນຕົວ ເພາະເລື່ອງທີ່ ໄດ້ຟັງນັ້ນມີອັນໃກ້ຊິດກັບຕົວເຂົາ ໂດຍສະເພາະຖ້າຕົວລະຄອນເປັນ ເດັກຄືກັນ ກໍແຮ່ງຈະຜູກພັນນຳ, ເຮັດໃຫ້ເດັກເກີດຈິນຕະນາການໄປ ຫຼາຍ, ຮູ້ຈັກຄິດ, ແຕ່ງ, ເວົ້າ ແລະ ເລົ່າເລື່ອງເປັນ.
4. ໃຫ້ເດັກໄດ້ຮຽນທັກສະຊີວິດຈາກນິທານຊຶ່ງສ່ວນຫຼາຍກໍມີຄະຕິສອນ ໃຈ, ສອນຄຸນນະທຳ, ຈະລິຍະທຳ, ສິນທຳ, ຄວາມຮັກ, ຄວາມກະຕັນຍູ ແລະ ອື່ນໆ (ຕົວຢ່າງ: ເລື່ອງ ເປັດນ້ອຍຂອງສົມປອງ, ລີງນ້ອຍ ກັບຫາງວິເສດ ແລະ ອື່ນໆ). ຈາກການຟັງນິທານ ເຂົາເຈົ້າຈະຮູ້ ຈຳແນກ ວ່າໃຜດີ-ໃຜຊົ່ວ, ອັນໃດຄວນເຮັດ-ບໍ່ຄວນເຮັດ.

II. ການກະກຽມ

2.1 ເລືອກເລື່ອງທີ່ເໝາະສົມອາຍຸຂອງນັກຮຽນ.

ນິທານທີ່ເໝາະກັບເດັກອະນຸບານ ປ.1 ປ.2 ຄວນເປັນເລື່ອງ ສັ້ນໆ ພາສາງ່າຍດາຍ ບໍ່ສັບສົນເຊັ່ນ ຊອກຫາຫາງແມ່, ລີງນ້ອຍກັບຫາງວິເສດ, ແບ້ສາມອ້າຍນ້ອງ, ຫົວຜັກກາດໃຫຍ່.

ເລື່ອງສຳລັບປ.3, ປ.4, ປ.5 ເປັນເລື່ອງ ຍາວແດ່ເຫດການສັບຊ້ອນ ຂຶ້ນລົງກັບ ຕື່ນເຕັ້ນ ຊວນຄິດ ເຊັ່ນ: ເປັດນ້ອຍຂອງສົມປອງ, ໄກ່ນ້ອຍຕົກຂຸມ,

ກຳພ້າຜີນ້ອຍ, ກຳພ້ານາງງາ, ທ້າວເຕົ່າ, ຜັກກູດຫີນ ແລະ ອື່ນ ໆ ຄວນຫຼີກເວ້ນເລື່ອງທີ່ ມີການຂ້າຟັນກັນ ລະຫວ່າງຄົນໃນຄອບຄົວ, ການຂ້າສັດ, ເລື່ອງທີ່ໃຊ້ສັບຫຍາບ ດ່າຮຸນແຮງ ແລະ ທຸກໆເລື່ອງບໍ່ຄວນສົງເສີ ລະຫວ່າງຊົນເຜົ່າຕ່າງໆບໍ່ດູຖູກເພດຍິງ-ຊາຍ ຫຼືນັກບວດເຊັ່ນວ່າ ພໍ່ເຖົ້າກັບລູກເຂີຍ, ຫົວພໍ່ກັບຈີວນ້ອຍ ແລະ ອື່ນໆ.

ເດັກນ້ອຍໄວນີ້ ຍັງບໍລິສຸດ ຄູຄວນມອບແຕ່ສິ່ງທີ່ດີງາມຂອງຊີວິດໃຫ້ເຂົາເຈົ້າ. ເດັກຮັກຊີວິດ, ຮັກສັດ, ດອກໄມ້, ຕົ້ນໄມ້, ນົກ, ໜູ, ເຂົາພໍໃຈທີ່ຈະຟັງເລື່ອງ ທີ່ທຸກສິ່ງເວົ້າລົມກັນ ຫຼິ້ນນຳກັນ ນັ້ນແມ່ນໂລກແຫ່ງຈິນຕະນາການຂອງເດັກເອງ ຊຶ່ງຜູ້ໃຫຍ່ ບໍ່ມີວັນຈະເຂົ້າໃຈ.



2.2 ກ່ອນຈະເລົ່າ

ຕ້ອງທົບທວນຄືນ ບົດບາດຂອງຕົວລະຄອນ, ໃຫ້ກຳໄດ້ຈິດໃຈຫຼັກຂອງເລື່ອງ ບ່ອນໃດຄວນມີບົດສົນທະນາເພື່ອໃຫ້ເລື່ອງ ມີສີສັນຂຶ້ນຕື່ມ, ບ່ອນໃດສຳຄັນທີ່ສຸດ ຄວນເຮັດສຽງໃຫ້ຕື່ນເຕັ້ນ.

2.3 ຕ້ອງຈື່ເນື້ອເລື່ອງທີ່ຈະເລົ່າ

ແຕ່ຕົ້ນຈົນສຸດຢ່າງເປັນລຳດັບບໍ່ສັບສົນ(ບໍ່ຈຳເປັນທ່ອງເອົາຕາມປຶ້ມ) ຈື່ຊື່ຕົວລະຄອນທີ່ສຳຄັນ.

2.4 ຄວນເລົ່າຕາມໂຄງເລື່ອງທີ່ໄດ້ອ່ານ ຫຼື ຟັງມາ

ບໍ່ສັບໄປສັບມາ ຕ້ອງເຝິກຊ້ອມ ໃຫ້ຄ່ອງແຄ້ວ ລ່ຽນໄຫຼ. ເລົ່າຜິດແກ້ໄດ້.



ຄູ ແລະ ນັກຮຽນ ກຽມຕົວຂຶ້ນເລົ່ານິທານ

III. ການເລົ່ານິທານປາກເປົ່າ ຕໍ່ໜ້ານັກຮຽນ

3.1 ວິທີການເລົ່າ

ມີ ສາມອົງປະກອບ ຄື:

1. ສຽງເລົ່າ ແມ່ນສຳຄັນທີ່ສຸດ ຕ້ອງແຮງ ໃຫ້ໄດ້ຍິນທົ່ວເຖິງກັນ ເວລາເລົ່າ ຕ້ອງເບິ່ງໜ້ານັກຮຽນ ທົ່ວຫ້ອງ ເພື່ອຢາກຮູ້ວ່າ ເຂົາເຈົ້າຕິດຕາມການ ເລົ່າຂອງເຮົາບໍ່ ? ຜູ້ຢູ່ຫຼັງສຸດພຸ້ນ ໄດ້ຍິນດີບໍ່ ? ອາດຈະຕ້ອງຍ່າງເລາະ ໄປແດ່ ແຕ່ບໍ່ຄວນຍ່າງຕະຫຼອດເວລາ.
2. ຄຳເວົ້າຕ້ອງຈະແຈ້ງ, ອອກສຽງໃຫ້ຖືກຕາມ ອັກຂະລະ, ປະໂຫຍກ ບໍ່ໃຫ້ຍາວຫຼາຍ, ຖ້າຈຳເປັນ ອາດເວົ້າຊ້ຳກໍໄດ້ ຕ້ອງເວົ້າແນວໃດໃຫ້ ນັກຮຽນໄດ້ຟັງ ຢ່າງຈະແຈ້ງ ແລະ ທົ່ວເຖິງ.
3. ເວລາເລົ່າ ນ້ຳສຽງ ຕ້ອງ ມີອາລົມໄປຕາມຕິອລະຄອນ (ອາດບໍ່ຈຳເປັນ ປ່ຽນສຽງ, ຖ້າເຮັດບໍ່ໄດ້). ເລົ່າໃຫ້ມີຈັງຫວະ ຊ້າ, ໄວ, ຕື່ນເຕັ້ນ ຊວນ ຕິດຕາມ ອາດຈະເຮັດສຽງປະກອບຂອງສັດ ຫຼື ຄົນ ເຂົ້າໃນເຫດການ ທີ່ເລົ່າ.

3.2 ເຕັກນິກເພີ່ມເຕີມ

ການເລົ່ານິທານໃນສະໄໝນີ້ບາງຄັ້ງມີການສະແດງທ່າທາງປະກອບ (ໃຊ້ສິລະປະຮ່າງກາຍ) ເຊັ່ນ: ຍ່າງຄື ຍັກ, ກົ້ມຄືຜູ້ເຖົ້າ, ເຮັດທ່າຍິງສອນ, ໆລໆ ຫຼື ພຽງແຕ່ ຈັບເອົາກ້ອນຫີນ, ແຜ່ນແພ, ຕາມທີ່ມີໃນເລື່ອງ ມາປະກອບ ໃນການເລົ່າກໍໄດ້. ການເລົ່ານິທານໃນລະດັບແຂ່ງຂັນ ອາດຈະຄ້າຍ ຄື ການ ສະແດງລະຄອນຄົນດຽວ ຄື: ເລົ່າໄປນຳສະແດງໄປນຳ. ສິ່ງສຳຄັນກໍຄືຈະເຮັດ ແນວໃດ ໃຫ້ຜູ້ຟັງ ຕິດຕາມ ສົນໃຈ ຢາກຟັງຕໍ່ (ໃຫ້ຜູ້ຟັງສຳຜັດໄດ້ຈາກການ ເລົ່າວ່າ ຕອນນີ້ເປັນແນວໃດ ຕື່ນເຕັ້ນ, ໜ້າຢ້ານກົວ, ມ່ວນ, ຄັກ, ຫຼື ໂສກເສົ້າ ບໍ?).

3.3 ຄຳແນະນຳ:

1. ການເລົ່ານິທານ ຕ້ອງຖືວ່າ ເຮົາຢາກໃຫ້ເດັກມ່ວນ ເພີດເພີນ ຜ່ອນຄາຍ ແຕ່ໄດ້ສາລະ ຮູ້ເລື່ອງ ໄດ້ຄຳສັບຕື່ມ ແຕ່ບໍ່ແມ່ນ ການສອນວິຊາ ບໍ່ແມ່ນການສົ່ງຄວາມຮູ້ ສະນັ້ນ ຖ້າພໍເຮັດໄດ້ ຄວນໃຫ້ນັກຮຽນຫຍັບ ເຂົ້າຫາໃກ້ໆຄູ ແຫຍ້ກັນແດ່, ຫຼື ອອກໄປສູ່ຮົ່ມໄມ້ໃນເດີ່ນ ໃຫ້ເດັກ ນັ່ງເປັນເຄິ່ງວົງມົນ ຈະໄດ້ບັນຍາກາດ ໃກ້ຊິດ ອົບອຸ່ນ ແລະ ແປກຕ່າງ ຈາກການຮຽນ.
2. ຄູຄວນກຽມຕົວພ້ອມທີ່ຈະເລົ່າ ຄື ສ້າງອາລົມໃຫ້ຕົນເອງ ພໍໃຈເລົ່າ, ຢາກເລົ່າ, ເຮັດໃຫ້ເປັນສິລະປະການສະແດງຂັ້ນໜຶ່ງຢູ່ໃນຕົວ, ໃຫ້ຮັບ ປະກັນຜົນທີ່ຈະໄດ້ຮັບຄື: ຜູ້ຟັງ ເຂົ້າໃຈ ມ່ວນ ສົນໃຈ ແລະ ຕິດຕາມ ຈົນສຸດ. ເມື່ອເລົ່າສຸດ ຫ້າມຖາມນັກຮຽນວ່າ ເຂົ້າໃຈບໍ? ມ່ວນບໍ? ເລື່ອງ ນີ້ຢາກສອນຫຍັງ? ຫ້າມເດັດຂາດ, ຕ້ອງໃຫ້ເດັກ ຄຶດເອງ.
3. ຖ້າຄູມີຄວາມຊຳນານແລ້ວ ເວລາເລົ່າ ໃຫ້ນັກຮຽນມີສ່ວນຮ່ວມນຳ ກໍໄດ້ ເຊັ່ນ: ຕັ້ງຄຳຖາມໃຫ້ຕອບ ໃຫ້ເຮັດສຽງນຳ ຫຼື ອື່ນໆ. ເຜື່ອວ່າ ບາດສຸດທ້າຍແລ້ວ ໃຫ້ສຸດເລີຍ ບໍ່ຕ້ອງຖາມຫຍັງອີກ. ໃນແງ່ສຶກສາ ສາດ ຂັ້ນຕອນນີ້ ແມ່ນໃຫ້ເດັກ ຟັງຕອນສຸດຢ່າງປະທັບໃຈ ຝັງໃຈຢູ່ ບໍ່ໃຫ້ມີຄຳຖາມຂອງຄູມາຮົບກວນ.
4. ຖ້າຄູ ອ່ານນິທານ ໃຫ້ນັກຮຽນຟັງ ແລ້ວເລົ່າດ້ວຍປຶ້ມ(ບົດທີ7)ຫຼາຍໆ ຄັ້ງ ການເລົ່າປາກເປົ່າ ກໍຈະງ່າຍຂຶ້ນ. ນັກເລົ່າ ຄວນຈະເລົ່າໄດ້ສິບ ເລື່ອງຂຶ້ນໄປ. ຕ້ອງຫາໂອກາດເລົ່າເລື້ອຍໆ ແລ້ວຈະເກັ່ງ ແລະ ມີສິລະ ປະຫຼາຍ. ເມື່ອເລົ່າໄປ ຄູຈະມີປະສົບການ ແລະ ພັດທະນາວິທີການເລົ່າ ໄປນຳ. ເລື່ອງດຽວກັນ ແຕ່ອາດເລົ່າໄດ້ຫຼາຍແບບ ເພີ່ມເຕີມສິລະປະ ລີລາເຂົ້າໄປອີກເລື້ອຍໆ. ການເລົ່ານິທານ ສາມາດເປັນການສະແດງ ສິລະປະເວທີໄດ້. ໃນໂລກເພີ່ນກໍຈັດແຂ່ງຂັນຮາງວັນໃຫຍ່ກໍມີຫຼາຍ.

ເອົາລະບາດນີ້ ຄູພ້ອມຫຼືຍັງ

ເລືອກເອົານິທານຈັກເລື່ອງໜຶ່ງແລ້ວ ໄປກຽມຕົວ

ເພື່ອຈະເລົ່າໃນວັນຕໍ່ໄປ ນັກຮຽນຄອງຖ້າຟັງຢູ່ໄດ໋.


ບົດທີ 10

ເລີ່ມໃຊ້ຫາມປະກອບປີ້ມ

24 / VII

ຫ້າມຈຳໜ່າຍ

ຮູບ: ວິຣະວິງ ກັດຕິຍະສັກ



ການເລົ່າປະກອບປຶ້ມ ແມ່ນວິທີການແບບສະໄໝໃໝ່ຄືເມື່ອເຮົາມີປຶ້ມຮູບນິທານທີ່ຈັບງາມມີສີສັນດັ່ງທຸກວັນນີ້.ການນຳໃຊ້ປຶ້ມມາປະກອບການເລົ່າ ຈະເຮັດໃຫ້ນັກຮຽນເຫັນໄດ້ວ່າ ເລື່ອງມ່ວນໆ ແມ່ນມາຈາກປຶ້ມນັ້ນເອງ. ລາງເທື່ອເຂົາຍັງບໍ່ເຄີຍອ່ານຫຼືອ່ານບໍ່ທັນໄດ້ (ອະນຸບານ, ປ. 1) ເມື່ອເຫັນຄູເລົ່າຈາກປຶ້ມ ເດັກໄດ້ຮັບການກະຕຸ້ນໃຫ້ຢາກອ່ານເອງ ຈົນບາງຄັ້ງເຮົາຈະເຫັນວ່າເດັກ ປ. 1 ກໍສາມາດອ່ານໄດ້. ນອກຈາກນີ້ ການເລົ່າປະກອບປຶ້ມຍັງຊ່ວຍໃຫ້ຜູ້ເລົ່າຈື່ ລຳດັບເລື່ອງໄດ້ໂດຍງ່າຍ ຝ່າຍຜູ້ຟັງ ຄື ນັກຮຽນ ໄດ້ຟັງ ແລະເຫັນຮູບໄປພ້ອມກໍຊ່ວຍໃຫ້ເຂົາເຈົ້າເຂົ້າໃຈແລະຈື່ຈຳເລື່ອງໄດ້ດີສາມາດເອົາໄປເລົ່າຕໍ່ໄດ້ (ຜູ້ຂຽນມີປະສົບການເລົ່າປຶ້ມ ນິທານປະກອບພາບ ພໍ່ນາ ແລະຫີນວິເສດ, ເດັກນ້ອຍ ປ. 1 ອາຍຸຫົກປີປາຍ ຟັງເທື່ອດຽວ ສາມາດເລົ່າຄືນໄດ້ໝົດ ເພາະລາວກໍເປີດໄປນຳ ເບິ່ງຮູບໄປນຳ ແລະ ເລົ່າຕາມພາສາຄຳເວົ້າຂອງລາວເອງ).

ອັນທີ່ແຕກຕ່າງຈາກການເລົ່າປາກເປົ່າ ກໍຄື ການເລົ່າດ້ວຍປຶ້ມ ມີຂໍ້ຈຳກັດ ຢູ່ບ່ອນວ່າ: ຜູ້ເລົ່າບໍ່ສາມາດເຄື່ອນເໜັງໄດ້ຫຼາຍ ອາດຈະຍ່າງໄປຫາເດັກທີ່ຢູ່ໄກ ບາງຄັ້ງຄາວ ເດ່ປຶ້ມອອກໄປແດ່ ແຕ່ກໍບໍ່ສາມາດໃຊ້ສິລະປະຮ່າງກາຍ ເພາະຕ້ອງຈັບປຶ້ມ ແລະ ເປີດປຶ້ມ ທັງເລົ່າໄປນຳຕະຫຼອດເວລາ.

ການເລົ່າປະກອບປຶ້ມ ແມ່ນຍຸດທະວິທີໜຶ່ງ ໃນການສົ່ງເສີມການອ່ານທີ່ໄດ້ຜົນສັກສິດຫຼາຍ. ສະນັ້ນ ກ່ອນຈະເລົ່າ ຄູຜູ້ເລົ່າ ຕ້ອງໃຫ້ຂໍ້ມູນອັນສຳຄັນແກ່ນັກຮຽນ. ເມື່ອນັກຮຽນ ໄດ້ເຫັນປຶ້ມ, ໄດ້ເຫັນຮູບທີ່ງາມ ໄດ້ຮູ້ຊື່ປຶ້ມ ໄດ້ຟັງວ່າ ເລື່ອງນີ້ມ່ວນແລ້ວ ເຂົາເຈົ້າກໍຈະໄປຊອກປຶ້ມມາອ່ານເອງ.

I. ຈຸດປະສົງ

ຈຸດປະສົງຂອງການເລົ່ານິທານປະກອບປຶ້ມ ແມ່ນ:


1. ຢາກໃຫ້ເດັກ ໄດ້ຮັບຄວາມມ່ວນຊື່ນ, ເຝິກແອບການຟັງ, ມີສະມາທິ, ມີລະບຽບວິໄນ.
2. ໃຫ້ເດັກຮູ້ລຳດັບເລື່ອງທີ່ໄດ້ຟັງ, ຈັບໃຈຄວາມສຳຄັນໄດ້ ຈົນອາດສາມາດເລົ່າຄືນໄດ້.
3. ເດັກໄດ້ຮຽນຮູ້ຄຳສັບໃໝ່ໆ, ການອອກສຽງທີ່ຖືກຕ້ອງ ແລະ ເປັນແບບຢ່າງຂອງຄູ.
4. ເດັກເຂົ້າໃຈບົດບາດຂອງຕົວລະຄອນ ຮູ້ວ່າ ຕອນໃດຕື່ນເຕັ້ນ, ມ່ວນ, ໂສກ, ເລິກລັບ, ເປັນຕາຢ້ານ, ເປັນຕາຫົວ ເຊິ່ງເປັນທຳມະຊາດຂອງມະນຸດ. ອາລົມເລົ່ານີ້ ຈະຊ່ວຍພັດທະນາເດັກໄປໃນຕົວເພາະເລື່ອງທີ່ໄດ້ຟັງນັ້ນ ມີອັນໃກ້ຊິດກັບຕົວເຂົາ ໂດຍສະເພາະ ຖ້າຕົວລະຄອນເປັນເດັກຄືກັນກໍແຮ່ງຈະຜູກພັນນຳ, ເຮັດໃຫ້ເດັກເກີດຈິນຕະນາການໄປຫຼາຍ, ຮູ້ຈັກຄິດ, ແຕ່ງ, ເວົ້າ ແລະ ເລົ່າເລື່ອງເປັນ.
5. ໃຫ້ເດັກໄດ້ຮຽນທັກສະຊີວິດ ຈາກເລື່ອງໃນປຶ້ມຮູບ ໂດຍບໍ່ຮູ້ເມື່ອວ່າເຂົາເຈົ້າພວມຮຽນວິຊາໃດໜຶ່ງ ອາດຈະແມ່ນເລື່ອງສິ່ງແວດລ້ອມ, ຄຸນນະທຳ, ຈະລິຍະທຳ, ສິນທຳ, ຄວາມຮັກ, ຄວາມກະຕັນຍູ ແລະ ອື່ນໆ (ຕົວຢ່າງ: ເລື່ອງ ຂ້ອຍຈະໄປໃສນໍ, ປານ້ອຍຄອຍແມ, ເປັດນ້ອຍຂອງສົມປອງ, ລີງນ້ອຍກັບຫາງວິເສດ ແລະ ອື່ນໆ). ການຮຽນຕາມລາຍວິຊາ ອາດຈະມີຄຳສັບຍາກ ແລະ ເນື້ອໃນແບບທິດສະດີ ເຮັດໃຫ້ເດັກນ້ອຍເຂົ້າໃຈຍາກ ແຕ່ຈາກ ນິທານ ເຂົາເຈົ້າຈະຮູ້ຈຳແນກເອງ ວ່າໃຜດີ-ໃຜຊົ່ວ, ອັນໃດຄວນເຮັດ-ບໍ່ຄວນເຮັດ.

II. ການກະກຽມ.

1. ຄູເລືອກປຶ້ມທີ່ເໝາະສົມກັບອາຍຸຂອງນັກຮຽນ. ຕາມທຳມະດາຜູ້ທີ່

ມັກການເລົ່າແບບນີ້ ແມ່ນເດັກໃນເກນອາຍຸ ກ່ອນໄວຮຽນ ຮອດ ປ.1, ປ.2 ຫຼື ປ.3. ສະນັ້ນ ຄູຄວນເລືອກເລື່ອງທີ່ກ່ຽວກັບເດັກນ້ອຍ ຫຼືສັດ, ເປັນເລື່ອງທີ່ມ່ວນ, ຕື່ນເຕັ້ນ, ແປກໃໝ່, ມີບົດສົນທະນາຫຼາຍ. ເປັນປຶ້ມທີ່ແຕ້ມດ້ວຍພາບເໝືອນຈິງ ຫຼື ແບບກາຕູນກໍໄດ້ ດີແທ້ເປັນປຶ້ມຮູບສີ ຖ້າແມ່ນຂາວດຳ ກໍເປັນຮູບທີ່ເດັ່ນ ໃຫຍ່. ເນື້ອໃນມີແຕ່ 2-4 ແຖວ ຢູ່ນຳຮູບແຕ່ລະໜ້າ, ຕົວໜັງສືໃຫຍ່. ຄວນເປັນເລື່ອງທີ່ສັ້ນ ຄຳເວົ້າ ງ່າຍດາຍ ປະໂຫຍກຈະແຈ້ງ ເລື່ອງບໍ່ສັບສົນ (ຊອກຫາຫາງແມ່, ນອນດອມ, ໜູນ້ອຍອາດຫານ, ລີງນ້ອຍກັບຫາງວິເສດ ແລະ ອື່ນໆ)

2. ເມື່ອເລືອກເລື່ອງໄດ້ແລ້ວ ຄູອ່ານເລື່ອງ 2-3 ຕ່າວ ຈົນຈື່ວ່າ ຢູ່ແຕ່ລະໜ້າເວົ້າຫຍັງແດ່? ບົດສົນທະນາວ່າຢ່າງໃດ? ເຫດການສຳຄັນທີ່ສຸດຢູ່ໜ້າໃດ? ຄູຈື່ແຕ່ເນື້ອເລື່ອງ ບໍ່ຈຳເປັນທ່ອງເອົາໝົດທຸກແຖວ (ຖ້າທ່ອງເອົາຈົນລ່ຽນໄຫຼ ບາດເວລາເຮົາລືມ ຈະພາໃຫ້ເຊີ ຄິດບໍ່ອອກ. ແຕ່ຖ້າເຮົາຈື່ເລື່ອງ ເຂົ້າໃຈເລື່ອງຕາມລຳດັບ ຕາມຮູບ ເຖິງວ່າລືມຄຳເວົ້າ ເມື່ອເຫັນຮູບ ກໍສາມາດເວົ້າຕໍ່ໄປໄດ້). ຫຼາຍຄົນຄິດວ່າ ທ່ອງເອົາຕາມ ເພິ່ນຊຽນໄວ້ ຈະດີກວ່າ ອັນນັ້ນ ແມ່ນວິທີທີ່ບໍ່ຄ່ອຍໄດ້ຜົນ ເພາະບໍ່ແມ່ນການເລົ່ານິທານ ແຕ່ແມ່ນການທ່ອງຫຼາຍກວ່າ.



3. ຊ້ອມເລົ່າ ຕໍ່ໜ້າແວ່ນ (ຢູ່ເຮືອນ) ຈົນສາມາດເປີດໜ້າປຶ້ມໃຫ້ຖືກ ກັບຄຳເວົ້າທີ່ເລົ່າໄປ. ວິທີເປີດປຶ້ມຕ້ອງເຝິກແອບຫຼາຍເທື່ອຈົນລື່ນມື.
4. ວິທີເປີດປຶ້ມ ຕ້ອງບໍ່ໃຫ້ມື ຫຼື ແຂນ ບັງໜ້າຮູບ ແລະ ເນື້ອໃນ. ວິທີຈັບ ປຶ້ມ ມືໜຶ່ງຕ້ອງຢູ່ລຸ່ມສຸດຂອງປຶ້ມ, ອີກມືໜຶ່ງຄ່ອຍເຕາະເຈ້ຍເປີດໜ້າ ຕໍ່ໄປ ບໍ່ຊີ້ໃສ່ຮູບ ໃຫ້ເດັກເບິ່ງເອງ ຖ້າຊີ້ຈະເປັນການຮົບກວນສາຍຕາ ແລະ ສະມາທິຂອງເຂົາເຈົ້າ. ເມື່ອເລົ່າສຸດ ຢ່າເປີດໜ້າຕໍ່ໄປໄວຫຼາຍ ໃຫ້ເດັກໄດ້ຊົມຮູບຢ່າງເຕັມຕາກ່ອນ ຍົກເວັ້ນກໍລະນີທີ່ເປັນຄຳຫວາຍ ແລະ ຕ້ອງໃຊ້ເຕັກນິກພິເສດ.
5. ເວລາເລົ່າ ຕ້ອງໃຫ້ເນື້ອໃນກັບຮູບໄປນຳກັນ ບໍ່ໃຫ້ບິດ ລຳໜ້າຮູບ ຫຼື ຮູບລ້ຳໜ້າບິດ. ຕ້ອງເຂົ້າໃຈວ່າ ເດັກກ່ອນໄວຮຽນ ແລະ ປະຖົມຕົ້ນ ຍັງອ່ານບໍ່ທັນເປັນ ຫຼື ອ່ານບໍ່ທັນລ່ຽນໄຫຼ. ສະນັ້ນ ວິທີການເລົ່າແບບນີ້ ຕ້ອງຮັບປະກັນວ່າ ນັກຮຽນຕິດຕາມເລື່ອງໄດ້ດີ ບໍ່ສັບສົນ.

III. ການເລົ່ານິທານປະກອບປຶ້ມ ຕໍ່ໜ້ານັກຮຽນ.

3.1. ວິທີການເລົ່າ

ມີ 5 ຂັ້ນຕອນ ຄື:

1. ຄູຍົກປຶ້ມດ້ານໜ້າຂຶ້ນ ບອກວ່າ ຄູຈະເລົ່ານິທານເລື່ອງນີ້ສູ່ຟັງ. ຖ້ານັກຮຽນອ່ານຊື່ເລື່ອງໄດ້ ກໍໃຫ້ອ່ານພ້ອມກັນແຮງໆ. ຖ້າແມ່ນອະນຸບານ ຫຼື ປ.1 ຄູອ່ານໃຫ້ຟັງ ໃນບາງກໍລະນີ ເດັກອ່ານຂ້ອງໆຄາໆ ຄູກໍອ່ານຊ່ວຍ. ສິ່ງສຳຄັນແມ່ນ ໃຫ້ເດັກທຸກຄົນອອກສຽງແຮງໆ ເພື່ອເປັນການຮຽກໂຮມສະມາທິຂອງເດັກໃຫ້ພ້ອມທີ່ຈະຟັງ(ຖ້າເດັກ ຍັງແຊວ ຄູຕ້ອງມີວິທີເຮັດໃຫ້ນິດກ່ອນ ເຊັ່ນ ຕົບມື 3 ບາດ, 2 ບາດ, 1 ບາດ ຫຼື ອື່ນໆ).
2. ຄູບອກ ຫຼື ອ່ານຊື່ ຜູ້ແຕ່ງ, ຜູ້ແຕ້ມ ຫຼື ຂໍ້ມູນທີ່ສຳຄັນກ່ຽວກັບປຶ້ມ ເພື່ອໃຫ້ນັກຮຽນຮູ້ໄວ້, ເທື່ອໜ້າ ໄດ້ອ່ານປຶ້ມຂອງຜູ້ຂຽນ ຜູ້ແຕ້ມ ຜູ້ນີ້ ຈະຈື່ຈຳໄດ້. ເປັນການເຝິກຍຸດທະວິທີ ໃນການອ່ານປຶ້ມໄປໃນຕົວ.




3. ຄູເລົ່ານິທານ ຕາມຮູບແຕ່ລະໜ້າ ໃຫ້ເນື້ອໃນ ໄປພ້ອມກັນກັບຮູບ ເພື່ອໃຫ້ນັກຮຽນຈື່ຈຳຂັ້ນຕອນຂອງເລື່ອງ ໂດຍບໍ່ສັບສົນ. ບ່ອນໃດ ແມ່ນເຫດການສຳຄັນ ຕ້ອງເນັ້ນໜັກເປັນພິເສດ ໜ້ອຍໜຶ່ງ.
4. ການເປີດປຶ້ມ ຕ້ອງບໍ່ໃຫ້ມື ຫຼື ແຂນ ຂອງຜູ້ເລົ່າບັງຮູບ ຫຼື ເນື້ອໃນ
5. ສຳຄັນທີ່ສຸດ ແມ່ນສຽງຂອງຜູ້ເລົ່າ ຕ້ອງແຮງ ໃຫ້ໄດ້ຍິນທົ່ວຫ້ອງ, ຄຳເວົ້າຈະແຈ້ງມີນ້ຳໜັກແຮງ-ເບົາ, ມີຈັງຫວະຢຸດແດ່ໄວແດ່ຊ້າແດ່. ໝາຍຄວາມວ່າ ໃຫ້ມີອາລົມໄປຕາມເນື້ອເລື່ອງ ແລະ ຕິລະຄອນ. ຖ້າເຮັດໄດ້ ອາດປ່ຽນສຽງຕາມຕິລະຄອນ ຫຼື ວ່າພຽງແຕ່ເຮັດສຽງ ຄ່ອຍ-ແຮງ ຕ່າງກັນກໍພໍ (ການປ່ຽນຫຼາຍສຽງ ອາດເຮັດໃຫ້ເດັກນ້ອຍ ສັບສົນລ້ານ).
6. ເມື່ອສຸດເລື່ອງ ກໍສຸດລົງຊື່ໆ ບໍ່ຕ້ອງສະຫຼຸບຄືນ, ບໍ່ຕ້ອງຖາມວ່າ ເລື່ອງ ນີ້ສອນຫຍັງ. ພຽງແຕ່ຂໍສຽງຕົບມືແຮງໆ ເພື່ອຂອບໃຈນາຍຄູຜູ້ເລົ່າກໍ ພໍແລ້ວ.

3.2. ເຕັກນິກເພີ່ມເຕີມ

1. ເພື່ອໃຫ້ການເລົ່າໄດ້ຮັບໝາກຜົນສູງ ຄູຄວນໃຫ້ນັກຮຽນມີສ່ວນຮ່ວມໃນການເລົ່າ ເຊັ່ນ: ເຮັດສຽງປະກອບ, ນັບ 1-2-3 ! , ຮ້ອງສຽງສັດຕ່າງໆ ຕາມນິທານ ຫຼື ຄູຕັ້ງຄຳຖາມໄປນຳ ເລົ່າໄປນຳ ແຕ່ຢ່າໃຫ້ຍາກເກີນໄປ. ການຕອບຂອງນັກຮຽນ ບໍ່ໃຫ້ຄູຕັດສິນວ່າຜິດຫຼືຖືກ. ຖ້ານັກຮຽນຕອບບໍ່ຖືກ ຄູອາດຈະຖາມຄືນໃໝ່ ໂດຍເນັ້ນວ່າມີຜູ້ຕອບແນວອື່ນບໍ່. ຖາມຫຼາຍເທື່ອ ຈົນໄດ້ຄຳຕອບຫຼາຍຂຶ້ນ ຜູ້ທີ່ຕອບຜິດ ຫາກຈະຮຽນຮູ້ຈາກໝູ່ເພື່ອນ ແລ້ວກໍຕອບຖືກໃນທີ່ສຸດ.
2. ຖ້າມີເວລາຫຼາຍ ສາມາດແກ່ຍາວການເລົ່າ ເຮັດໃຫ້ຟົດຟື້ນ ມີສຽງນັກຮຽນຮ້ອງໂຫ່ຫຼາຍໆ, ສະແດງວ່າເດັກໄດ້ມ່ວນ ແລະ ມີຄວາມສຸກ. ອັນນີ້ແມ່ນຜົນສຳເລັດສູງສຸດ ຂອງການເລົ່ານິທານຂອງຄູ.
3. ຖ້າຄູກຽມຕົວພ້ອມທີ່ຈະເລົ່າ, ຍິ້ມແຍ້ມແຈ່ມໃສກ່ອນຈະເລົ່າ, ເດັກຈະຮູ້ສຶກວ່າ ການຟັງນິທານແມ່ນ ກິດຈະກຳທີ່ມ່ວນ. ນັກຮຽນຈະຄຳຮູ້ຂຶ້ນ ຕັ້ງໃຈຄອຍຖ້າຟັງນິທານ ແລະ ພ້ອມທີ່ຈະເຮັດແຕ່ສິ່ງດີໆຕອບແທນ ຄູ. ເຮັດໃຫ້ຫ້ອງຮຽນສະຫງົບ ແລະ ມີລະບຽບວິໄນ. ການທີ່ຄູມັກເລົ່ານິທານ ເປັນຂອງຂວັນອັນປະເສີດ. ຄູໄດ້ສ້າງໃຫ້ຫ້ອງຮຽນ ຂອງຕົນເປັນສະຫວັນວິມານສຳລັບນັກຮຽນ. ແມ່ນວ່າ ສິກຮຽນໃໝ ໄດ້ຂຶ້ນຫ້ອງໃໝ່ແລ້ວ ຍັງແວະວຽນມາຟັງນິທານນຳຄູເກົ່າຂອງຕົນ.

3.3 ຄຳແນະນຳ

1. ປຶ້ມອ່ານປະກອບພາບ, ປົກກະຕິໃຊ້ໄດ້ກັບຈຳນວນນັກຮຽນຫ້ອງໜຶ່ງເທົ່ານັ້ນ (30-40). ຖ້າມີນັກຮຽນເປັນຮ້ອຍ ຈະເກີດການແຫຍ້ຊີ້ງກັນ, ບໍ່ເປັນລະບຽບ, ບໍ່ສະຫງົບ. ຄູຄວນແບ່ງເປັນຫຼາຍກຸ່ມ ແຍກກັນ.
2. ເຊັ່ນດຽວກັບການເລົ່ານິທານປະກອບປຶ້ມ ຈະໄດ້ຮັບຜົນດີກວ່າ ເມື່ອນັກຮຽນນັ່ງໃກ້ຊິດກັນ ຫຼື ເປັນເຄິ່ງວົງມົນ. ຄູສາມາດເຝົ້າແອບ ການປ່ຽນແປງຮູບແບບການນັ່ງໃຫ້ໄວ ແລະ ມິດສະຫງົບ ເພາະເດັກນ້ອຍຢາກຟັງນິທານຢູ່ແລ້ວ ຄູສັ່ງຫຍັງກໍໄດ້ໝົດ.



3. ເມື່ອຄູ ມີຄວາມຊຳນານໃນການເລົ່າແລ້ວ ຄວນເຝິກແອບໃຫ້ນັກຮຽນເລົ່ານິທານ. ຄູ ແລະ ນັກຮຽນ ປ່ຽນກັນເລົ່າ, ພັດທະນາການເລົ່າໄປເລື້ອຍໆ, ເຮັດໃຫ້ການເລົ່ານິທານ ເປັນກິດຈະກຳທີ່ສຳຄັນຫຼາຍ ຈົນສາມາດມີການໃຫ້ຄະແນນໃນຫ້ອງ. ອັນນີ້ ກໍເປັນການສົ່ງເສີມການອ່ານທີ່ໄດ້ຜົນດີຫຼາຍ. ໃຜຢາກເລົ່ານິທານໄດ້ຫຼາຍເລື່ອງ ກໍຕ້ອງອ່ານປຶ້ມຫຼາຍໆ.

ເອົາລະ! ບາດນີ້ ຄູພ້ອມແລ້ວບໍ?
ເລືອກເອົາປຶ້ມນິທານປະກອບພາບຈັກເລື່ອງໜຶ່ງ
ແລ້ວໄປກຽມຕົວ ເພື່ອຈະເລົ່າໃນມື້ອື່ນ.
ນັກຮຽນຄອຍຖ້າຟັງຢູ່ໃດ!

ບົດທີ 11

ລະຄອນເຈ້ຍ

ຮູບ: ວິຣະວິ ກັດຕິຍະສັກ





I. ຄວາມເປັນມາ.

ການ ສະແດງ ຄະມິຊິບາຍ ແມ່ນວິທີເລົ່ານິທານແບບໜຶ່ງຂອງ ຄົນຍີ່ປຸ່ນ. ຄຳວ່າ ຄະມິຊິບາຍ ມີຄວາມໝາຍຄື ຄະມິ ແປວ່າ ເຈ້ຍ, ຊິບາຍ ແມ່ນ ລະຄອນແປຕາມຄວາມໝາຍ ກໍແມ່ນ ລະຄອນທີ່ຢູ່ໃນແຜ່ນເຈ້ຍ.

ລະຄອນເຈ້ຍຂອງຍີ່ປຸ່ນ ກຳເນີດຂຶ້ນໃນລະຫວ່າງປີ ຄ. ສ 1930 ຕໍ່ມາ ຮອດ 1950 ກໍໄດ້ຮັບຄວາມນິຍົມສູງ ແຜ່ຜາຍໄປຫຼາຍປະເທດ ຈົນໃນຊຸມປີ ຕໍ່ໆມາອົງການອຸຍແນສໂກ (UNESCO) (ໜ່ວຍງານໜຶ່ງ ຂອງສະຫະປະຊາ ຊາດ ບ່ອນເຕົ້າໂຮມແນວທາງການສຶກສາໃຫ້ເປັນເອກະພາບ ແລະ ເທົ່າທຽມ ກັນໃນທຸກໆປະເທດສະມາຊິກ) ໄດ້ຫຼິງເຫັນຄວາມສັກສິດຂອງການສະ ແດງລະຄອນເຈ້ຍ ເພື່ອພັດທະນາເດັກສາມາດຍົກລະດັບການສຶກສາຂອງເດັກ ໄດ້ຢ່າງມີປະສິດທິຜົນສູງ. ອຸຍແນສໂກ ຕົກລົງຮັບເອົາ ການເລົ່ານິທານແບບ ນີ້ເປັນໜຶ່ງໃນສື່ການສຶກສາຂັ້ນປະຖົມ ເປັນອຸປະກອນການສອນ ແນະນຳສິ່ງ ເສີມໃຫ້ ທຸກປະເທດສະມາຊິກ ນຳໄປໃຊ້ຕາມຄວາມເໝາະສົມ.

ຄະມິຊິບາຍເຂົ້າມາໃນ ສ. ປ. ປ. ລາວ ເມື່ອປີ 1990 ໂດຍແມ່ນ ສະມາຄົມ ຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC) ເປັນຜູ້ນຳເຂົ້າມາເຜີຍແຜ່. ຄະມິຊິບາຍ ຈັດເປັນສາມປະເພດຫຼັກ ໜຶ່ງແມ່ນ ແບບແຜ່ນໃຫຍ່ ເບິ່ງໄດ້ ເປັນຮ້ອຍໆຄົນ ພາກເປັນບົດສົນທະນາແບບລະຄອນແທ້ ປະກອບດົນຕີ ພ້ອມຮູບແຕ້ມ ເທບນິຍາຍ ທີ່ງາມວິຈິດຫຼາຍ. ເບິ່ງແລ້ວ ຄືກັບ ຈໍຮູບເງົານ້ອຍ, ສອງແມ່ນ ແບບ ແຜ່ນ ຂະໜາດປະມານ 26cmx37cm ເບິ່ງໄດ້ ບໍ່ເກີນ 100 ຄົນ ຊຶ່ງເຮົານິຍົມ

ນຳໃຊ້ຢູ່ ປະເທດເຮົາເວລານີ້. ນອກຈາກນີ້ກໍມີຊຸມິດແຜ່ນນ້ອຍຂະໜາດ 20x13 ຊ.ຕ.ມ. ລະຄອນເຈ້ງ ເຂົ້າມາມີບົດບາດໃນການສຶກສາ ຂອງລາວ ກ້ອຍ ອຸຍແນສໂກ ປະຈຳພາກພື້ນ ຢູ່ປະເທດຍີ່ປຸ່ນ (ACCU) ໄດ້ມາຈັດ ເຝິກອົບຮົມ ການນຳໃຊ້ ທັງການຜະລິດໃຫ້ນັກຂຽນປຶ້ມສຳລັບເດັກ ໃນປີ 1993 ຈັດໂດຍອາລະສານວັນນະສິນ ກະຊວງຖະແຫຼງຂ່າວ ແລະ ວັດທະ ນະທຳ. ໃນປີນັ້ນ ລະຄອນເຈ້ງ 3 ເລື່ອງໄດ້ຮັບຄັດເລືອກ ຈັດພິມເປັນຈຳນວນ 6000 ຊຸດ (ຄືເລື່ອງ ຢາກໄດ້ປູມເປົ້າ, ຝົນແລະດວງຕາເວັນ) ໄດ້ນຳໃຊ້ ໃນທົ່ວປະເທດ ຮອດທຸກວັນນີ້ ແລະ ມີພາກສ່ວນອື່ນທີ່ຜະລິດເລື່ອງໃໝ່ໆຂຶ້ນ ດັ່ງ ຄູໄດ້ນຳໃຊ້ມາແລ້ວ ເຊັ່ນ ປານ້ອຍຄອຍແມ່, ຊ່ວຍເຫຼືອກັນ, ແຂ້ວຕ້ອມ ຢູ່ໃສ, ນີ້ແມ່ນເຮືອນທີ່ແຈັກປຸກໄວ້ ແລະອື່ນໆ.

II. ປະໂຫຍດຂອງລະຄອນເຈ້ຍ:

ລະຄອນເຈ້ຍມີດີແນວໃດ? ເປັນຫຍັງ ທົ່ວໂລກຈຶ່ງນິຍົມໃຊ້?

ຍ້ອນເປັນຮູບແຕ້ມທີ່ເດັ່ນ ຕ້ອງຕາເດັກ. ເດັກນ້ອຍນັບແຕ່ອາຍຸ ຂວບ ເຄິ່ງກໍສາມາດຕິດຕາມໄດ້. ລະຄອນເຈ້ຍເປັນອຸປະກອນທີ່ໃຫ້ທັງຄວາມເພີດ ເພີນ ແລະ ພັດທະນາ ຄວາມຈື່ຈຳຂອງເດັກໄດ້ດີ. ວິທີການເລົ່າ ແມ່ນໃຫ້ ຜູ້ຊົມມີສ່ວນຮ່ວມນຳ ຕະຫຼອດເລື່ອງ ດັ່ງຈະອະທິບາຍ ຢູ່ຂັ້ນຕອນການເລົ່າ.

ນອກຈາກໃຊ້ເລົ່ານິທານແລ້ວ ເພິ່ນຍັງນຳໃຊ້ລະຄອນເຈ້ງ ເປັນສື່ ການສອນໃນຫຼາຍໆວິຊາຕື່ມອີກ ເຊັ່ນ ສຸຂະອະນາໄມ, ສິ່ງແວດລ້ອມ, ຄະນິດ ສາດ, ກະສິກຳ ແລະ ອື່ນໆ.

ຍ້ອນວ່າເປັນສື່ການສອນທີ່ໃຫ້ຄວາມມ່ວນຊື່ນ ສາລະ ແລະ ຕື່ມເຕີມ ຈິນຕະນາການ ຂອງເຂົາເຈົ້າ ເດັກນ້ອຍສາມາດ ເຂົ້າໃຈເລື່ອງໄດ້ ຄະນິຊິບາຍ ຈຶ່ງມີປະສິດທິຜົນສູງ ໃນການສົ່ງເສີມພັດທະນາການ ຂອງເດັກ ໂດຍສະເພາະ ແຕ່ກ່ອນໄວຮຽນ ຮອດປະຖົມຕົ້ນ.

ຮູ້ດັ່ງນີ້ແລ້ວ ຄູເຮົາກໍຄົງສົນໃຈລະຕິ ວ່າຈະນຳໃຊ້ແນວໃດ?
ກ່ອນອື່ນ ມາຮູ້ຈັກກັບ ກະໂຕ ແຜ່ນລະຄອນ ທີ່ວ່ານີ້ສາກ່ອນ.

ລັກສະນະຂອງລະຄອນເຈ້ຍ ແມ່ນເປັນ ແຜ່ນແຂງ ຄືແຜ່ນແກ້ດໃສ່ເຄື່ອງ ດ້ານໜ້າມີຮູບເລື່ອງນິທານເປັນຕອນໆ ດ້ານຫຼັງມີ ເນື້ອໃນທີ່ຈະຕ້ອງເລົ່າ ບ່ອນຈະຖາມ ຮວມທັງບົດສົນທະນາ ແລະ ຄຳໃນວົງເລັບແນະນຳວິທີຖອດແຕ່ລະແຜ່ນພ້ອມ. ເພິ່ນຈັດໜ້າເປັນເລື່ອງໜຶ່ງ4 ແຜ່ນ, 8 , 12 ຫຼື 16 ແຜ່ນ ບໍ່ຄວນຍາວກວ່ານັ້ນ. ເຫດຜົນໃນການຈັດທຳເປັນຕົວເລກຕື່ມຂຶ້ນຊຸດລະ 4 ແຜ່ນ ຍ້ອນເຕັກນິກການພິມ ບໍ່ແມ່ນຜູ້ຂຽນຫາກຈຳນົດເອງ. ສ່ວນຫຼາຍຢູ່ບ້ານເຮົານິຍົມເຮັດຊຸດລະ 8 ຫຼື 12 ແຜ່ນ.

ເອົາລະບາດນີ້ ມາເຂົ້າສູ່ການສະແດງລະຄອນເຈ້ຍເລີຍ.



III.ຈຸດປະສົງ

1. ໃຫ້ເດັກມ່ວນນຳນິທານ, ມ່ວນນຳກັນກັບໝູ່, ຫ້ອງຮຽນມີບັນຍາກາດຟົດຟື້ນ.
2. ເດັກມີສ່ວນຮ່ວມໃນການເລົ່າ ທຸກຕອນສາມາດຕອບຄຳຖາມໄດ້ຫຼາກຫຼາຍ, ຕອບໄວ ເຮັດໃຫ້ເດັກເກີດທັກສະໃນການເລົ່າຄືນ.

3. ເດັກກ້າສະແດງອອກ ເຖິງວ່າ ຕອບຖືກ ຫຼື ຜິດ ກໍບໍ່ອາຍ ເພາະຕອບນຳກັນ ໝົດທຸກຄົນ. ຕອບຜິດເທື່ອນີ້ ຕັ້ງໃຈຟັງໝູ່ ເທື່ອໜ້າ ກໍຕອບຖືກ.
4. ໃຫ້ເດັກມີຈິນຕະນາການຕື່ມເລື່ອງ, ເລົ່າເລື່ອງໄປນຳຄູ ແລະໝູ່ເພື່ອນ ຢ່າງມີອິດສະລະ.

IV. ການກະກຽມ

1. ເລືອກເລື່ອງທີ່ຈະເລົ່າໃຫ້ເໝາະສົມກັບເກນອາຍຸຂອງນັກຮຽນ (ສ່ວນຫຼາຍທຸກໆເລື່ອງ ກໍຫາກເໝາະສຳລັບກ່ອນໄວຮຽນ ແລະປະຖົມຕົ້ນ), ອ່ານ ແລະ ຄົ້ນຄວ້າ ວ່າ ໃຈຄວາມສຳຄັນ ຂອງເລື່ອງແມ່ນຫຍັງ, ຈື່ບົດ ສົນທະນາ, ຈື່ ບ່ອນຈະຖາມໃຫ້ດີ.
2. ກວດກາເບິ່ງຮູບ ຄົບທຸກແຜ່ນບໍ ບ່ອນຈະເລີ່ມຕົ້ນຢູ່ໃສ ? ເນື້ອໃນຂອງໜ້າທຳອິດ ຈະຢູ່ດ້ານຫຼັງຂອງ ໜ້າສຸດທ້າຍ ເມື່ອຖອດແຜ່ນທາງໜ້າອອກ ເອົາມາຊ້ອນໃສ່ທາງຫຼັງ ກໍຈະເຫັນເນື້ອໃນ ໜ້າ 2 ຕໍ່ໆໄປ.
3. ເຝິກຊ້ອມ ການຈັບແຜ່ນທັ້ງໝົດໃຫ້ຢູ່ໃນມືຢ່າງໜັກແໜ້ນບໍ່ງ່ຽງບໍ່ແຕກັນ ເຝິກຊ້ອມ ດຶງແຜ່ນອອກມາຊ້ອນດ້ານຫຼັງໃຫ້ຄ່ອງແຄ້ວທັ້ງ



ເລົ່າໄປນຳ, ຖາມ ບ່ອນໃດຢາກໃຫ້ເດັກມີສ່ວນຮ່ວມໃຫ້ມ່ວນ ແລະ ຟົດຟື້ນ.

4. ຖ້າມີຫີບລະຄອນກໍດີ ເດັກຈະສົນໃຈຕື່ມ ເພາະເບິ່ງຄື ຈໍໂທລະພາບ ແຕ່ຖ້າບໍ່ມີ ຄູອາດຢືນ, ນັ່ງ, ຫຼື ວາງຮູບໃສ່ເທິງໂຕະກໍໄດ້ ແຕ່ຕ້ອງເຝິກແອບໃຫ້ດີ.

V. ການສະແດງ (ເລົ່າລະຄອນເຈ້ຍ)

1. ຈັບແຜ່ນຮູບໃຫ້ ແໜ້ນ ພຽງກັນ ໃຫ້ຜູ້ຊົມເຫັນແຕ່ຮູບດຽວ ດ້ານໜ້າ ກະສາຍຕາ ຜູ້ຊົມຢູ່ຫ່າງປະມານສອງແມັດ
2. ສະເໜີເລື່ອງ ຫຼື ໃຫ້ນັກຮຽນອ່ານ ບອກຊື່ຜູ້ຂຽນ ຜູ້ແຕ້ມ.
3. ເລົ່ານິທານ ຕາມເນື້ອໃນທີ່ຢູ່ດ້ານຫຼັງຂອງຮູບ ແຜ່ນທີ 1 ທີ່ຢູ່ດ້ານຫຼັງຂອງແຜ່ນສຸດທ້າຍ, ເລົ່ານິທານ ຕາມເນື້ອໃນທີ່ຢູ່ດ້ານຫຼັງຂອງຮູບແຜ່ນທີ 2 ທີ່ຢູ່ດ້ານຫຼັງຂອງຮູບແຜ່ນທີ 1, ນິທານ ຕາມເນື້ອໃນທີ່ຢູ່



ດ້ານຫຼັງຂອງຮູບ ແຜ່ນທີ 3 ທີ່ຢູ່ດ້ານຫຼັງຂອງຮູບແຜ່ນທີ 2, ແລະ ຕໍ່ໆໄປ (ມີຮູບນ້ອຍຢູ່ນຳບົດ ເພື່ອບໍ່ສັບສົນ)

4. ເມື່ອເລົ່າໄປ ບ່ອນໃດ ຄວນຖາມ (ເພີ່ນບອກໄວ້ໃນບົດ ຢູ່ໃນວົງເລັບ) ຖາມແລ້ວ ໃຫ້ເດັກຕອບຖ້າຕອບບໍ່ຖືກ ກໍຖາມອີກ ຄູຊ່ອຍນຳ ເຮັດໃຫ້ຄືຫຼິ້ນນຳກັນ ບໍ່ແມ່ນສອນວິຊານຶ່ງ.
5. ດຶງຮູບມາທາງຂວາສະເໝີ ເພື່ອບໍ່ໃຫ້ເດັກສັບສົນ, ບໍ່ດຶງຂຶ້ນເທິງ, ບໍ່ດຶງລົງລຸ່ມ.
6. ເຮັດສຽງຕາມອາລົມຂອງຕົວລະຄອນ ບາງຄັ້ງເຮົາເປັນຜູ້ບັນຍາຍ ບາງຄັ້ງເປັນຕົວລະຄອນໜຶ່ງ, ຕົວທີສອງ, ໝົດທຸກຕົວ, ຕອບໂຕ້ກັບ ຜູ້ຊົມ ເຊິ່ງກໍເປັນຕົວລະຄອນໄດ້ຄືກັນ.



VI. ຄຳແນະນຳ

1. ການຮຽງເລກລຳດັບຮູບ ແຕ່ 1 ຈົນສຸດ ແມ່ນຈຳເປັນ ທຸກຄັ້ງກ່ອນສະແດງເພາະຖ້າຮູບຮຽງບໍ່ຖືກ ເລື່ອງກໍບໍ່ຕໍ່ເນື່ອງກັນ.
2. ລະວັງຢ່າເອົາມືຊີ້ໃສ່ຮູບ ແລະ ຢ່າໃຫ້ແຜ່ນຮູບເໜັງຕີງ ຜູ້ຊົມຈະວິນຫົວ.
3. ເດັກນ້ອຍຢາກເຫັນປາກຂອງຜູ້ເລົ່າ ສະນັ້ນ ຢ່າເອົາໜ້າເຊື່ອງຢູ່ຫຼັງຮູບຈັບຮູບໄວ້ພຽງເອິກ. ແຕ່ບໍ່ຕ້ອງເໜັງຕີງ ຮູບຈະງ່ຽງ.
4. ການເລົ່າ ຢາກໃຫ້ມ່ວນຟົດຟື້ນ ບາງຄັ້ງເຮັດຄືຫຼິ້ນເກມກັນ. ເອົ້າ ! ໃຜ ວ່າແມ່ນ ມ້າ ? ໃຜວ່າ ແມ່ນ ງົວ ? (ເລື່ອງດວງຕາເວັນ) ເວລາໃຫ້ເດັກມີສ່ວນຮ່ວມ ໃຫ້ຮ້ອງສຽງສັດ, ຫຼື ນັບ 1-2-3 ຕ້ອງເຮັດແທ້ ໃຫ້ທຸກຄົນເວົ້າແຮງໆ ພ້ອມກັນ. ຖ້າບໍ່ແຮງ ເວົ້າໃໝ່. ເມື່ອຖາມແລ້ວ ໃຫ້ເດັກຕອບບໍ່ຜ່ານໄປເລີຍ ຖ້າຄູລະເລີຍຕໍ່ຄຳຕອບຂອງເດັກກໍແປວ່າເດັກຈະຂາດຄວາມໝັ້ນໃຈ ຕໍ່ໄປຈະບໍ່ຕອບຊ້ຳ.
5. ເດັກທຸກຄົນມັກການສະແດງ. ຄູຕ້ອງໃຫ້ໂອກາດເຂົາເຈົ້າ: ບອກໃຫ້ສະແດງ ອາການໄຫ້, ຫົວ, ຮ້ອງ, ຮຽນສຽງສັດ. ຖ້າເດັກມີສ່ວນຮ່ວມຫຼາຍໆ ເຂົາກໍແມ່ນຜູ້ສະແດງນຳກັນ. (ໃນເລື່ອງປູມເປົ້າ ເດັກອະນຸບານເຊື່ອວ່າ ເຂົາເຈົ້າເປັນຜູ້ຮ້ອງໃຫ້ ປູມເປົ້າ ໃຫຍ່ຂຶ້ນ !)
6. ດ້ານຄຳສັບໃນເລື່ອງ ຖ້າວ່າ ຢູ່ທ້ອງຖິ່ນເອີ້ນຕ່າງກັນ ກໍໃຊ້ຄຳສັບຂອງທ້ອງຖິ່ນຕົນ ເຊັ່ນ ປູມເປົ້າ ບາງບ່ອນ ເອີ້ນ ປູມເປັ, ໝາກໂປ່ງ ກໍມີ. ຄູມີສິດປັບປ່ຽນໄປຕາມສະຖານະການ.
7. ຢ່າລືມ! ຄຳຕອບຂອງເດັກ ບໍ່ມີການຕັດສິນວ່າຜິດ. ມີແຕ່ຊວນຕອບອີກ, ຈົນວ່າຖືກ ຈົນວ່າແຮງ ແລະມ່ວນນຳກັນ ໝົດທຸກຄົນ. ລະຄອນເຈ້ຍແມ່ນເປີດໂອກາດ ໃຫ້ເດັກນ້ອຍຂີ້ອາຍ ກ້າຫານ ຜູ້ເວົ້າຄ່ອຍເປັນແຮງ.ສ້າງຄວາມພ້ອມພຽງໃນໝູ່ຄະນະ,ສ້າງຄວາມພ້ອມໃນການເລົ່າ, ສະແດງອອກ, ເວົ້າຄົນປະໂຫຍກທີ່ແຕ່ງໄວ້ດີ, ຮູ້ຄຳສັບຫຼາກຫຼາຍ.
8. ຖ້າຕ້ອງການເລົ່າ ຢູ່ເທິງເວທີສະແດງ ມີຄົນຊົມຫຼາຍຮ້ອຍຄົນ ຄວນຂະຫຍາຍຮູບອອກເປັນແຜ່ນໃຫຍ່ຂະໜາດແຜ່ນຢາງລູກຟູກ ເວລາເລົ່າອາດມີ 2-3 ຄົນ ຊ່ອຍດຶງອອກ, ຊ່ອຍເລົ່ານຳ.




ເອົາລະບາດນີ້ ຄູກຽມຕົວຄັກແລ້ວບໍ...
ອອກສູ່ເວທີໄດ້ ເດັກນ້ອຍພວມຄອຍຊົມລະຄອນເຈ້ ！


ບົດທີ 12

ລະຄອນສັ້ງເສີມການອ່ານ

ຮູບ: ແສງສຸລິ ກັດຕິຍະສັກ







I. ບົດນຳ

ຖາມ: ລະຄອນ ກັບການສິ່ງເສີມການອ່ານ ກ່ຽວຂ້ອງກັນແນວໃດ?
ຕອບ: ຄັນເຮັດເປັນ ລະຄອນກໍແມ່ນເຄື່ອງມືໃນການສອນທີ່ດີຫຼາຍ ແຕ່ຄັນເຮັດບໍ່ເປັນ ກະຊິໄປທາງຂ້າງ.

"ລະຄອນ" ໃນທີ່ນີ້ໝາຍເຖິງລະຄອນທີ່ສະແດງເທິງເວທີເຊິ່ງຄູໃນທຸກໂຮງຮຽນສາມາດພານັກຮຽນເຮັດເປັນກິດຈະກຳທີ່ເປັນທັງການສະແດງ (ຄູໄດ້ໜ້າ) ແລະກິດຈະກຳການຮຽນ-ການສອນ ແບບບູລະນາການໄດ້.

ລະຄອນແບບມີສ່ວນຮ່ວມ ສາມາດຕອບໂຈດທາງການສຶກສາໄດ້ດີຫຼາຍ ບໍ່ວ່າຂັ້ນປະຖົມຫຼືມັດທະຍົມ ເພາະຜູ່ເຂົ້າຮ່ວມກິດຈະກຳຈະໄດ້ຝຶກແອບທັກສະການເວົ້າ, ຟັງ, ອ່ານ, ຂຽນ (ທັກສະພື້ນຖານ ຂອງຊັ້ນປະຖົມ) ຄິດວິເຄາະ ແລະ ສ້າງສັນ (ມັດທະຍົມ) ລະຄອນ ຍັງເຮັດໃຫ້ຜູ່ເຂົ້າຮ່ວມໄດ້ເຮັດກິດຈະກຳເປັນໝູ່ຄະນະອີກດ້ວຍ.

ລະຄອນສິ່ງເສີມການອ່ານ ບໍ່ແມ່ນການສະແດງເລື່ອງທີ່ມີເນື້ອໃນວ່າການອ່ານດີແນວນັ້ນແນວນີ້, ຫາກແມ່ນຂະບວນການສ້າງລະຄອນພຸ້ນ ທີ່ເປັນການສິ່ງເສີມນິໄສການອ່ານໃຫ້ກັບຜູ່ເຂົ້າຮ່ວມກິດຈະກຳ, ຜູ່ເຂົ້າຮ່ວມຈະໄດ້ອ່ານປຶ້ມຢ່າງເລິກເຊິ່ງ, ອ່ານຢ່າງວິເຄາະວິໄຈ ແລະ ເກີດແນວຄິດສ້າງສັນຂຶ້ນໃນໂຕ ຕັ້ງແຕ່ຕອນເລີ່ມຝຶກແອບ ຮອດຫຼັງການສະແດງ.

II. ອົງປະກອບຂອງ "ລະຄອນສົ່ງເສີມການອ່ານ"

ເມື່ອຄິດຈະພານັກຮຽນເຮັດລະຄອນ ໃຫ້ຄູຄິດເຖິງ 4 ອົງປະກອບຄື:

1. ບົດ(ເລື່ອງ)
2. ຜູ່ກຳກັບການສະແດງ
3. ໂຕລະຄອນ
4. ເວທີ.

2.1 ບົດ ຫຼື ເລື່ອງ

ຈະເອົາມາແຕ່ໃສຫຼືຈະປະດິດແຕ່ງຂຶ້ນເອງບໍ? ເປັນຫຍັງຕ້ອງແຕ່ງຂຶ້ນໃໝ່ລະ ເມື່ອໃນຫ້ອງສະໝຸດມີປຶ້ມດີໆເລື່ອງດີໆເປັນຮ້ອຍເປັນພັນ ທີ່ຮັບປະກັນທາງດ້ານເນື້ອໃນແລ້ວ (ມີເລກທະບຽນພິມຈຳໜ່າຍ ຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ) ຍິ່ງເປັນລະຄອນເພື່ອສົ່ງເສີມການອ່ານ ຫຼື ກິດຈະກຳຮັບໃຊ້ໃນການຮຽນການສອນ ແຮ່ງຢາກແນະນຳ (ແກມບັງຄັບ) ວ່າຕ້ອງເປັນເລື່ອງຈາກປຶ້ມອ່ານ ເຊັ່ນ: ກ່ຳພ້າຜີນ້ອຍ, ສັງສິນໄຊ, ຫ້ວຍກາດໃຫຍ່ ແລະ ອີກຫຼາຍໆເລື່ອງ. ຢູ່ຕ່າງປະເທດເພິ່ນກໍເອົາວັນນະຄະດີເລື່ອງມ່ວນໆ ທີ່ນັກປະພັນໄດ້ແຕ່ງໄວ້ແລ້ວ ມາພາເດັກນັກຮຽນຫຼິ້ນລະຄອນແລະສາມາດເວົ້າໄດ້ວ່າ ເດັກໄດ້ຮຽນຮູ້ວັນນະຄະດີເອກຢ່າງເລິກເຊິ່ງຜ່ານກິດຈະກຳ ລະຄອນ ເຊັ່ນເລື່ອງ: "Romeo and Juliet" ແລະນິທານຫຼາຍໆເລື່ອງຂອງອ້າຍນ້ອງກຣິມ(Brothers Grim's toles). ແມ່ນຄວາມຈິງທີ່ໃນປຶ້ມສ່ວນໃຫຍ່ເພິ່ນບໍ່ໄດ້ຂຽນແບບບົດລະຄອນໄວ້ ຄືບໍ່ມີບົດສົນທະນາທີ່ຈະເວົ້າອອກມາໄດ້ເລີຍ,ແຕ່ການທີ່ຜູ່ເຂົ້າຮ່ວມກິດຈະກຳໄດ້ອ່ານເລື່ອງແລ້ວວິເຄາະວິໄຈຕີຄວາມໝາຍຕົວລະຄອນ ແລະ ສ້າງສັນບົດສົນທະນາ, ທ່າທາງ, ອົງປະກອບຕ່າງໆ ຂຶ້ນມານັ້ນ ແມ່ນເປົ້າໝາຍ ແມ່ນໝາກຫົວໃຈຂອງການຮຽນ-ການສອນ ວັນນະຄະດີບໍ່ແມ່ນບໍ?



2.2 ຜູ້ກຳກັບການສະແດງ

ຄືຜູ່ເບິ່ງລວມທັງການຝຶກແອບ, ບົດບາດຂອງໂຕລະຄອນຕ່າງໆ ເບິ່ງຄວາມເໝາະສົມຂອງແຕ່ລະສາກ,ປັບແກ້ສິ່ງຕ່າງໆເພື່ອໃຫ້ລະຄອນອອກ ມາດີທີ່ສຸດ, ດູແລເລື່ອງເວລາ, ນັກສະແດງ, ເວທີ... ຜູ່ກຳກັບການສະແດງ ຈຶ່ງຈະຕ້ອງຮູ້ບົດເລື່ອງທີ່ເອົາມາເຮັດລະຄອນນັ້ນໃຫ້ດີທີ່ສຸດ ຫຼື ຕ້ອງອ່ານ ຫຼາຍທີ່ສຸດນັ້ນເອງ; ຜູ້ກຳກັບການສະແດງບໍ່ແມ່ນຈະມີຄົນດຽວ, ລະຄອນ ເລື່ອງໜຶ່ງ ຕ້ອງມີຜູ່ກຳກັບ ແລະຜູ່ຊ່ວຍ 3 ຄົນຂຶ້ນໄປ ຂຶ້ນກັບຄວາມນ້ອຍໃຫຍ່ ຂອງກິດຈະກຳ ເຊັ່ນ: ຖ້າເປັນກິດຈະກຳທີ່ເຮັດນຳກັນໝົດຫ້ອງ (35-40 ຄົນ) ກໍຄວນມີຜູ່ກຳກັບ ແລະ ຜູ່ຊ່ວຍ 5 ຄົນຂຶ້ນໄປ ເພື່ອຮັບຜິດຊອບແຕ່ລະໜ້າວຽກ ເຊັ່ນ: ເບິ່ງພາບລວມຂອງການສະແດງ, ດູແລບົດເລື່ອງ, ເວທີ, ການຈັດສາກ, ປ່ອຍຄິວນັກສະແດງ, ອຸປະກອນ...

ສຳຫຼັບຊັ້ນປະຖົມຮອດມັດທະຍົມ 3 ຄວນແມ່ນຄູເປັນຜູ່ກຳກັບການ ສະແດງ ແລະ ຊອກຜູ່ຊ່ວຍຕື່ມຕາມຄວາມເໝາະສົມ, ສ່ວນຊັ້ນ ມ.4 ຂຶ້ນໄປ

ຄວນຈະໃຫ້ນັກຮຽນເປັນຜູ່ກຳກັບການສະແດງແບບເຕັມໂຕ ໂດຍໃຫ້ຄູເປັນຜູ່ຊີ້ແນະ ຫຼືທີ່ເອີ້ນວ່າ: "Producer" ເພື່ອໃຫ້ເດັກໄດ້ຝຶກແອບການເປັນຜູນຳ ແລະ ການເຮັດວຽກເປັນໝູ່ຄະນະຢ່າງເຕັມຮູບແບບ. ກິດຈະກຳລະຄອນແຕ່ລະຄັ້ງ ຄູຜູ່ນຳພາຄວນຈະປ່ຽນຜູ່ກຳກັບແລະຜູ່ຊ່ວຍຜູ່ກຳກັບ ທັ້ງນີ້ເພື່ອໃຫ້ເດັກໄດ້ຝຶກແອບທາງດ້ານການສະແດງ ແລະການກຳກັບ ຫຼື ຈະເອີ້ນວ່າ ການເປັນຜູ່ນຳແລະຜູ່ປະຕິບັດ ຢ່າງທ່ວເຖິງ.

2.3 ໂຕລະຄອນ

ເລື່ອງບາງເລື່ອງ ໂຕລະຄອນຫຼາຍກວ່າຈຳນວນຜູ່ເຂົ້າຮ່ວມກິດຈະກຳ, ແຕ່ບາງເລື່ອງໂຕລະຄອນໜ້ອຍ ຜູ່ເຂົ້າຮ່ວມກິດຈະກຳ ຜັດຫຼາຍໆເຮັດແນວໃດດີ?,

ຕອບ: ຄູຜູ່ນຳພາກິດຈະກຳຕ້ອງອ່ານເລື່ອງນັ້ນຫຼາຍໆ ແລະ ຈະຮູ້ເອງ...

ສິ່ງທີ່ສຳຄັນກວ່ານັ້ນແມ່ນ ລະຄອນເພື່ອສົ່ງເສີມການອ່ານ ແລະ ການສຶກສານັ້ນ ບ່ແມ່ນຄູຈະຊີ້ນິ້ວໃສ່ ແລະ ບອກວ່າໃຫ້ໃຜຫຼິ້ນເປັນຫຍັງ ຫຼື ເວົ້າຫຍັງ, ແຕ່ໃຜຈະຫຼິ້ນເປັນໂຕລະຄອນໃດ ຕ້ອງແມ່ນມາຈາກການຕັດສິນໃຈຮ່ວມກັນຂອງຜູ່ເຂົ້າຮ່ວມກິດຈະກຳ ຄືທຸກຄົນທີ່ເຂົ້າຮ່ວມຕ້ອງໄດ້ອ່ານປຶ້ມເລື່ອງຫ໊ວນັ້ນໆຫຼາຍເທື່ອ ເພື່ອວິເຄາະຮ່ວມກັນວ່າ ເລື່ອງນີ້ມີຈັກໂຕລະຄອນ, ໂຕຫຼັກຈັກໂຕ, ໂຕສຳຮອງເດ, ໂຕປະກອບເດ, ລັກສະນະແຕ່ລະໂຕລະຄອນເປັນແນວໃດ, ແລ້ວຈຶ່ງຖາມວ່າ ໃຜຈະຫຼິ້ນເປັນຫຍັງ?, ເປັນຂະບວນການສົນທະນາທີ່ຄູເປັນຜູ່ນຳພາ. ສະແດງເທື່ອໜຶ່ງສອງເທື່ອແລ້ວປ່ຽນບົດບາດກັນ, ບ່ແມ່ນໃຫ້ຜູ່ດຽວຫຼິ້ນເປັນໂຕລະຄອນໃດໜຶ່ງໄປຕະຫຼອດເພາະເຫດຜົນໃນການເຮັດລະຄອນຂອງເຮົາ ແມ່ນເພື່ອສົ່ງເສີມການອ່ານ ແລະ ການສຶກສາ.

2.4 ເວທີ

ຂະໜາດເວທີ, ຈຳນວນຜູ່ຊົມ, ໃຜມາຊົມແດ່, ເວລາສະແດງສັ້ນ-ຍາວ

ຟຸງໃດ ຄືສິ່ງທີ່ຄູຜູ່ນຳພາກິດຈະກຳຕ້ອງໄດ້ພິຈາລະນາເພື່ອນຳໃຊ້ເວທີ, ຈັດສາກ, ປະດັບປະດາ ແລະ ຫາເລື່ອງທີ່ເໝາະສົມກັບເວທີນັ້ນ. ຕ້ອງຮູ້ຈັກເວທີໃຫ້ດີ ຈຶ່ງເຝິກແອບໄດ້ເໝາະສົມ, ຍິ່ງໄດ້ເຝິກແອບໃສ່ເວທີ ຍິ່ງເຮັດໃຫ້ຜູ່ສະແດງໝັ້ນໃຈ, ແນວໃດກໍຕາມ ທັງ 4 ອົງປະກອບລ້ວນແຕ່ສຳຄັນ ແຕ່ຖ້າຈຳເປັນຕ້ອງຈັດບຸລິມະສິດ ເວທີກໍຄວນຢູ່ໃນລຳດັບສຸດທ້າຍ.

III. ການດຳເນີນກິດຈະກຳ

- ອ່ານເລື່ອງ
- ແບ່ງໂຕລະຄອນ
- ແບ່ງສາກ
- ສ້າງບົດ
- ເຝິກແອບ
- ສະແດງ
- ຖອດຖອນບົດຮຽນ



3.1 ອ່ານເລື່ອງ

ຂໍບອກກ່ອນວ່າ ຢ່າໄດ້ຂ້າມຂັ້ນຕອນນີ້ເດັດຂາດ ເພາະນີ້ຄືລະຄອນສິ່ງເສີມການອ່ານ, ການອ່ານຍັງເຮັດໃຫ້ສາມາດດຳເນີນກິດຈະກຳຕ່ໆໄປຢ່າງລ່ຽນໄຫຼ ເພາະທຸກຄົນຮູ້ຈັກເລື່ອງ ນຳກັນດີແລ້ວຈາກການອ່ານ, ສຳລັບຊັ້ນປະຖົມຫາ ມ.3 ແນະນຳໃຫ້ຄູເປັນຜູ່ພາອ່ານດ້ວຍເຕັກນິກອ່ານມ່ວນໆ ທີ່ໄດ້ສະເໜີໄປແລ້ວໃນ ບົດທີ 5, ທັງນີ້ເພື່ອສ້າງບັນຍາກາດການມີສ່ວນຮ່ວມກ່ອນກ້າວສູ່ຂັ້ນຕອນຕ່ໍໄປ, ສ່ວນ ມ4 ຂຶ້ນໄປ ສາມາດໃຫ້ອ່ານມິດໆພໍໃຜພໍລາວ ເພື່ອໃຫ້ຜູ່ເຂົ້າຮ່ວມໄດ້ໃຊ້ສະມາທິ ແລະເກີດຄວາມຄຶດສ້າງສັນ ກ່ອນຈະນຳມາສົນທະນາກັນໃນຂັ້ນຕອນຕ່ໍໄປ.



3.2 ແບ່ງໂຕລະຄອນ

ດັ່ງສະເໜີໄປແລ້ວໃນຂໍ້ II ວ່າ: ກິດຈະກຳລະຄອນຂອງເຮົາເປັນແບບ ມີສ່ວນຮ່ວມ ແມ່ນແຕ່ໃນຂັ້ນປະຖົມ ຄູກໍສາມາດນຳພາການສົນທະນາ

ດ້ວຍຄຳຖາມວ່າ: ເລື່ອງນີ້ມີໃຜແດ່?, ແຕ່ລະຄົນໜ້າຕາທ່າທາງເປັນແນວໃດ?, ມີຫຍັງພິເສດບໍ່?, ໃຜຢາກຫຼິ້ນເປັນຫຍັງ? ດັ່ງນີ້ເປັນຕົ້ນ, ໃຫ້ນັກຮຽນໄດ້ສົນທະນາກັນ ໄດ້ຄົ້ນຄິດ ບໍ່ຈຳເປັນວ່າຕ້ອງຕົກແຕກກັນໃນຊົ່ວໂມງນັ້ນ ຫຼືມື້ນັ້ນ ໃຫ້ເດັກເອົາໄປຄິດຢູ່ເຮືອນກ່ອນ ແລ້ວຄ່ອຍມາລົມກັນຕື່ມເປັນອຽກບ້ານໄປເລີຍ ເພື່ອໃຫ້ທຸກຄົນທີ່ເຂົ້າຮ່ວມ ໄດ້ມີໂອກາດຄົ້ນຄິດ ກ່ຽວກັບເລື່ອງ ແລະ ໂຕລະຄອນໃນເລື່ອງຕື່ມ.

ຄູໃນຖານະຜູ່ນຳພາຕ້ອງດຳເນີນການສົນທະນາໃຫ້ຢູ່ໃນບັນຍາກາດທີ່ສ້າງສັນ ແຕ່ກໍຕ້ອງສະແດງໃຫ້ນັກຮຽນເຫັນວ່າ ນີ້ເປັນເລື່ອງເອົາຈິງເອົາຈັງສົມຄວນ. ຫຼັງແບ່ງໂຕລະຄອນກັນແລ້ວ ຢ່າລືມບອກເດັກວ່າ ແຕ່ລະຄົນຈະໄດ້ປ່ຽນບົດບາດເປັນໂຕລະຄອນອື່ນໄປເລື້ອຍໆເດີ້ !

3.3 ແບ່ງສາກ

ເຊັ່ນດຽວກັບການແບ່ງໂຕລະຄອນ ຂັ້ນຕອນນີ້ກໍແມ່ນການສົນທະນາທີ່ຄູຕ້ອງເປັນຜູ່ນຳພາ ຄຳຖາມທີ່ຄວນຈະໃຊ້ກໍມີດັ່ງນີ້: ເລື່ອງນີ້ເຮົາຊິເຮັດເປັນຈັກສາກ? ສາກໃດເປັນແນວໃດ (ໃຫ້ເດັກອອກຄວາມເຫັນວ່າແຕ່ລະສາກ ຕົວລະຄອນເຄື່ອນໄຫວແນວໃດແດ່)? ເລື່ອງໃນສາກນັ້ນເກີດຂຶ້ນຢູ່ໃສ (ປ່າ, ບ້ານ, ວັງ, ນ້ຳ)? ເຮັດແນວໃດໃຫ້ຜູ່ຊົມຮູ້ວ່າ ເລື່ອງເກີດຂຶ້ນຢູ່ຫັ້ນ? ສາກນີ້ຕ້ອງມີບໍ່? ບໍ່ມີໄດ້ບໍ່? ຈຳເປັນແທ້ຫວາ? ລວມກັນໄດ້ບໍ່? ຫຼື ແບ່ງອອກຕື່ມໄດ້ບໍ່ ຢ້ານຊິຍາວໂພດ?... ດັ່ງນີ້ເປັນຕົ້ນ.

ໃຫ້ຄູຄິດໄວ້ສະເໝີວ່າ ຕົນເອງຄືຜູ່ນຳພາ ໝາຍຄວາ່ມວ່າ ໃຫ້ເດັກຮູ້ສຶກວ່າ ການແບ່ງສາກ ແລະຄິດຄົ້ນສິ່ງຕ່າງໆນັ້ນ ແມ່ນມາຈາກຄວາມຄິດຂອງເຂົາ ບໍ່ແມ່ນມາຮັບຄຳສັ່ງຈາກຄູຢ່າງດຽວ. ແລ້ວທ່ານຈະຕົກສະເງີ ໃນຄວາມຄິດອັນສ້າງສັນແລະຫຼັກແຫຼມ ຂອງລູກສິດ.

3.4 ສ້າງບົດ

ກົດຈະກຳລະຄອນທົ່ວໄປ ຈະມີຜູ່ໃດຜູ່ໜຶ່ງສ້າງບົດຂຶ້ນມາ ໃຫ້ນັກສະແດງເວົ້າແລະເຄື່ອນໄຫວໄປຕາມນັ້ນ. ແຕ່ລະຄອນເພື່ອສິ່ງເສີມການອ່ານ

ແມ່ນການໃຫ້ຜູ່ເຂົ້າຮ່ວມກິດຈະກຳໄດ້ຄົ້ນຄວ້າ.

ເມື່ອຄູຜູ່ນຳພາກິດຈະກຳໃຫ້ໂຈດວ່າ ໃຫ້ແຕ່ລະຄົນໄປກຽມບົດສຳລັບສະແດງ ຂອງຕົວລະຄອນທີ່ຕົນຈະສະແດງເປັນ ອາດຈະເລີ່ມມີສຽງຈາກເດັກວ່າ "ຍາກ", "ໂອ້ຍ... ເຮັດບໍ່ໄດ້", "ບໍ່ເປັນ", "ບໍ່ເຄີຍເຮັດ", ໃຫ້ຄູເຊື່ອໝັ້ນໃນໂຕເດັກ ແລະບອກເດັກໄປຢ່າງໝັ້ນໃຈວ່າ "ພວກເຈົ້າເຮັດໄດ້ຢູ່ດອກ ລອງອ່ານເລື່ອງນັ້ນຫຼາຍໆຮອບເບິ່ງ ຈັ່ງຄ່ອຍແອບໃສ່ກັນ ລະຊິເຫັນດອກວ່າ ມັນງ່າຍໆໜຶ່ງ".

ບໍ່ຈຳເປັນວ່າຈະຕ້ອງສ້າງບົດໃຫ້ແລ້ວໃນມື້ນັ້ນ ຫຼືຊ່ວໂມງນັ້ນ ຄວນໃຫ້ນັກຮຽນມີເວລາອ່ານເລື່ອງຄືນ ແລະຄົ້ນຄວ້າບົດ ດ້ວຍໂຕເອງຈັກມື້ໜຶ່ງ ແລ້ວຄ່ອຍມາເລີ່ມແອບໃສ່ກັນ ຂະນະທີ່ນັກສະແດງຄົ້ນຄວ້າສ້າງບົດຢູ່ນັ້ນ ຄູຜູ່ນຳພາກິດຈະກຳ ແລະ ບັນດາຜູ່ກຳກັບ ແລະ ຜູ່ຊ່ວຍຜູ່ກຳກັບ ຕ້ອງໄດ້ລົມກັນກ່ຽວກັບພາບຮວມຂອງລະຄອນ ຈະໃຫ້ອອກມາເປັນແນວໃດ, ໃຜເຮັດໜ້າທີ່ຫຍັງ? ກຳນົດເວລາເຝິກແອບ... ທັງນີ້ເພື່ອຄວາມເຂົ້າໃຈທີ່ເອກະພາບໃນເວລາເຝິກແອບ.ຂະນະທີ່ນັກສະແດງໃຫ້ຄວາມສົນໃຈໃນບົດບາດຂອງຕົນເອງ ບັນດາຜູ່ກຳກັບແລະຜູ່ຊ່ວຍຜູ່ກຳກັບ ຕ້ອງກຳບົດບາດ, ສາກ ແລະເລື່ອງທັງໝົດ ໃຫ້ລະອຽດທີ່ສຸດ.

3.5 ເຝິກແອບ

ຕ້ອງດຳເນີນຢ່າງຈິງຈັງເອົາການເອົາງານ,ຄູຕ້ອງລະດົມເດັກເລື້ອຍໆ ໃຫ້ເຂົາເຂົ້າໃຈວ່າ ຕ້ອງຕັ້ງໃຈແອບ ມື້ສະແດງຈຶ່ງຈະອອກມາດີ, ຜູ່ກຳກັບ ແລະຜູ່ຊ່ວຍຜູ່ກຳກັບ ຕ້ອງໄດ້ເບິ່ງແລະຄ່ອຍປັບປຸງບົດ ແລະການສະແດງ ທັງ ກຽມອຸປະກອນຕ່າງໆໃຫ້ພ້ອມທີ່ສຸດ.

3.6 ສະແດງ

ຕອນນີ້ ບັນດາຜູ່ກຳກັບແລະຜູ່ຊ່ວຍ ຕ້ອງໄດ້ເຮັດວຽກໜັກທີ່ສຸດ ຕ້ອງກຽມເຄື່ອງ ກຽມຄົນ ທັງກ່ອນການສະແດງ ແລະ ຂະນະພວມສະແດງຢູ່.

ກ່ອນຈະສຸດສາກໜຶ່ງ ແລະຈະຕໍ່ໄປໃສ່ອີກສາກ ຜູ່ກຳກັບແລະຜູ່ຊ່ອຍຕ້ອງ ກຽມນັກສະແດງສາກຕໍ່ໄປໃຫ້ພ້ອມ ໄວ້ສະເໝີ.

ໃນເວລາສະແດງ ອາດມີການຜິດຫຼືຫຼົງແດ່ ຄຳແນະນຳຄື ດຳເນີນ ການສະແດງຕໍ່ໄປ ເຮັດສີໜ້າທ່າທາງຄືບໍ່ໄດ້ຜິດຫຼືຫຼົງ (ຜູ່ຊົມບໍ່ຮູ້ນຳເຮົາດອກ).



3.7 ຖອດຖອນບົດຮຽນ

ຄູຜູ່ນຳພາກິດຈະກຳ ຕ້ອງເວົ້າວ່າ “ຂອບໃຈທຸກຄົນ”, “ທຸກຄົນເກ່ັງ ຫຼາຍ” , “ເຮັດໄດ້ດີຫຼາຍ” ໃຫ້ຕິດປາກ. ການຍ້ອງຍໍເດັກເປັນສິ່ງສຳຄັນທີ່ສຸດ ຫຼັງລົງຈາກເວທີ.ສຳລັບຊັ້ນປະຖົມອາດຂ້າມຂັ້ນຕອນນີ້ໄດ້ແຕ່ກໍຢ່າລືມຍ້ອງຍໍ ເຂົາທຸກຄັ້ງ. ມັດທະຍົມ ໂດຍສະເພາະມໍປາຍ ຄວນໃຫ້ມີການຖອດຖອນບົດ ຮຽນ ພາຍຫຼັງການສະແດງ ພາຍໃນບໍ່ກາຍ 1 ອາທິດ(ຖ້າເຮັດໄດ້ທັນທີແຮ່ງດີ).

(ຄູໃນຖານະເປັນຜູ່ນຳພາ) ຄຳຖາມທີ່ຄວນໃຊ້ໃນການຖອດຖອນບົດ ຮຽນແມ່ນ:ແຕ່ລະຄົນຄຶດວ່າໂຕເອງສະແດງເປັນແນວໃດ? ຢາກເຮັດຫຍັງ ຕື່ມ?ເທ່ືອໜ້າໃຜຊິຫຼິ້ນເປັນຫຍັງ?... ຫ້າມຖາມວ່າ ຄຶດວ່າໝູ່ສະແດງເປັນແນວ ໃດເດັດຂາດ.

IV. ຄຳແນະນຳ

- ຄູຄືຜູ່ນຳພາກິດຈະກຳ ຊ່ອຍນັກຮຽນທຸກຄົນ ເວລາມີບັນຫາ ບໍ່ວ່າຈະເລື່ອງບົດ, ການສະແດງ, ການກຳກັບດູແລ... ຄູຕ້ອງເປັນສ່ວນໜຶ່ງຂອງການສະແດງ ທັງຢູ່ຫຼັງແລະໜ້າເວທີ ແລະຄອຍສ້າງບັນຍາກາດການເຮັດວຽກ ໃຫ້ເປັນໄປຢ່າງສ້າງສັນ.
- ທຸກໆຂັ້ນຕອນຂອງກິດຈະກຳລະຄອນ ລ້ວນແຕ່ສຳຄັນ ແລະ ເປັນກິດຈະກຳເພື່ອການຮຽນຮູ້ຂອງເດັກທັງໝົດ. ຢ່າໃຫ້ຄວາມສຳຄັນກັບການສະແດງ ຫຼາຍເກີນໄປຜົນສຳເລັດຂອງກິດຈະກຳນີ້ບໍ່ໄດ້ປະເມີນຈາກຜົນສຳເລັດຂອງ ການສະແດງ ແຕ່ແມ່ນພັດທະນາການ ແລະການຮຽນຮູ້ຂອງເດັກ.
- ຖ້າທ່ານເປັນຄູສອນ ພາສາລາວ-ວັນນະຄະດີ ລອງຖາມໂຕທ່ານເອງເບິ່ງວ່າ ຖ້າໃຫ້ວຽກບ້ານລູກສິດຂອງທ່ານໄປອ່ານເລື່ອງແລະວິເຄາະບົດ ຫຼືຕິລະຄອນໃນເລື່ອງໃດໜຶ່ງ ທ່ານຄິດວ່າ ລູກສິດຂອງທ່ານຈັກຄົນທີ່ຈະເຮັດວຽກບ້ານນັ້ນມາສົ່ງທ່ານ ຫຼື ອ່ານວັນນະຄະດີເລື່ອງນັ້ນແທ້ໆ? ຈົ່ງຕອບໂຕເອງຢ່າງຈິງໃຈ, ແລ້ວສັງເກດຄືນ ກິດຈະກຳທີ່ໄດ້ນຳສະເໜີໃນບົດນີ້ ລູກສິດຂອງທ່ານໄດ້ວິເຄາະບົດ ແລະ ຕິລະຄອນໃນວັນນະຄະດີຫຼືບໍ່?


ห้ามจำหน่าย


ເວທີພ້ອມ, ສຽງພ້ອມ, ໄຟພ້ອມ, ນັກສະແດງພ້ອມ...
ຄູ ພ້ອມແລ້ວບໍ່...?

ບົດທີ 13

ເກມຫຼິ້ນສິ່ງເສີມການອ່ານ

ຮູບ: ວິຣະວົງ ກັດຕິຍະສັກ





I. ບົດນຳ

ເກມຫຼິ້ນ ກໍແມ່ນການຫຼິ້ນຕ່າງໆ ເຊັ່ນ ຈ້ຳມູ່ມີ້, ກະປູໄລ່ງັບ, ລູ່ລີ່ເຂົ້າສານ, ອີ່ມອນເຊື່ອງຜ້າ, ມ້າບິນ ໆລໆ ທີ່ເດັກນ້ອຍຫຼິ້ນນຳກັນຢູ່ກາງເດີ່ນບ້ານເດີ່ນໂຮງຮຽນ ແຕ່ໃດມາ.

ຍ້ອນວ່າ ເກມຫຼິ້ນແຕ່ລະຢ່າງ ມີກະຕິກາໃຫ້ຜູ້ຫຼິ້ນທຸກຄົນຕ້ອງປະຕິບັດຄືກັນ ສະເໝີພາບກັນ ທັງໃຫ້ຄວາມມ່ວນຊື່ນ ຕື່ນເຕັ້ນ ຈຶ່ງເຮັດໃຫ້ເດັກນ້ອຍຮຽນຮູ້ທີ່ຈະເຂົ້າກັບໝູ່ຢ່າງເທົ່າທຽມກັນ. ເດັກໄດ້ເຝິກທັກສະການສື່ສານ ມະນຸດສຳພັນ ການແບ່ງປັນກັບໝູ່ ການຄອງຄອຍຢ່າງມີລະບຽບວິໄນ ຊຶ່ງທັງໝົດນັ້ນແມ່ນພື້ນຖານໃຫ້ແກ່ການຮຽນຮູ້ທັກສະທາງສັງຄົມ. ເດັກຈະກາຍເປັນຄົນເຂົ້າໝູ່ໄດ້ງ່າຍ, ກ້າສະແດງອອກ ແລະ ຮູ້ແລກປ່ຽນ-ແລກປ່ຽນທັງຄວາມຮູ້ຄວາມເຂົ້າໃຈ ແລະ ແລກປ່ຽນທັງເຜື່ອແຜ ຄວາມສຸກຄວາມມ່ວນນັ້ນອີກ.

ດ້ວຍເຫດຜົນອັນນີ້ວຽກງານສົ່ງເສີມການອ່ານຈຶ່ງປະກອບດ້ວຍການສົ່ງເສີມໃຫ້ເດັກນ້ອຍ ຫຼິ້ນເກມຕ່າງໆ ບໍ່ວ່າຈະແມ່ນເກມພື້ນບ້ານລາວເຮົາດັ່ງກ່າວມາເທິງນີ້ ຫຼືເກມທີ່ປະດິດຂຶ້ນໃໝ່ຢ່າງເໝາະສົມກັບໄວ. ນອກຈາກນີ້ ຄູຍັງສາມາດນຳໃຊ້ ສອດແຊກ ການອ່ານປຶ້ມ ແລະ ເລົ່ານິທານເຂົ້າໃນເກມໄດ້ອີກ.

II. ຫຼັກການໃນການນຳພາຫຼິ້ນເກມ

ເມື່ອຈະສອນເກມໃໝ່ໃຫ້ນັກຮຽນ ຄູຈະຕ້ອງອະທິບາຍກະຕິການ ຫຼິ້ນໃຫ້ນັກຮຽນເຂົ້າໃຈກ່ອນ ໂດຍບອກຫຼັກການສຳຄັນຂອງເກມຄື:

- ຈຳນວນຜູ້ຫຼິ້ນ
- ອຸປະກອນ
- ສະຖານທີ່ໆເໝາະສົມ
- ກຳມະການຜູ່ຕັດສິນ(ຄູເອງ)

ສ່ວນຜົນຂອງເກມ ຈະແພ້ຫຼືເສຍແບບໃດນັ້ນ ບາງເກມກໍມີ ບາງເກມ ກໍພຽງແຕ່ຫຼິ້ນມ່ວນກັນ. ສິ່ງສຳຄັນໃນຂັ້ນຕອນນີ້ກໍຄື ໃຫ້ນັກຮຽນທຸກຄົນກຳໄດ້ ວ່າ ຕົນຈະຕ້ອງປະກອບສ່ວນແບບໃດ. ເຮັດແນວໃດແມ່ນໄດ້(ຫຼືແພ້) ແລະ ເຮັດແນວໃດແມ່ນເສຍ. ເກມຈະສຸດລົງເມື່ອໃດ? ເວລາຄູແນະນຳເກມກໍໃຫ້ສະ ແດງອອກທັນທີວ່າ ເກມຈະມ່ວນຖ້າທຸກຄົນຕັ້ງໃຈຫຼິ້ນຕາມກະຕິກາ.

III. ການດຳເນີນກິດຈະກຳ.

ຖ້າຫຼິ້ນເກມພື້ນບ້ານເດີມໆ ຂອງເຮົາກໍຈະງ່າຍ ເພາະເດັກສ່ວນ ຫຼາຍກໍຮູ້ກະຕິກາແດ່ແລ້ວ ເຄີຍຫຼິ້ນມາແລ້ວແຕ່ເຖິງປານນັ້ນ ຄູກໍຍັງສາມາດ ສອດແຊກ ເນື້ອໃນສິ່ງເສີມການອ່ານເຂົ້າໄປຕື່ມ ເຊັ່ນນຳໃຊ້ຄຳສັບເປັນຄຳ ສັ່ງຄຳຫຼິ້ນໃນເກມນັ້ນໆ. ຕົວຢ່າງເອົາຊື່ຕົວລະຄອນໃນເລື່ອງຫຼືນິທານທີ່ອ່ານ ແລ້ວມາໃຊ້ໃນເກມ.

3.1 ຂັ້ນຕອນການຫຼິ້ນ

1. ຄູບອກຊື່ເກມ.
2. ອະທິບາຍການຫຼິ້ນ (ຈຳນວນຄົນຫຼິ້ນ, ການໄດ້-ເສຍ, ອຸປະກອນ, ຄຳສັ່ງ (Key word), ສະຖານທີ່).
3. ຄູພາເຮັດໃຫ້ເບິ່ງໜ້ອຍໜຶ່ງ (ສາທິດ).

4. ນັກຮຽນຫຼິ້ນເກມຈົນແລ້ວໂດຍມີຄູເປັນກຳມະການ, ອອກຄຳສັ່ງ ແລະ ຕິດຕາມໂດຍຕະຫຼອດ.
5. ຖອດຖອນບົດຮຽນ ວ່າເກມນີ້ໃຫ້ຫຍັງເຮົາແດ່. ມີຫຍັງທີ່ຈະຕ້ອງປັບປຸງ ບາດຫຼິ້ນເທື່ອໜ້າ.


3.2. ຕົວຢ່າງເກມສິ່ງເສີມການອ່ານ.

ເກມກະປູໄລ່ງັບ: ພັດທະນາມາຈາກໝາກ"ກະປູໄລ່ງັບ"ມາເປັນເກມເລົ່ານິທານປະກອບ. ຈະເອົາເລື່ອງໃດກໍໄດ້ເຊັ່ນ ກຳພ້າຜີນ້ອຍ, ໄກ່ນ້ອຍຕົກຂຸມ ຫຼື ອື່ນໆ ທີ່ມີຄຳສັບ/ຊ້ຳ ຕົວລະຄອນໃຫ້ເຮົາໄດ້ເວົ້າອອກມາເລື້ອຍໆ ຕາມເນື້ອເລື່ອງ ເຊັ່ນ ລາຍອ່ອມອ້ຍ ໃນ "ໄກ່ນ້ອຍຕົກຂຸມ", ກຳພ້າ ໃນ "ກຳພ້າຜີນ້ອຍ" ໆລໆ.

ໃນທີ່ນີ້ຈະເອົາເລື່ອງເຜິ້ງໃນປຶ້ມ "ເລື່ອງມ່ວນໆຂອງສັດ" (ຈັດພິມໂດຍສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ປີ 2008), ບົດທີ18 ໜ້າ 75.



3.3. ວິທີຫຼິ້ນ




ຄູເລືອກເອົາຄຳສັບ"ເຜົ້ງ"ເປັນຄຳຫຼິ້ນ (ຄຳສັ່ງກ່ວ່າ, Key word)ແລ້ວ ອ່ານບົດນີ້ປະກອບການຫຼິ້ນເກມ.

1. ຊື່ເກມ"ເຜົ້ງກັບຕ່ຳ"
2. ອະທິບາຍການຫຼິ້ນ :

- ຈຳນວນຜູ້ຫຼິ້ນ ນັບແຕ່ຊາວຄົນຂຶ້ນໄປ ແຕ່ບໍ່ຄວນຮອດ 50.
- ແບ່ງຜູ້ຫຼິ້ນເປັນສອງຝ່າຍ ຝ່າຍເຜົ້ງກັບຝ່າຍຕ່ຳ.
- ຈັດແຖວສອງແຖວ (ແຖວເຜົ້ງກັບແຖວຕ່ຳ) ແລ້ວປ່ຽນແຖວເປັນສອງວົງ ມົນຊ້ອນ. ຊັບຊ້ອນສອງວົງມົນເປັນວົງມົນດຽວ ໂດຍໃຫ້ຜູ້ເປັນເຜົ້ງກັບ ຜູ້ເປັນຕ່ຳຢູ່ສັບວ່າງກັນ.
- ທຸກຄົນຕ້ອງຈື່ວ່າຕົນເອງເປັນເຜົ້ງ, ຫຼືຕົນເອງເປັນຕ່ຳ ແລະຕັ້ງໃຈຟັງບົດ ເລື່ອງ ແລະຄຳສັ່ງ.
- ແຕ່ລະຄົນກາງແຂນອອກ ແລ້ວກຳມືຊ້າຍຊີ້ລົງ ມືຂວາຫງາຍແບອອກ,

ກຸ່ມຈະຫຸບໄວໆ ເມື່ອມີຄຳສັ່ງ (ໝາຍຄວາມວ່າ ມືຊ້າຍ ນິ້ວຊີ້ໆລົງກຸ່ມ ຫຼືບຫຼືກ ມືຂວາໝູ່ຂ້າງຊ້າຍທີ່ຈະຫຸບເອົານິ້ວຊີ້ເຮົາ. ສ່ວນມືຂວາເຮົາຜັດ ຕ້ອງຫຸບເອົານິ້ວຊີ້ໝູ່ (ເບິ່ງຮູບ).

3. ຄູຈະອ່ານບົດເລື່ອງໄປໂດຍໃຫ້ ຄຳຫຼົ້ນວ່າ"ເຜີ້ງ" ເມື່ອຮອດຄຳວ່າ"ເຜີ້ງ" ບາດໃດ ທຸກຄົນຈະຫຸບມືຂວາໂລດ. ຜູ້ເປັນເຜີ້ງກໍຫຸບເອົານິ້ວຊີ້ຂອງຕໍ່ ຜູ້ເປັນຕໍ່ກໍຮຸບເອົານິ້ວຊີ້ເຜີ້ງ.
4. ກຳນົດເວລາຫຼົ້ນ ອາດຈະ 5-10ນາທີ ໃຫ້ພໍດີເກມຫຼົ້ນໄດ້ລຸ່ນຄ່ອງຕົວ, ມ່ວນໆແລ້ວກໍເຊົາ. ເກມນີ້ບໍ່ມີການນັບຜົນໄດ້-ເສຍ ຫຼົ້ນມ່ວນແລະໃຫ້ ໂອກາດທຸກຄົນ ແກ້/ປັບປຸງຕົວ ໂດຍບໍ່ຕ້ອງອອກຈາກເກມ.
5. ການຖອດຖອນບົດຮຽນ. ຫຼົ້ນເກມທຸກຄັ້ງ ຄວນມີເວລາຈັກ 2-3 ນາທີ ເພື່ອສົນທະນາ ຖອດຖອນບົດຮຽນ ແລະເຂົ້າໃຈເກມດີຂຶ້ນຈົນວ່ານັກ ຮຽນແຕ່ລະຄົນ ສາມາດເອົາເກມນີ້ ໄປພາໝູ່ ຫຼື ນັກຮຽນຮຸ່ນນ້ອຍກວ່າ ຫຼົ້ນໄດ້. ການສົນທະນາກໍຈະມີຄຳຖາມເຊັ່ນ: -ຫຼົ້ນເກມນີ້ເຮົາໄດ້ຫຍັງ (ຄຳຕອບຈາກແຕ່ລະຄົນໃຫ້ຊີ້ມືແລ້ວຕອບເທື່ອລະຄົນ): ມ່ວນ, ຕ້ອງມີ ສະມາທິ, ມີສະຕິ, ຕ້ອງໄວ ມືຊ້າຍຕ້ອງຫຼົບຫຼີກ, ມືຂວາພັດຕ້ອງຫຸບ ເອົາມືໝູ່. ມີການທ້າທາຍ, ຕ້ອງມີໄຫວພິບດີ, ເຮົາໄດ້ແກ້ໂຕ, ໄດ້ຟັງ



ເລື່ອງມີສາລະ, ທຳອິດມີແຕ່ເສງ, ຕໍ່ມາເຮັດໄດ້ດີ, ໆລໆ ໂດຍຄູເປັນຜູ້ ນຳພາການຖາມ-ຕອບ. ຖ້າຜູ້ໃດສົນໃຈປົດເລື່ອງເຜີ້ງກໍສາມາດໄປຢືມ ປຶ້ມໄປອ່ານໄດ້-ດັ່ງນີ້ເປັນຕົ້ນ.

ການສົນທະນາແບບນີ້ ຈະຊ່ວຍໃຫ້ຜູ້ທີ່ບໍ່ທັນເຂົ້າໃຈເກມດີປານ ໃດນັ້ນ ກໍຈະເຂົ້າໃຈດີຂຶ້ນ, ເຝິກໃຫ້ນັກຮຽນມີທັກສະໃນການສົນທະນາ ເມື່ອຂະເຈົ້າໄດ້ຫຼິ້ນເກມມາສົດໆຮ້ອນໆ ກໍຈະສາມາດມີຄວາມເຫັນ ໄດ້. ແມ່ນແຕ່ເດັກ ປ.1 ຫຼື ອະນຸບານ 3 ກໍ ສົນທະນາໄດ້ດີ.

IV. ຄຳແນະນຳ.

1. ການສາທິດເກມໜ້ອຍໜຶ່ງກ່ອນ ເປັນສິ່ງສຳຄັນ, ຈະເຮັດໃຫ້ນັກຮຽນ ເລີ້ມຕົ້ນເກມໄດ້ດີ-ບໍ່ສັບສົນ.
2. ການອ່ານປົດ - ຄູຕ້ອງມີເຕັກນິກໃນການອ່ານ ເມື່ອອ່ານໄປແດ່ແລ້ວ



ບາດຈະຮອດ ຄຳຫຼິ້ນ(ເຜີ້ງ) ຕ້ອງມີລີລາຊ້າຫຼືໄວ ເຮັດກວນໆ ເພື່ອໃຫ້ເກມຍາກຂຶ້ນແດ່. ເດັກຈະຄອງຖ້າຢ່າງລະວັງ ບາງຄົນຈະຟ້າວເຮັດໄປກ່ອນ. ເດັກຕ້ອງກວດກາກັນເອງ. ຖ້າຄູອ່ານຈົນສະກົດຈິດນັກຮຽນໄດ້ ເກມກໍໄດ້ຜົນ ທັງດ້ານ ສາລະ ແລະຄວາມມ່ວນ. ເກມນີ້ອາດຈະຟົດຟື້ນ ຈົນຄວບຄຸມບໍ່ຢູ່ ເມື່ອມ່ວນຫຼາຍໆແລ້ວ ຄູຄວນຢຸດເກມໄດ້. ເພາະຖ້າເດັກໝົດສະມາທິແລ້ວກໍຫຼິ້ນຕໍ່ບໍ່ໄດ້. ຫຼິ້ນເກມທຸກເກມ ຄວນພາເຊົາເມື່ອມ່ວນຄັກໆແລ້ວ-ຢ່າຖ້າຈົນເກມຮ້ອຍລົງ.

3. ການຈັດວົງມົນນັ້ນ ຖ້າເຮັດຕາມຂໍ້ສາມ-3.3.ວິທີຫຼິ້ນກໍຈະງ່າຍດາຍ. ໃຊ້ເວລາແຕ່ພຽງ 2 ນາທີ ກໍຈັດວົງມົນແລ້ວການຈັດແຖວ ໃຫ້ເຮັດເປັນສອງແຖວແລ້ວຄູກັນໂລດ ບໍ່ທັນບອກວ່າຝ່າຍໃດເປັນເຜີ້ງຝ່າຍໃດເປັນຕໍ່. ເດັກມັກຈະຢາກຢູ່ໃກ້ເພື່ອນທີ່ສະໜິດກັນເຮັດໃຫ້ອຸ້ນອາຍແລ່ນໄປແລ່ນມາ. ເມື່ອຈັດໄດ້ສອງແຖວ ກໍໃຫ້ແຖວໜຶ່ງຍ່າງ (ຕອນນີ້ບອກວ່າເປັນເຜີ້ງໄດ້) ເປັນຮູບວົງມົນ ແລ້ວຈຸທີ 2 ກໍຍ່າງເປັນວົງມົນຢູ່ຊັ້ນນອກ-ເປັນຕໍ່. ຈາກນັ້ນໃຫ້ທັງສອງວົງຢຸດ ແລ້ວວົງໃນກ້າວຖອຍຫຼັງລົງມາຢູ່ສັບຫວ່າງກັນກັບວົງນອກ. ຢ່າລືມທວນຄືນ ເຜີ້ງ ຫຼື ຕໍ່ອີກເທື່ອໜຶ່ງກ່ອນຫຼິ້ນເກມ.

4. ຄູອາດຢືນອ່ານບົດຢູ່ກາງວົງ ທຸກຄົນຈຶ່ງໄດ້ຍິນຄັກ.

V. ຜົນໄດ້ຮັບຈາກເກມຊະນິດນີ້.

- ເດັກໄດ້ຟັງບົດເລື່ອງ ຈາກຄູ ດ້ວຍສະມາທິ, ສະຫງົບ. ໄດ້ຮຽນຮູ້ຄຳສັບເນື້ອໃນຂອງບົດໂດຍບັງເອີນ. ເມື່ອສົນໃຈກໍຈະໄປຊອກປຶ້ມມາອ່ານ. ເມື່ອຕິດໃຈປຶ້ມນີ້ແລ້ວ ກໍຈະສົນໃຈປຶ້ມອື່ນຕໍ່ໆໄປ. ເດັກຈະຮູ້ວ່າປຶ້ມທຸກຫົວ ພາມ່ວນໄດ້-ເອົາມາເຮັດເປັນເກມໄດ້.
- ເດັກໄດ້ມ່ວນນຳໝູ່ ແຕ່ດ້ວຍຄວາມສາມາດ ຂອງຕົນເອງ ຈະຈັບໄດ້ບໍ່? ຈະຫຼີກວິດບໍ່? ສະໝອງໄດ້ພັດທະນາຫຼາຍ, ເດັກມີຄວາມຕັ້ງໃຈ ກະຕືລືລົ້ນຢາກຫຼິ້ນຕໍ່ ເພື່ອປັ່ງປຸ່ງຕົນເອງຢູ່ຕະຫຼອດເວລາ.

- ຫຼິ້ນເກມນີ້ສຸດລົງ ຄວນໃຫ້ນັກຮຽນພັກສະໜົງບຢູ່ບຶດນຶ່ງ ຈຶ່ງເຂົ້າຮຽນຕໍ່ ເພາະ ຂະເຈົ້າຕື່ນເຕັ້ນຫຼາຍແລ້ວ.
- ເກມນີ້ຫຼິ້ນໄດ້ກັບປຶ້ມທຸກຫົວ ຂຶ້ນກັບວ່າ ຄູຈະເອົາເລື່ອງໃດ ແລ້ວກໍ ເລືອກ ຄຳສັບ/ຊື່ ຕົວລະຄອນ ທີ່ ປະກົດອອກໃນເລື່ອງນັ້ນ ຫຼາຍໆຄັ້ງ- ຖ້າບໍ່ຫຼາຍ ຄູກໍຕື່ມໃສ່ໄດ້ ແຕ່ໃຫ້ເໝາະສົມ.


ເອົ້າ ! ! !
ໃສຢາກ່ອນ ຊິ້ມີຂຶ້ນ ... !!!

ຫ້າມຈຳໜ່າຍ


ບົດທີ 14

ເພັ່ງປະກອບທ່າທາງ

ຮູບ: ວິຣະວົງ ກັດຕິຍະສັກ







I. ບົດນຳ

ການໃຫ້ນັກຮຽນ ຮ້ອງເພັງມ່ວນຊື່ນ ທັງປະກອບທ່າທາງ ເຕັ້ນ ຍ້ອນ ຟ້ອນ ໃສ່ເພັງ ແມ່ນກິດຈະກຳທີ່ພັດທະນາເດັກນ້ອຍໄດ້ຢ່າງຮອບດ້ານ. ຄູທີ່ສະຫຼາດ ມັກສ້າງໂອກາດ ໃຫ້ນັກຮຽນໄດ້ເຮັດກິດຈະກຳມ່ວນໆນີ້ ທຸກວັນ ແຮ່ງດີ ນັກຮຽນຈະເຫັນວ່າ ການຮຽນນັ້ນ ບໍ່ເປັນຕາເບື່ອໜ່າຍເລີຍ. ຖ້າຄູນຳ ໃຊ້ກິດຈະກຳນີ້ ເຂົ້າໃນຂະບວນການສິ່ງເສີມການອ່ານກໍແຮ່ງມີປະໂຫຍດ ຫຼາຍດ້ານຕື່ມ. ນັກຮຽນອ່ານແລ້ວ ຫຼິ້ນມ່ວນ ນຳເກມ ນຳເພັງ ສະຫຼັບກັນ ນັກ ຮຽນຈະເກີດຄວາມສາມັກຄີໜັກແໜ້ນ ມີຄວາມພ້ອມພຽງ ກຽມເຂົ້າສູ່ວຽກ ອັນໃດກໍໄດ້ ຄືມີຄວາມຕື່ນຕົວ ມີຊີວິດຊີວາຢູ່ສະເໝີ.

ການຮ້ອງເພັງ ມີສອງແບບ ອັນໜຶ່ງ ແມ່ນ ຮ້ອງຮວມໝູ່ ໂດຍບໍ່ເຮັດ ທ່າທາງ ເປັນການທວນຄືນ ເພັງທີ່ເຄີຍຮ້ອງມານຳກັນ ແຕ່ເນັ້ນໃຫ້ນັກຮຽນ ຮ້ອງໄດ້ພ້ອມພຽງ ສຽງບໍ່ເຫຼື ແລະ ຮ້ອງ ອອກເຕັມສຽງແທ້ ເດັກຈຶ່ງຈະໄດ້ ຮັບຄວາມມ່ວນຊື່ນ ທັງ "ຮ້ອງເພັງເປັນ" ໄປນຳ. ນັກຮຽນ ປະຖົມ ຄວນຮ້ອງ ເພັງໄດ້ຫຼາຍສິບເພັງແຮ່ງດີ.ຄູຄວນພານັກຮຽນເລືອກເພັງທີ່ເໝາະສົມ,ເນື້ອໃນ ມີຄວາມໝາຍດີ ດ້ານຄວາມຮັກຊາດ, ຮັກຄວາມງາມຂອງທຳມະຊາດ, ເພັງ ມູນເຊື້ອປະຕິວັດ, ເພັງເກົ່າໆ ທີ່ອະມະຕະ ຫຼື ເພັງທີ່ເວົ້າເຖິງທ້ອງຖິ່ນ(ບ້ານເກີດ ເມືອງນອນ) ຂອງຕົນ.

ໃນກິດຈະກຳສິ່ງເສີມການອ່ານ ເຮົາມີເພັງຈຳນວນນຶ່ງ ເພື່ອໃຫ້ເດັກ ຮ້ອງປະກອບທ່າທາງ ຊຶ່ງ ຄ້າຍ ຄື ການອອກກຳລັງກາຍໄປໃນຕົວ ໃຫ້ເດັກ ໄດ້ຜ່ອນຄາຍອາລົມ. ເພັງເຫຼົ່ານີ້ ໃຊ້ໄດ້ ແຕ່ອະນຸບານຮອດ ປະຖົມປາຍ.

ນອກຈາກນີ້ ຄູສາມາດ ພານັກຮຽນ ແຕ່ງເນື້ອເພັງໃໝ່ໆ ໃສ່ທຳນອງ ທີ່ນິຍົມ ກັນຫຼາຍ ເພື່ອຮ້ອງຫຼິ້ນ ໃນໂຮງຮຽນ ເພື່ອໃຫ້ມີເພັງຫຼາກຫຼາຍ.

II. ຂັ້ນຕອນ ການສອນ - ພາຮ້ອງ

ກ. ການຮ້ອງເພັງລວມໝູ່

1. ຮ້ອງເພັງລວມໝູ່ ແມ່ນເລືອກເອົາເພັງທີ່ທຸກຄົນຮ້ອງໄດ້ແດ່ແລ້ວມາ ຮ້ອງນຳກັນ. ໃນກໍລະນີນີ້ ຄູເປັນຜູ້ຊວນນັກຮຽນຊ່ວຍກັນ ສະເໜີຊື່ເພັງ ແລ້ວຕົກລົງກັນໃຫ້ໄດ້ວ່າຈະຮ້ອງເພັງໃດ. ຕ້ອງຕົກລົງກັນກ່ອນຈະເລີ່ມ ຕົ້ນຮ້ອງ. ຢ່າບອກນັກຮຽນໝົດຫ້ອງວ່າ ຮ້ອງໄປໂລດເພັງໃດກໍໄດ້.
2. ເມື່ອເລືອກເພັງໄດ້ແລ້ວ ຄູ ພາຂຶ້ນສຽງ ໃຫ້ເປັນສຽງທີ່ທຸກຄົນຈະຮ້ອງ ນຳກັນໄດ້ ແລ້ວໆ ຄູ ຈຶ່ງນັບໜຶ່ງ ສອງ ສາມ. ຮ້ອງນຳກັນ.
3. ແອບໃຫ້ນັກຮຽນສຸດເພັງ 1 ຮອບ ແລ້ວກັບມາເອົາທ່ອນ 3 ກັບ 4 ອີກ ໃໝ່ ຕາມແບບທີ່ເພິ່ນອັດແຜ່ນໄວ້.



ຂ. ເພັງປະກອບທ່າທາງ

1. ຄູຮ້ອງໃຫ້ຟັງ: ຄູສະເໜີ ຊື່ເພັງ ແລ້ວຮ້ອງໃຫ້ນັກຮຽນຟັງ (ໂດຍບໍ່ທັນເອົາເນື້ອເພັງອອກມາໃຫ້ເຫັນ). ຄູຮ້ອງ 1-2 ເທື່ອ.
2. ນັກຮຽນຮ້ອງນຳຫຼັງຄູ: ໃຫ້ນັກຮຽນຮ້ອງນຳຫຼັງເທື່ອລະຕອນ (ແຖວນຶ່ງມີ 2 - 3 ຕອນ) ຖ້າມີບົດເພັງຂຽນໃສ່ກະດານ ກໍດີ ຫຼືອາດຂຽນໂຕໃຫຍ່ໃສ່ເຈ້ຍແຜ່ນໃຫຍ່ໄວ້. ລົ້ມຄືນອີກ 2 - 3 ເທື່ອ ແລ້ວນັກຮຽນອາດຈະຮ້ອງເອງໄດ້. ຖ້າມີດົນຕີປະກອບໃສ່ນຳກໍແຮ່ງດີ.
3. ການປະກອບທ່າທາງ
   - ຄູເຮັດທ່າທາງປະກອບບົດເພັງໃຫ້ເດັກເບິ່ງ 1 ເທື່ອ ແລ້ວ ພາຮ້ອງ ແລະ ປະກອບທ່າທາງໄປນຳ ເຮັດຫຼາຍຖ້ຽວ ຈົນເຮັດໄດ້ທຸກຄົນ (ອາດ 2-3 ຖ້ຽວກໍໄດ້ແລ້ວ ເດັກນ້ອຍຈື່ທ່າທາງໄດ້ໄວ)
   - ເຝິກຊ້ອມໃສ່ດົນຕີ (ຖ້າມີ)
   - ໃຫ້ເດັກຈຳນວນໜຶ່ງສະໝັກໃຈ ອອກມາ ໜ້າຫ້ອງ ພາໝູ່ເຮັດອີກ.

III. ຄຳແນະນຳ

ໃນການສອນ ຮ້ອງເພັງປະກອບທ່າທາງນີ້ ຄູຕ້ອງເຮັດແທ້ເຮັດວ່າ ເຮັດຈິງຈັງ ໝົດແຮງ ເຮັດໃຫ້ເປັນແບບຢ່າງ ທ້າສ້າງແຮງຈູງໃຈ ໃຫ້ເດັກເຫັນວ່າມ່ວນ ຢາກເຮັດນຳ. ຕ້ອງເຂົ້າໃຈວ່າ ຖ້າຄູສອນແຕ່ 60% ຂອງຄວາມສາມາດຂອງຕົນ ນັກຮຽນຈະເຮັດໄດ້ແຕ່ 30-40%. ຄູຕ້ອງເຮັດເຕັມ 100% ເພື່ອເດັກຈະໄດ້ເຮັດຮອດ 80%.

- ຄູຕ້ອງສັງເກດວ່ານັກຮຽນຄົນໃດແດ່ທີ່ຍັງຮ້ອງບໍ່ໄດ້ ເຮັດທ່າທາງບໍ່ເປັນ ໄປຫາເຂົາຢູ່ບ່ອນຄູຊ່ອຍພາເຮັດຢ່າໃຫ້ເຂົາຕົກເຮ່ຍອອກຈາກໝູ່.ການຮ້ອງເພັງເປັນກິດຈະກຳຮວມໝູ່ແທ້ໆ ຕ້ອງເຮັດທຸກຄົນ ມ່ວນນຳກັນ ໜົດຫ້ອງ. ໃຫ້ເດັກຊຶມຊັບເອົາຄວາມມ່ວນ ອັນວິເສດນີ້ ເຂົາຈຶ່ງຈະເຂົ້າກັບໝູ່ ໄປນຳໝູ່ໄດ້ດີໃນດ້ານການຮຽນນຳ.

- ການສອນເພັງປະກອບທ່າທາງ ຍັງ ແມ່ນສອນໃຫ້ເດັກຮູ້ຈັງຫວະດົນຕີ ມີການຍ້ອນ ເຕັ້ນ ແບບງ່າຍໆ ຢ່າງເປັນເອກະພາບກັນ ອັນຈະເປັນພື້ນຖານ ໃຫ້ການຮຽນສິລະປະດົນຕີໃນຂັ້ນຕໍ່ໄປ.

IV. ແນະນຳທ່າທາງປະກອບເພັງຕ່າງໆ

1. ເພັງ ສຸຂະພາບຈະດີ

ເນື້ອເພັງ	ທ່າທາງ
ສຸຂະພາບຈະດີ ແລະຈະມີພະລັງ ມີພະລັງ ທັງກາຍແລະຈິດໃຈ ສຸຂະພາບຈະດີ ແລະຈະມີພະລັງ	(ທຸກຄົນຢືນ ອອກນອກໂຕະຕັ່ງ ຢືນຫ່າງກັນຄ່າສອກ) ຍົກຂາ ຍ່ຳຕີນ ຊ້າຍ ຂວາ ຕາມຈັ່ງຫວະເພັງ (ເລີ່ມຕີນຊ້າຍສະເໝີ) ແຂນຍັງແກວ່ງ ຄ່ອຍໆ ຕາມທຳມະຊາດຄືເຮົາຍ່າງ
ເຮົາຕ້ອງພ້ອມໃຈກັນ ຍົກມືຊ້າຍ ຍົກມືຂວາ	ຍົກແຂນຊ້າຍຂຶ້ນສູງກຳມືຍົກແຂນ ຂວາ ກຳມື (ເຮັດແບບ ແຂງແຮງ ຄື ອອກກຳລັງກາຍ)
ສຸຂະພາບຈະດີ ແລະຈະມີພະລັງ ມີພະລັງ ທັງກາຍແລະຈິດໃຈ ສຸຂະພາບຈະດີ ແລະຈະມີພະລັງ	ຍົກຂາ ຍ່ຳຕີນ ຊ້າຍ ຂວາ ຕາມຈັ່ງ ຫວະເພັງ (ເລີ່ມຕີນຊ້າຍສະເໝີ) ແຂນຍັງແກວ່ງຄ່ອຍໆ ຕາມທຳມະ ຊາດຄືເຮົາຍ່າງ
ເຮົາຕ້ອງພ້ອມໃຈກັນ ຍົກມືຊ້າຍ ຍົກມືຂວາ ຍົກຂາຊ້າຍ ຍົກຂາຂວາ	ທັງຍົກແຂນຊ້າຍ ຂວາ ແລ້ວ ຍົກຂາ ຊ້າຍ ຂາຂວາ ນຳ
ສຸຂະພາບຈະດີ ແລະຈະມີພະລັງ ມີພະລັງ ທັງກາຍແລະຈິດໃຈ ສຸຂະພາບຈະດີ ແລະຈະມີພະລັງ	ຍົກຂາ ຍ່ຳຕີນ ຊ້າຍ ຂວາ ຕາມຈັ່ງ ຫວະເພັງ (ເລີ່ມຕີນຊ້າຍສະເໝີ) ແຂນຍັງແກວ່ງຄ່ອຍໆ ຕາມທຳມະ ຊາດຄືເຮົາຍ່າງ



ເຮົາຕ້ອງພ້ອມໃຈກັນ ຍົກມືຊ້າຍ ຍົກມືຂວາ ຍົກຂາຊ້າຍ ຍົກຂາຂວາ ຮ່ອນແອວ ແກວ່ງກົ້ນ	ຍົກແຂນຊ້າຍ ຂວາ ຍົກຂາຊ້າຍ ຂວາ ທ່ອນແອວ ແກວ່ງກົ້ນ
ສຸຂະພາບຈະດີ ແລະຈະມີພະລັງ ມີພະລັງ ທັ້ງກາຍແລະຈິດໃຈ ສຸຂະພາບຈະດີ ແລະຈະມີພະລັງ	ຍົກຂາ ຍ່ຳຕີນ ຊ້າຍ ຂວາ ຕາມຈັ່ງຫວະເພັ່ງ (ເລີ່ມຕີນຊ້າຍສະເໝີ) ແຂນຍັ່ງແກວ່ງຄ່ອຍໆ ຕາມທຳມະຊາດຄືເຮົາຍ່າງ
ຍົກຂາຊ້າຍ ຍົກຂາຂວາ ຮ່ອນແອວ ແກວ່ງກົ້ນ ຈັບຫົວ ປິ່ນອ້ອມໂຕ	ຍົກແຂນຊ້າຍ ຂວາ ທ່ອນແອວ ແກວ່ງກົ້ນ ແລ້ວ (ເອົາມື) ຈັບຫົວ ປິ່ນໂຕ

ແລ້ວ ຮ້ອງແລະເຮັດທ່າທາງ ທັ້ງໝົດ ປະກອບອີກ 1 ຮອບເພັ່ງ.

ໝາຍເຫດ : ເພັ່ງນີ້ແມ່ນ ການອອກກຳລັງກາຍ ສະນັ້ນຕ້ອງເຮັດຂຶ້ງຂັ້ງ ເປັນຈັ່ງຫວະພ້ອມພ້ຽງກັນແທ້ໆ ແລ້ວຈະມ່ວນທີ່ສຸດ.

2. ເພັງ ລິດອີ່ແຕ່ນ

ເນື້ອເພັງ	ທ່າທາງ
ແຕ່ນ ແຕ່ນ ແຕ່ນ ຂັບລິດອີ່ ແຕ່ນ ໝຸນພວງມະໄລ	ເຮັດມື ຄື ຈັບພວງມາໄລຂັບລິດ
ລ້ຽວຂວາ ແລ້ວມາລ້ຽວຊ້າຍ ລ້ຽວຂວາ ແລ້ວມາລ້ຽວຊ້າຍ ໝຸນພວງມະໄລ ລ້ຽວໄປລ້ຽວມາ	ເຮັດລ້ຽວຂວາ ເຮັດລ້ຽວຊ້າຍ
ໂຈະ ພຶມ ພຶມ ໂຈະ ພຶມ ພຶມ“	ຢ້ອນລົງ ເອົາມືຕົບຂາແຮງໆ

3. ເພັງ ຈຸມມາຫຼິ້ນ

ເນື້ອເພັງ	ທ່າທາງ
ຈຸມມາຫຼິ້ນກັບໜຶ່ງ ຫຼິ້ນກັບໜຶ່ງ ຫຼິ້ນກັບໜຶ່ງ ຈຸມມາຫຼິ້ນກັບໜຶ່ງ ຈຸມມາ ຈຸມມາ ຫຼິ້ນກັບສອງ	ແກວ່ງແຂນຊ້າຍ ຕົບຍ່ຳທ່າເດີນ ຊ້າຍ ຂວາ
ຈຸມມາຫຼິ້ນກັບສອງ ຫຼິ້ນກັບສອງ ຫຼິ້ນກັບສອງ ຈຸມມາຫຼິ້ນກັບສອງ ຈຸມມາ ຈຸມມາ ຫຼິ້ນກັບສາມ	ແກວ່ງແຂນຊ້າຍ ຕົບຍ່ຳທ່າເດີນ ແກວ່ງແຂນຂວາມ່ຳ
ຈຸມມາຫຼິ້ນກັບສາມ ຫຼິ້ນກັບສາມ ຫຼິ້ນກັບສາມ ຈຸມມາຫຼິ້ນກັບສາມ ຈຸມມາ ຈຸມມາ ຫຼິ້ນກັບສີ່	ເຮັດຄືເກົ່າ ຕ່ ຕົບຍ່ຳທ່າເດີນ ທີບຕົບ ຊ້າຍ

ຈຸມມາຫຼິ້ນກັບສີ່ ຫຼິ້ນກັບສີ່ ຫຼິ້ນກັບສີ່ ຈຸມມາຫຼິ້ນກັບສີ່ ຈຸມມາ ຈຸມມາ ຫຼິ້ນກັບຫ້າ	ເຮັດຄືເກົ່າ ຕໍ່ ຕົນຍ່ຳທ່າເດີນ ທີບຕົນ ຊ້າຍ ແລະ ຂວາ
ຈຸມມາຫຼິ້ນກັບຫ້າ ຫຼິ້ນກັບຫ້າ ຫຼິ້ນກັບຫ້າ ຈຸມມາຫຼິ້ນກັບຫ້າ ຈຸມມາ ຈຸມມາ ຫຼິ້ນກັບຫົກ	ເຮັດຄືເກົ່າ ຕໍ່ ຕົນຍ່ຳທ່າເດີນ ແກວ່ງຫົວ ຊ້າຍ - ຂວາ
ຈຸມມາຫຼິ້ນກັບຫົກ ຫຼິ້ນກັບຫົກ ຫຼິ້ນກັບຫົກ	ເຮັດຄືເກົ່າ ຕໍ່ ຕົນຍ່ຳທ່າເດີນ ຫຼິ້ນຮ່ອນແອວນຳ
ຈຸມມາຫຼິ້ນກັບຫົກ ຈຸມມາ ຈຸມມາ ຫຼິ້ນກັບສູນ	ເຮັດຄືເກົ່າ ຕໍ່ ຕົນຍ່ຳທ່າເດີນ ຢຸດເຊົາທັນທີ.

4. ເພັ້ງ ຝົນຕົກ

ເນື້ອເພັ້ງ	ທ່າທາງ
ຝົນຕົກລົງມາ ຕົກລົງມາ ຕົກລົງມາ	ຍົກສອງແຂນຂຶ້ນ ກວັກມືລົງ
ໃຫ້ນາເຮົາທົ້ງ ນາເຮົາທົ້ງ ນາເຮົາທົ້ງ	ເອົາແຂນລົງ ມືຂວ້ຳກວາດຊ້າຍ - ຂວາ ກວ້າງສຸດແຂນ
ໃຫ້ໂສ້ງເຮົາປຸກ ໂສ້ງເຮົາປຸກ ໂສ້ງເຮົາປຸກ	ຕົບໂສ້ງຍ່ານຂາໂຕ້
ໃຫ້ເສື້ອເຮົາປຸກ ເສື້ອເຮົາປຸກ ເສື້ອເຮົາປຸກ	ຕົບໜ້າເອິກ ແຂນໄຂ່ວກັນ
ແມງຕັບເຕົ່າ ອອກລູກທາງຫຼັງ ເປັນແມງອີຫຍັງ ...	ສອງແຂນໄຂ່ວກັນຢູ່ທາງຫຼັງ ງ່ຽງໂຕໄປຊ້າຍຂວາ
ໂອ້ແມງຈີ່ນູນ ແມງຈີ່ນູນ ແມງຈີ່ນູນ	ຍື່ນມືອອກໄປທາງໜ້າສະຫຼັບຊ້າຍຂວາ
ຢູ່ຕົ້ນໝາກຂາມ ຕົ້ນໝາກຂາມ ຕົ້ນໝາກຂາມ	ຍົກແຂນຂຶ້ນ ກອມຫົວ (ຄືຕົ້ນໄມ້) ແກວ່ງໄປມາ

ຕາຕະລາງ ທີ 1

ບັນຊີປຶ້ມ ແລະ ອຸປະກອນ ທີ່ສາມາດນຳບັດຢືມທີ່ຂຽນເຕັມແລ້ວ ມາແລກປ່ຽນໄດ້.

ລຳດັບ	ລາຍການ	ລາຄາ	ອັດຕາແລກປ່ຽນ/ 1
1	ປຶ້ມບັນທຶກ	8,500	5
2	ກາວລາເຕັກ (ໃຫຍ່)	15,000	5
3	ສະກ້ອດໃສ	5,500	3
4	ສະກ້ອດຜ້າ	8,000	3
5	ສະກ້ອດເຈ້ຍ	7,000	3
6	ເຈ້ຍ A4	28,000	10
7	ມີດຕັດ	15,000	5
8	ບັນທັດ	8,000	3
9	ສະຕິກເກີ	10,000	3
10	ບັດຢືມ+ຊອງ	250	1 ບັດ ຕໍ່ 40 ຊຸດ
11	ບັດສະມາຊິກ	200	1 ບັດ ຕໍ່ 40 ບັດ
12	ລິງມ້ອຍກັບຫາງວິເສດ	8,000	3
13	ຜັກກູດຫີນ	13,000	3
14	ທ້າວເຕົ່າ	13,000	3
15	ຈໍລະນີ	15,000	3
16	ຕາຕາແລະທ້າວພໍ່ມົດ	8,000	3
17	ສັງສິນໄຊ 1	40,000	5
18	ສັງສິນໄຊ 2	40,000	5
19	ຢາກໄດ້ປູມເປົ້າ	30,000	5
20	ດາວຍິບຍັບ 3	8,000	3
21	ວັດຈະນານຸກົມປະກອບຮູບ (ປົກແຂງ)	60,000	10
22	ວັດຈະນານຸກົມພາສາລາວ	200,000	20
23	ບໍ່ຄົບຫ້າ	25,000	5
24	ເປັດນ້ອຍຂອງສົມປອງ	28,000	3
25	ໂດຣາເອມອນ 1	15,000	3
26	ໂດຣາເອມອນ 2	15,000	3

24/VH
ห้ามจำหน่าย

27	ໂດຣາເອມອນ 3	15,000	3
28	ໂດຣາເອມອນ 4	15,000	3
29	ໂດຣາເອມອນ 5	15,000	3
30	ສິນໄຊ	28,000	5
31	ໃຜວ່າເງິນເປັນພະເຈົ້າ	18,000	3
32	ຄອບຄົວແສນແພງ	15,000	3
33	ຄວາມສຸກຂອງກະທິ	19,500	5
34	ເຖິງ ໜຸ່ມສາວ	15,000	3
35	ລາມຄຳ 1	20,000	3
36	ລາມຄຳ 2	20,000	3
37	ລາມຄຳ 3	20,000	3
38	ລາມຄຳ 4	20,000	3
39	ລາມຄຳ 5	20,000	3
40	ລາມຄຳ 6	20,000	3
41	ທາງ 5 ສາຍ	10,000	3
42	ຂ່າວຊາວພຸດ 1	14,000	3
43	ຂ່າວຊາວພຸດ 2	14,000	3
44	ຂ່າວຊາວພຸດ 3	14,000	3
45	ຖິ່ງພາຍຂອງທ້າວຄຳ	8,000	3
46	ທ້າວຄຳກັບຊິ່ງອີ້ມ	8,000	3
47	ນິກນ້ອຍກັບກຸ່ງາບ	10,000	3
48	ປ່າຫຍ້າລຶກລັບ	15,000	3
49	ເລື່ອງສັ້ນແລະນິທານ ແຂວງ ຫຼວງນ້ຳທາ	25,000	3
50	ສັດໃນທະວີບອາຟຣິກກາ	20,000	3
51	ສັດໃນປະເທດອິດສະຕຣາລີ	20,000	3
52	ສັດໃນປະເທດລາວ	20,000	3
53	ວິທີແຕ້ມກາຕູນ	15,000	3
54	ຫຼິ້ນເກມ	20,000	3
55	ຄະນິດສາດພາມ່ວນ	14,000	3
56	ບົດເຝິກຫັດພັດທະນາແນວຄິດ	14,000	3
57	ແຕ້ມລາຍຂະຫຍາຍປັນຍາ	14,000	3

58	ຮຽນຄະນິດສາດ ສະໜາດທັ້ງພາສາ	14,000	3
59	ຢາດ້ຳ	8,000	3
60	ຂຸມຊັບ	8,000	3
61	ຮ້ຽ	8,000	3
62	ວັດທະນະທຳ ຮີດ 12 ຄອງ 14	15,000	3
63	ຖາມ-ຕອບຄວາມຮູ້ຮອບຕົວ	10,000	3
64	ຄຳກອນຜະຫຍາຍ່ອຍ	13,000	3
65	ຖ້ຳໃຫ້ເຖິງອະນຸບານກໍຊ້ຳໄປເສຍແລ້ວ	25,000	5
66	ຮອຍຍິ້ມທີ່ບໍ່ມີກົ້ນເຫຼົ້ຳ	17,000	3
67	ໝໍຢາເຊຍເຢ	9,000	3
68	ທ່ຳລີເຊັ້ງແລະ ເຄຍລ້ຽວ	9,000	3
69	ຂຸນລູນ	16,000	3
70	ນ	15,000	3
71	ໝົກເຖ່ຳ	8,000	3
72	ຮ່ຳງກ	20,000	3
73	ກ	20,000	3
74	ນິທ	15,000	3
75	ວັດທະນະທຳ	30,000	5
76	ກ	13,000	3
77	ຄູ່ມ	18,000	3
78	ທ	14,000	3
79	ທ	10,000	3
80	ຮວມເພ	11,000	3
81	ຮວມເພ 123 ເພ	9,000	3
82	ເກມຕ່ຳ	50,000	10
83	ເຮ	25,000	3
84	ພ	15,000	3
85	ກ	15,000	3
86	ສ ໄກ່	15,000	3
87	ແ	15,000	3
88	ເດ	15,000	3

89	ນິກກະສາກັບໝາຈອກ	15,000	3
90	ອີ່ງອ່າງກັບງົວ	15,000	3
91	ເສັ້ນທາງແຫ່ງຊີວິດ	78,000	10
92	ກອງພັນທີ 2 ເຫຼັ້ມ 1	8,000	3
93	ກອງພັນທີ 2 ເຫຼັ້ມ 2	8,000	3
94	ກອງພັນທີ 2 ເຫຼັ້ມ 3	8,000	3
95	ກອງພັນທີ 2 ເຫຼັ້ມ 4	8,000	3
96	ສອງເອື້ອຍນ້ອງ ເຫຼັ້ມ 1	8,000	3
97	ສອງເອື້ອຍນ້ອງ ເຫຼັ້ມ 2	13,000	3
98	ສອງເອື້ອຍນ້ອງ ເຫຼັ້ມ 3	10,000	3
99	ຄວາມຮູ້ຮອບຕົວ	11,000	3
100	ຄວາມຮູ້ຄູ່ຊີວິດ	13,000	3

ໃນປີ 2012 ມີສູນສົ່ງເສີມການອ່ານ ທີ່ທ່ານສາມາດ ນຳບັດຢືມ ທີ່ເຕັມແລ້ວ ມາແລກປ່ຽນກັບປຶ້ມແລະອຸປະກອນ ຕາມບັນຊີ ໃນຕາຕະລາງ ທີ 1 ໄດ້ ດັ່ງນີ້:

- ສູນ ແຂວງວຽງຈັນ ຕັ້ງຢູ່ພາຍໃນ ພະແນກສຶກສາທິການ ແລະ ກິລາ ແຂວງ ວຽງຈັນ, ຜູ່ຮັບຜິດຊອບ ອາຈານ ບຸນແທ່ນ ໃສສາຍດີ, ໂທລະ ສັບ: 020 9928 0646, 020 5541 8779.
- ສູນ ເມືອງຜາອຸດົມ ແຂວງບໍ່ແກ້ວ ຕັ້ງຢູ່ໃນສູນສຶກສານິເທດຂອງເມືອງ ພາຍໃນໂຮງຮຽນປະຖົມ ຜາອຸດົມ, ຜູ່ຮັບຜິດຊອບ ອາຈານ ວັນທອງ ສຸທິວົງ, ໂທລະສັບ: 020 5616 3737.
- ສູນ ເມືອງໂພນທອງ ແຂວງຈຳປາສັກ ຕັ້ງຢູ່ໃນສູນສຶກສານິເທດ ຂອງ ເມືອງ ພາຍໃນໂຮງຮຽນປະຖົມ ເກົ່າເກົ່ງ, ຜູ່ຮັບຜິດຊອບ ອາຈານ ຄຳຫວາ ອິນທະນາມ, ໂທລະສັບ: 020 5848 3285.
- ສູນນະຄອນຫຼວງທີ່ຫ້ອງການ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC) ບ້ານສະພັງໝໍ້ ເມືອງ ໄຊເຊດຖາ ນະຄອນຫຼວງວຽງຈັນ ໂທລະສັບ 021 416064.

ເອກະສານອ້າງອີງ

- ຫໍສະໝຸດພື້ນຖານ ສາຍສ້າງຄູອະນຸບານ ສາຍສ້າງຄູປະຖົມສາຍສ້າງຄູ ມັດທະຍົມ, ຮຽບຮຽງໂດຍ: ວິທະຍາໄລຄູ ແລະ ໂຮງຮຽນສ້າງຄູ, ຜູ້ກວດແກ້: ຫໍສະໝຸດແຫ່ງຊາດ, ກົມສ້າງຄູ ກະຊວງສຶກສາທິການ, ສະມາຄົມ ALC, ກົມສ້າງຄູ ກະຊວງສຶກສາທິການ, 2006.

- ຄູ່ມື ສູນວັດທະນະທຳເດັກ, ດວງເດືອນ ບຸນຍາວົງ, ອາຊາໂອະ ໂນກິຈິ, ສຸບັນ ຫຼວງລາດ, ມິ່ງຂວັນຄຳ ສີສະຫວັດ, ດາລາ ກັນລະຍາ, ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ, 2007.

- ຄູ່ມື ສອນພາສາລາວ ແບບມ່ວນໆ ບົດຮຽນແລະປະສົບການຈາກ ວິທະຍາໄລຄູ, ດວງເດືອນ ບຸນຍາວົງ ດາຣາວັນ ພອນແກ້ວ ແລະ ຄູອາຈານ ວິທະຍາໄລຄູ, ຈັດພິມໂດຍ: ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ຮ່ວມກັບກົມສ້າງຄູ ກະຊວງສຶກສາທິການ, 2011.

- ເດັກອ່ານໄມ່ອອກຂຽນໄມ່ໄດ້ ແກ້ງ່າຍນິດດຽວ, ໂດຍ ສິວການທ໌ ປທຸມ ສູຕ, ຜູ້ຈັດພິມ: ສູນຮຽນຮູ້ທົ່ງສັກອາສົມ, 2548, ISBN 974-93456-3-0

- ປະໂຫຍດ ຂອງ ວັນນະຄະດີ, ມະຫາສິລາ ວີຣະວົງສ໌, ຫໍສະໝຸດແຫ່ງຊາດ, 1996

- ຈຸລະສານ ເດັກນ້ອຍລາວ ສະບັບທີ 9, ປະຈຳເດືອນ ເມສາ - ກໍລະກົດ 2009, ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC), 2009

จัดพิมโดย:

ສຳນັກພິມ ດອກເກດ

ຮ່ວມກັບ

ISBN 978-9932-07-021-3

9 789932 070213 >

